# ແຈ້ງການເລື່ອງລະບຽບການປົກປ້ອງ ຄຸ້ມຄອງ

# ສິດທິຂອງພໍ່ແມ່ສຳລັບການສຶກສາ ພິເສດລະດັບ K-21


**ຫ້ອງການສົ່ງເສີມໂອກາດສຳລັບນັກຮຽນ**
**(Office of Enhancing Student Opportunities)**
**255 Capitol Street NE**
**Salem, Oregon 97310**

ເອກະສານສະບັບນີ້ສອດຄ່ອງກັບລະບຽບການປົກປ້ອງຄຸ້ມຄອງທີ່ເປັນຕົ້ນແບບຂອງກະຊວງສຶກສາທິການແຫ່ງສະຫະລັດອາເມລິກາ (U.S. Department of Education’s Model Procedural Safeguards) ແຈ້ງການ (ມິຖຸນາ 2009) ພ້ອມກັບຂໍ້ມູນພິເສດກ່ຽວກັບກົດລະບຽບຂອງລັດອໍຣິກອນເທົ່າທີ່ຈໍາເປັນ.

ເອກະສານສະບັບນີ້ແມ່ນຈັດຕຽມໄວ້ສໍາລັບປີການສຶກສາ 2020-2021. ຢ່າງໃດກໍຕາມ, ເອກະສານສະບັບນີ້ຈະມີຜົນໃຊ້ໄດ້ໄປຈົນກວ່າໂຮງຮຽນພາກລັດຈະໄດ້ຮັບແຈ້ງການແບບອື່ນ.

ຖ້າມີຂໍ້ສົງໄສ ຫຼື ຄໍາຄິດເຫັນກ່ຽວກັບເອກະສານສະບັບນີ້ ໃຫ້ສົ່ງໄປທີ່:


Office of Enhancing Student Opportunities

Oregon Department of Education

(ຫ້ອງການສົ່ງເສີມໂອກາດສໍາລັບນັກຮຽນ

ກະຊວງສຶກສາທິການ ລັດອໍຣິກອນ)

255 Capitol Street

Salem, OR 97310

(503) 947-5634


ເອກະສານສະບັບນີ້ມີໃຫ້ທາງອີເລັກໂຕຣນິກທີ່ເວັບໄຊຂອງລະບຽບການປົກປ້ອງຄຸ້ມຄອງ:

https://www.oregon.gov/ode/rules-and-policies/Pages/Procedural-Safeguards.aspx


ມັນແມ່ນນະໂຍບາຍຂອງຄະນະກໍາມະການດ້ານການສຶກສາ ແລະເປັນເລື່ອງສໍາຄັນອັນດັບຕົ້ນຂອງກະຊວງສຶກສາທິການລັດອໍຣິກອນທີ່ວ່າ ຈະບໍ່ມີການຈໍາແນກ ຫຼື ການກໍ່ກວນທີ່ມີພື້ນຖານມາຈາກເຊື້ອຊາດ, ສີຜິວ, ເພດ, ສະຖານະການແຕ່ງງານ, ສາສະໜາ, ຊາດກໍາເນີດ, ອາຍຸ ຫຼື ຄວາມພິການ ໃນໂຄງການດ້ານການສຶກສາ, ກິດຈະກໍາ, ຫຼື ການຈ້າງງານໃດໆ ກໍຕາມ. ບຸກຄົນທີ່ມີຄໍາຖາມກ່ຽວກັບໂອກາດທີ່ເທົ່າທຽມກັນ ແລະການບໍ່ຈໍາແນກບຸກຄົນ ຄວນຕິດຕໍ່ State Superintendent of Public Instruction ທີ່ Oregon Department of Education, 255 Capitol Street NE, Salem, Oregon 97310; ໂທ 503-947-5634; ແຟກຊ໌ 503-378-5156.


ຂໍ້ມູນໃນປຶ້ມຄູ່ມືນີ້ແມ່ນສໍາລັບ:

- ພໍ່ແມ່ຂອງເດັກ ດັ່ງທີ່ນິຍາມໄວ້ໃນ 34 CFR 300.30, ແມ່ນບຸກຄົນທີ່ມີ, ຫຼື ອາດມີ, ສິດໄດ້ຮັບການບໍລິການດ້ານການສຶກສາພິເສດ ພາຍໃຕ້ກົດໝາຍວ່າດ້ວຍການສຶກສາສໍາລັບບຸກຄົນພິການ (Individuals with Disabilities Education Act, IDEA).

- ນັກຮຽນທີ່ເປັນຜູ້ໃຫຍ່ ທີ່ມີຄວາມພິການ ຫຼື ຜູ້ເຍົາທີ່ມີອິດສະຫຼະ ສອດຄ່ອງຕາມ ORS 419B.550 ຫາ 419B.558 ແລະ OAR 581-015-2325.

## ຄວາມໝາຍຂອງຄໍາວ່າ "ພໍ່ແມ່"

IDEA ໃຫ້ສິດທິບາງຢ່າງແກ່ບັນດາພໍ່ແມ່ຂອງເດັກທີ່ພິການ ຫຼື ຂາດສະມັດຖພາບ. ພໍ່ແມ່ອາດແມ່ນ:

- ພໍ່ແມ່ໂດຍສາຍເລືອດ ຫຼື ພໍ່ແມ່ລ້ຽງຂອງເດັກ;
- ພໍ່ແມ່ອຸປະຖັມຂອງເດັກ;
- ຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍ (ທີ່ບໍ່ແມ່ນຕົວແທນຂອງຣັຖ) ຫຼື ບຸກຄົນອື່ນໆ ທີ່ຮັບຜິດຊອບຕາມກົດໝາຍສໍາລັບ ສະຫວັດດີພາບຂອງເດັກ;
- ບຸກຄົນທີ່ເຮັດໜ້າທີ່ໃນຖານະເປັນພໍ່ແມ່ ແທນພໍ່ແມ່ທາງສາຍເລືອດ ຫຼື ພໍ່ແມ່ລ້ຽງ (ລວມເຖິງ ພໍ່ເຖົ້າແມ່ເຖົ້າ, ພໍ່ແມ່ລ້ຽງ, ຫຼື ຍາດພີ່ນ້ອງອື່ນໆ) ຊຶ່ງເປັນຜູ້ທີ່ເດັກອາໄສຢູ່ນໍາ; ຫຼື
- ພໍ່ແມ່ທົດແທນ ຊຶ່ງແຕ່ງຕັ້ງໂດຍເຂດໂຮງຮຽນ ຫຼື ສານເຍົາວະຊົນ.

ຖ້າວ່າ ມີຫຼາຍກວ່າໜຶ່ງຄົນທີ່ມີສິດເຮັດໜ້າທີ່ໃນຖານະພໍ່ແມ່, ແລະພໍ່ແມ່ໂດຍສາຍເລືອດ ຫຼື ພໍ່ແມ່ລ້ຽງ ກໍພວມພະຍາຍາມທີ່ຈະເຮັດໜ້າທີ່ໃນຖານະພໍ່ແມ່, ໃນກໍລະນີນີ້ ພໍ່ແມ່ໂດຍສາຍເລືອດ ຫຼື ພໍ່ແມ່ລ້ຽງຈະຖືວ່າເປັນພໍ່ແມ່ພາຍໃຕ້ກົດໝາຍ IDEA. ຢ່າງໃດກໍຕາມ:

- ກົດລະບຽບນີ້ນໍາໃຊ້ບໍ່ໄດ້ ຖ້າວ່າ ພໍ່ແມ່ໂດຍສາຍເລືອດ ຫຼື ພໍ່ແມ່ລ້ຽງ ບໍ່ມີອໍານາດທາງກົດໝາຍ ທີ່ຈະຕັດສິນໃຈດ້ານການສຶກສາສໍາລັບເດັກ.
- ຖ້າວ່າ ມີຄໍາສັ່ງສານ ຫຼື ຄໍາພິພາກສາຂອງສານ ທີ່ລະບຸບຸກຄົນຜູ້ທີ່ສາມາດເຮັດໜ້າທີ່ເປັນພໍ່ແມ່ຂອງເດັກ ຫຼື ເຮັດການຕັດສິນໃຈດ້ານການສຶກສາໃນນາມຂອງເດັກ, ບຸກຄົນນັ້ນກໍຈະຖືວ່າເປັນ ພໍ່ແມ່ສໍາລັບຈຸດປະສົງດ້ານການສຶກສາພິເສດ.

🎓 ນັກຮຽນທີ່ມີອາຍຸຮອດ 18 ປີ, ນັກຮຽນທີ່ເປັນໄວໜຸ່ມທີ່ເໝາະສົມ ຊຶ່ງແຕ່ງງານ, ຫຼື ມີອິດສະຫຼະຕາມກົດໝາຍ, ແລະບໍ່ມີຜູ້ປົກຄອງທີ່ສານແຕ່ງຕັ້ງ, ແມ່ນສາມາດຮັບຜິດຊອບໃນການຕັດສິນໃຈກ່ຽວກັບການສຶກສາຂອງຕົນເອງໄດ້. ນັກຮຽນດັ່ງກ່າວຈະມີສິດທິດ້ານພໍ່ແມ່ທັງໝົດຕາມກົດໝາຍ IDEA ທີ່ລະບຸໄວ້ໃນເອກະສານຕີພິມສະບັບນີ້.

🎓 ສັນຍະລັກນີ້ຊີ້ບອກເຖິງ ເອກະສານທີ່ໃຊ້ການໄດ້ສໍາລັບນັກຮຽນທີ່ເປັນຜູ້ໃຫຍ່ ແລະ/ຫຼື ຜູ້ເຍົາທີ່ມີອິດສະຫຼະ.

🎓 ໝາຍເຫດວ່າ ສິດທິຕ່າງໆ ໃນປື້ມຄູ່ມືນີ້ ທີ່ນໍາໃຊ້ກັບເດັກ ຈະຍັງນໍາໃຊ້ໄດ້ກັບນັກຮຽນທີ່ເປັນຜູ້ໃຫຍ່ດ້ວຍ ຊຶ່ງເປັນຜູ້ທີ່ມີສິດເໝາະສົມພາຍໃຕ້ກົດໝາຍ IDEA.

ບໍ່ແມ່ນວ່ານັກຮຽນພິການ ຫຼື ຂາດສະມັດຖພາບທຸກຄົນຈະມີສິດໄດ້ຮັບການບໍລິການສຶກສາພິເສດພາຍໃຕ້ ກົດໝາຍ IDEA. ນັກຮຽນບາງຄົນອາດມີຄວາມພິການທີ່ສົ່ງຜົນກະທົບຕໍ່ກິດຈະກໍາສໍາຄັນໃນຊີວິດ ແຕ່ວ່າ ເຂົາເຈົ້າບໍ່ມີເງື່ອນໄຂກົງຕາມຂໍ້ກໍານົດການມີຄຸນສົມບັດເໝາະສົມ ສໍາລັບໜຶ່ງໃນປະເພດຂອງຄວາມພິການ ພາຍໃຕ້ກົດໝາຍ IDEA. ເດັກເຫຼົ່ານີ້ອາດໄດ້ຮັບການປົກປ້ອງຄຸ້ມຄອງໂດຍກົດໝາຍອື່ນໆ ຂອງຣັຖບານກາງ, ເຊັ່ນ ມາດຕາ 504 ຂອງກົດໝາຍວ່າດ້ວຍການຟື້ນຟູຄວາມພິການ (Rehabilitation Act) ປີ 1973 ຫຼື ກົດໝາຍວ່າດ້ວຍຊາວອາເມລິກັນທີ່ພິການ (American with Disabilities Act, ADA). ສິດທິຂອງເດັກເຫຼົ່ານີ້ ແລະພໍ່ແມ່ຂອງເຂົາເຈົ້າແມ່ນຄ້າຍຄືກັນ, ແຕ່ວ່າບໍ່ແມ່ນແບບດຽວກັນ, ດັ່ງທີ່ລະບຽບການປົກປ້ອງຄຸ້ມຄອງ ໄດ້ອະທິບາຍໄວ້ໃນປື້ມຄູ່ມືນີ້. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບກົດໝາຍເຫຼົ່ານີ້, ຈົ່ງຕິດຕໍ່ຜູ້ປະສານງານດ້ານມາດຕາ 504 ຂອງເຂດໂຮງຮຽນຂອງທ່ານ ຫຼື ເບິ່ງຂໍ້ມູນທີ່ ເວັບໄຊດ້ານສິດທິພົນລະເມືອງ (ODE Civil Rights) .

**ສາລະບານ**


ຄວາມໝາຍຂອງຄຳວ່າ "ພໍ່ແມ່" ..... 2
ຂໍ້ມູນທົ່ວໄປ ..... 5
ໜັງສືແຈ້ງການລ່ວງໜ້າ ..... 5
ພາສາແມ່ ..... 6
ຈົດໝາຍທາງອີເລັກໂຕຣນິກ ..... 6
ຄວາມຍິນຍອມ – ຄວາມໝາຍ ..... 7
ຄວາມຍິນຍອມ ..... 7
ການປະເມີນດ້ານການສຶກສາຢ່າງເປັນອິດສະຫຼະ (IEE) ..... 10
ຄວາມລັບຂອງຂໍ້ມູນ ..... 12
ການຮັກສາຄວາມລັບ ..... 12
ຄວາມໝາຍ ..... 12
ສາມາດລະບຸເຖິງຕົວບຸກຄົນໄດ້ ..... 12
ແຈ້ງການສຳລັບພໍ່ແມ່ ..... 12
ສິດທິໃນການເຂົ້າເຖິງ ..... 13
ການເຂົ້າເຖິງບັນທຶກ ..... 14
ບັນທຶກທີ່ມີຂໍ້ມູນຂອງເດັກຫຼາຍກວ່າໜຶ່ງຄົນ ..... 14
ລາຍການປະເພດ ແລະ ສະຖານທີ່ເກັບຂໍ້ມູນ ..... 14
ຄ່າທຳນຽມ ..... 14
ການຮ້ອງຂໍໃຫ້ແກ້ໄຂບັນທຶກ ..... 14
ໂອກາດ ແລະລະບຽບການສຳລັບການພິຈາລະນາຄະດີ ກ່ຽວກັບບັນທຶກທາງການສຶກສາ ..... 15
ຜົນຂອງການພິຈາລະນາຄະດີກ່ຽວກັບບັນທຶກການສຶກສາ ..... 15
ຄວາມຍິນຍອມສຳລັບການເປີດເຜີຍຂໍ້ມູນທີ່ສາມາດລະບຸເຖິງຕົວບຸກຄົນໄດ້ ..... 15
ການປົກປ້ອງຄຸ້ມຄອງ ..... 16
ການທຳລາຍຂໍ້ມູນ ..... 16
ການແກ້ໄຂບັນຫາຂໍ້ຂັດແຍ້ງ ..... 16
ການໄກ່ເກັ່ຍ ..... 16
ຄວາມແຕກຕ່າງລະຫວ່າງ ການພິຈາລະນາຄະດີຕາມຫຼັກນິຕິທັມ ແລະ ລະບຽບການຮ້ອງທຸກຕໍ່ຣັຖ ..... 17
ລະບຽບການຮ້ອງທຸກຕໍ່ຣັຖ ..... 18
ການຍື່ນຄຳຮ້ອງທຸກຕໍ່ຣັຖ ..... 20
ການຍື່ນຄຳຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມ ..... 21
ຮູບແບບພອມ ..... 23
ການກຳນົດບ່ອນຮຽນຂອງເດັກໃນລະຫວ່າງລໍຖ້າການພິຈາລະນາຄະດີຕາມຫຼັກນິຕິທັມ ..... 23
ຂະບວນການແກ້ໄຂບັນຫາ ..... 24
ການພິຈາລະນາຄະດີຕາມຫຼັກນິຕິທັມແລະເປັນກາງ ..... 26
ສິດທິດ້ານການພິຈາລະນາຄະດີ ..... 27
ຄຳຕັດສິນຂອງການພິຈາລະນາຄະດີ ..... 27
ກຳນົດເວລາ ແລະ ຄວາມສະດວກຂອງການພິຈາລະນາຄະດີ ..... 28
ການຟ້ອງຮ້ອງທາງແພ່ງ , ລວມເຖິງ ກຳນົດຊ່ວງເວລາສຳລັບ ການຍື່ນເລື່ອງ ..... 29
ຄ່າທຳນຽມຂອງທະນາຍຄວາມ ..... 30
ລະບຽບການເມື່ອດຳເນີນການທາງວິໄນຕໍ່ເດັກພິການ ..... 32

ອຳນາດຂອງຝ່າຍບຸກຄົນຂອງໂຮງຮຽນ ........................................................................................ 32
ການບໍລິການຕ່າງໆ........................................................................................................... 32
ການພິຈາລະນາຕັດສິນດ້ານການສະແດງອອກ ........................................................................ 33
ການປ່ຽນບ່ອນຮຽນ ເນື່ອງຈາກການຖອດຖອນທາງວິໄນ ....................................................... 35
ການພິຈາລະນາຕັດສິນສະຖານທີ່ຮຽນ ................................................................................. 35
ການອຸທອນ ....................................................................................................................... 35
ການກຳນົດບ່ອນຮຽນໃນລະຫວ່າງການອຸທອນ ...................................................................... 36
ການປົກປ້ອງຄຸ້ມຄອງສຳລັບເດັກທີ່ຍັງບໍ່ມີຕື່ອນໄຂໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ.........................................36
ການສົ່ງຕໍ່ ແລະການດຳເນີນການໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະເຈົ້າໜ້າທີ່ພິຈາລະນາຄະດີ ........................................... ...38
ຂໍ້ກຳນົດສຳລັບການກຳນົດບ່ອນຮຽນຝ່າຍດຽວໂດຍພໍ່ແມ່ຂອງເດັກໃນໂຮງຮຽນເອກະຊົນພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ..........................39

## ຂໍ້ມູນທົ່ວໄປ

ກົດໝາຍວ່າດ້ວຍການສຶກສາສໍາລັບບຸກຄົນພິການ (Individual with Disabilities Education Act, IDEA), ຊຶ່ງເປັນກົດໝາຍຂອງຣັຖບານກາງກ່ຽວກັບການສຶກສາຂອງນັກຮຽນທີ່ພິການ ຫຼືຂາດສະມັຖພາບ, ກໍານົດໃຫ້ບັນດາໂຮງຮຽນຕ່າງໆ ຕ້ອງຈັດຫາແຈ້ງການໃຫ້ແກ່ບັນດາພໍ່ແມ່ຂອງເດັກພິການ ຫຼືຂາດສະມັຖພາບ ຊຶ່ງມີເນື້ອໃນອະທິບາຍຢ່າງລະອຽດກ່ຽວກັບລະບຽບການປົກປ້ອງຄຸ້ມຄອງທີ່ມີໃຫ້ພາຍໃຕ້ກົດໝາຍ IDEA ແລະກົດຂໍ້ບັງຄັບຂອງກະຊວງສຶກສາທິການແຫ່ງສະຫະຣັຖອາເມລິກາ ສໍາເນົາຂອງແຈ້ງການສະບັບນີ້ ຕ້ອງໄດ້ເອົາໃຫ້ແກ່ບັນດາພໍ່ແມ່ ຢ່າງໜ້ອຍປີການສຶກສາລະຄັ້ງ, ແລະຕ້ອງໃຫ້ສໍາເນົາໜຶ່ງສະບັບແກ່ບັນດາພໍ່ແມ່: (1) ເມື່ອມີການສົ່ງຕໍ່ຄັ້ງທໍາອິດ ຫຼື ເມື່ອພໍ່ແມ່ຮ້ອງຂໍເອົາການປະເມີນຜົນ; (2) ເມື່ອໄດ້ຮັບຄໍາຮ້ອງທຸກດ້ານການສຶກສາພິເສດຕໍ່ຣັຖຄັ້ງທໍາອິດ ພາຍໃຕ້ 34 CFR 300.151 ຮອດ 300.153 (OAR 581-015-2030) ແລະເມື່ອໄດ້ຮັບຄໍາຮ້ອງຂໍໃຫ້ມີການພິຈາລະນາຄະດີຕາມຫຼັກນິຕິທັມ (Due process hearing) ຄັ້ງທໍາອິດ ພາຍໃຕ້ 300.507 (OAR 581-015-2345) ໃນປີການສຶກສາໜຶ່ງ; (3) ເມື່ອມີການຕັດສິນລົງໂທດຕໍ່ລູກຂອງທ່ານຊຶ່ງກໍ່ໃຫ້ເກີດການປ່ຽນບ່ອນຮຽນ; ແລະ (4) ເມື່ອທ່ານຮ້ອງຂໍ.

ສິດທິທັງໝົດໃນເອກະສານສະບັບນີ້ ກ່ຽວພັນກັບພາກ B ຂອງ IDEA. ພາກ B ລວມມີ ເດັກອາຍຸແຕ່ສາມ (3) ປີ ຫາ ຊາວເອັດ (21) ປີ. ODE ຍັງຕີພິມແຈ້ງການເລື່ອງລະບຽບການປົກປ້ອງຄຸ້ມຄອງ ສໍາລັບເດັກອາຍຸແຕ່ເກີດ – ຫ້າ (5) ປີ ໃນໂຄງການການກະຕຸ້ນການພັດທະນາຂອງເດັກກ່ອນໄວຮຽນ/ການສຶກສາພິເສດສໍາລັບເດັກກ່ອນໄວຮຽນ (Early Intervention/Early Childhood Special Education, EI/ECSE).

ແຈ້ງການເລື່ອງລະບຽບການປົກປ້ອງຄຸ້ມຄອງສະບັບນີ້ ຍັງນໍາໃຊ້ກັບບັນດາພໍ່ແມ່ຜູ້ທີ່ລູກພິການຂອງເຂົາເຈົ້າເຂົ້າຮຽນທີ່ໂຮງຮຽນໃດໆ ໃນກໍາກັບຂອງຣັຖອໍຣິກອນ. ພາຍໃຕ້ກົດໝາຍຂອງຣັຖອໍຣິກອນ, ເຂດໂຮງຮຽນບ່ອນທີ່ໂຮງຮຽນໃນກໍາກັບຂອງຣັຖຕັ້ງຢູ່ນັ້ນ ມີໜ້າທີ່ຮັບຜິດຊອບສໍາລັບການສຶກສາພິເສດ.

## ໜັງສືແຈ້ງການລ່ວງໜ້າ

### ແຈ້ງການ

ເຂດໂຮງຮຽນຂອງທ່ານຕ້ອງໃຫ້ໜັງສືແຈ້ງການແກ່ທ່ານ (ໃຫ້ຂໍ້ມູນທີ່ແນ່ນອນເປັນລາຍລັກອັກສອນ), ພາຍໃນເວລາທີ່ສົມເຫດສົມຜົນກ່ອນທີ່ຈະ:

1. ສະເໜີການລິເລີ່ມ ຫຼື ປ່ຽນເອກະລັກປະຈໍາຕົວ, ການປະເມີນຜົນ, ຫຼື ການຈັດວາງດ້ານການສຶກສາສໍາລັບລູກຂອງທ່ານ, ຫຼື ການຈັດຫາການສຶກສາຂອງຣັຖທີ່ເໝາະສົມແລະບໍ່ເສັຽຄ່າ (free appropriate public education, (FAPE) ໃຫ້ແກ່ລູກຂອງທ່ານ; **<u>ຫຼື</u>**
2. ປະຕິເສດທີ່ຈະລິເລີ່ມ ຫຼື ປ່ຽນເອກະລັກປະຈໍາຕົວ, ການປະເມີນຜົນ, ຫຼື ການຈັດວາງດ້ານການສຶກສາສໍາລັບລູກຂອງທ່ານ, ຫຼື ການຈັດຫາ FAPE ໃຫ້ແກ່ລູກຂອງທ່ານ.

### ເນື້ອໃນຂອງແຈ້ງການ

ໜັງສືແຈ້ງການຕ້ອງ:

1. ອະທິບາຍການປະຕິບັດທີ່ເຂດໂຮງຮຽນສະເໜີໃຫ້ ຫຼື ປະຕິເສດທີ່ຈະດໍາເນີນການ;
2. ອະທິບາຍວ່າ ເປັນຫຍັງເຂດໂຮງຮຽນຂອງທ່ານ ຈຶ່ງສະເໜີ ຫຼື ປະຕິເສດທີ່ຈະດໍາເນີນການ;
3. ບັນລະຍາຍຂັ້ນຕອນການປະເມີນຜົນແຕ່ລະອັນ, ການຕີລາຄາ, ການບັນທຶກ, ຫຼື ລາຍງານທີ່ເຂດໂຮງຮຽນຂອງທ່ານໄດ້ນໍາໃຊ້ໃນການຕັດສິນໃຈທີ່ຈະສະເໜີ ຫຼື ປະຕິເສດການດໍາເນີນການ;
4. ລວມມີຄໍາຖະແຫຼງທີ່ບອກວ່າ ທ່ານມີການປົກປ້ອງຄຸ້ມຄອງພາຍໃຕ້ຂໍ້ກໍານົດຂອງລະບຽບການປົກປ້ອງຄຸ້ມຄອງໃນພາກ B ຂອງ IDEA;
5. ບອກທ່ານກ່ຽວກັບວິທີການທີ່ທ່ານສາມາດຂໍເອົາສໍາເນົາຂອງແຈ້ງການລະບຽບການປົກປ້ອງຄຸ້ມ

ຄອງສະບັບນີ້ ຖ້າວ່າ ການດໍາເນີນການທີ່ເຂດໂຮງຮຽນຂອງທ່ານກໍາລັງສະເໜີ ຫຼື ປະຕິເສດນັ້ນ ບໍ່ແມ່ນການສິ່ງຕໍ່ທໍາອິດສໍາລັບການປະເມີນຜົນ; ລວມມີແຫຼ່ງຊ່ວຍເຫຼືອຕ່າງໆ ເພື່ອໃຫ້ທ່ານຕິດຕໍ່ຂໍຄວາມຊ່ວຍເຫຼືອເພື່ອໃຫ້ເຂົ້າໃຈກົດໝາຍ IDEA;

6. ອະທິບາຍກ່ຽວກັບທາງເລືອກອື່ນໆ ທີ່ທີມໂຄງການການສຶກສາສະເພາະບຸກຄົນ (individualized education program, IEP) ໄດ້ພິຈາລະນາ ແລະເຫດຜົນວ່າ ເປັນຫຍັງທາງເລືອກເຫຼົ່ານັ້ນຈຶ່ງໄດ້ຖືກປະຕິເສດ; **ແລະ**
7. ໃຫ້ລາຍລະອຽດກ່ຽວກັບປັດໃຈອື່ນໆ ທີ່ກ່ຽວພັນກັບຂໍ້ສະເໜີຂອງເຂດໂຮງຮຽນ ຫຼື ປະຕິເສດ.

## ແຈ້ງການໃນພາສາທີ່ເຂົ້າໃຈໄດ້

ແຈ້ງການຕ້ອງ:

1. ຂຽນໃນພາສາທີ່ສາມາດເຂົ້າໃຈໄດ້ສໍາລັບປະຊາຊົນທົ່ວໄປ; **ແລະ**
2. ສະໜອງໃຫ້ໃນພາສາແມ່ຂອງທ່ານ ຫຼື ໃນຮູບແບບການສື່ສານອື່ນໆ ທີ່ທ່ານນໍາໃຊ້, ເວັ້ນແຕ່ວ່າ ມັນຈະແຈ້ງວ່າ ບໍ່ສາມາດເຮັດໃຫ້ໄດ້.

ຖ້າວ່າ ພາສາແມ່ຂອງທ່ານ ຫຼື ວິທີການສື່ສານຮູບແບບອື່ນໆ ຂອງທ່ານບໍ່ແມ່ນພາສາຂຽນ, ເຂດໂຮງຮຽນຂອງທ່ານຕ້ອງຮັບປະກັນວ່າ:

1. ແຈ້ງການຕ້ອງໄດ້ຖືກແປພາສາໃຫ້ທ່ານໂດຍທາງວາຈາ ຜ່ານວິທີການອື່ນໆ ໃນພາສາແມ່ຂອງທ່ານ ຫຼື ຮູບແບບການສື່ສານອື່ນໆ;
2. ທ່ານເຂົ້າໃຈເນື້ອໃນຂອງແຈ້ງການ; **ແລະ**
3. ມີຫຼັກຖານເປັນລາຍລັກອັກສອນວ່າ ຂໍ້ 1 ແລະ 2 ຂ້າງເທິງນີ້ໄດ້ບັນລຸຜົນສໍາເລັດແລ້ວ.

## ພາສາແມ່

*ພາສາແມ່,* ເມື່ອໃຊ້ກັບບຸກຄົນທີ່ມີຄວາມສາມາດທາງພາສາອັງກິດຢ່າງຈໍາກັດ, ກໍໝາຍເຖິງດັ່ງຕໍ່ໄປນີ້:

1. ພາສາທີ່ນໍາໃຊ້ໂດຍບຸກຄົນນັ້ນຕາມປົກກະຕິ, ຫຼື, ໃນກໍລະນີຂອງເດັກ, ກໍແມ່ນພາສາທີ່ນໍາໃຊ້ໂດຍພໍ່ແມ່ຂອງເດັກຕາມປົກກະຕິ;
2. ໃນການຕິດຕໍ່ກັບເດັກໃນທຸກວິທີການ (ລວມເຖິງ ການປະເມີນຜົນເດັກ), ທໍາມະດາແລ້ວ ກໍແມ່ນພາສາທີ່ເດັກໃຊ້ຢູ່ເຮືອນ ຫຼື ໃນສະພາບແວດລ້ອມຂອງການຮຽນຮູ້.

ສໍາລັບບຸກຄົນທີ່ຫູໜວກ ຫຼື ຕາບອດ, ຫຼື ສໍາລັບບຸກຄົນທີ່ບໍ່ມີພາສາຂຽນ, ວິທີການສື່ສານກໍແມ່ນ ສິ່ງທີ່ບຸກຄົນນັ້ນນໍາໃຊ້ຕາມປົກກະຕິ (ເຊັ່ນ ພາສາໃບ້, ອັກສອນເບຣລ, ຫຼື ການສື່ສານດ້ວຍປາກເປົ່າ).

## ຈົດໝາຍອີເລັກໂຕຣນິກ

ຖ້າວ່າ ເຂດໂຮງຮຽນຂອງທ່ານສະເໜີທາງເລືອກໃນການຮັບເອກະສານໂດຍທາງອີເມວໃຫ້ແກ່ພໍ່ແມ່, ທ່ານກໍອາດເລືອກຮັບສິ່ງຕໍ່ໄປນີ້ໄດ້ທາງອີເມວ:

1. ໜັງສືແຈ້ງການລ່ວງໜ້າ;
2. ແຈ້ງການເລື່ອງລະບຽບການປົກປ້ອງຄຸ້ມຄອງສະບັບນີ້; **ແລະ**
3. ແຈ້ງການຕ່າງໆ ທີ່ກ່ຽວຂ້ອງກັບການຮ້ອງທຸກຕາມຫຼັກນິຕິທໍາ.

## ຄວາມໝາຍ

*ຄວາມຍິນຍອມ* ໝາຍເຖິງ:

1. ທ່ານໄດ້ຮັບຮູ້ຂໍ້ມູນທັງໝົດຢ່າງລະອຽດໃນພາສາແມ່ຂອງທ່ານ ຫຼື ໃນວິທີການສື່ສານອື່ນໆ (ເຊັ່ນ ພາສາໃບ້, ອັກສອນເບຣລ, ຫຼື ທາງປາກເປົ່າ) ກ່ຽວກັບການດໍາເນີນການທີ່ທ່ານກໍາລັງຈະໃຫ້ຄວາມ ຍິນຍອມ.
2. ທ່ານເຂົ້າໃຈ ແລະຍິນຍອມຢ່າງເປັນລາຍລັກອັກສອນຕໍ່ການດໍາເນີນການນັ້ນ, ແລະຄວາມຍິນຍອມມີລາຍລະອຽດກ່ຽວກັບການດໍາເນີນການນັ້ນ ແລະລາຍການບັນທຶກຕ່າງໆ (ຖ້າວ່າມີ) ທີ່ຈະຖືກເປີດເຜີຍ ແລະລາຍຊື່ຜູ້ທີ່ຈະໄດ້ຮັບບັນທຶກນັ້ນ; **ແລະ**
3. ທ່ານເຂົ້າໃຈວ່າ ການຍິນຍອມນັ້ນແມ່ນຄວາມສະໝັກໃຈຂອງທ່ານ ແລະທ່ານສາມາດຖອນຄວາມຍິນຍອມຂອງທ່ານຍາມໃດກໍໄດ້.

***ການຖອນຄວາມຍິນຍອມ*** - ຖ້າວ່າ ທ່ານຕ້ອງການທີ່ຈະຖອນ (ຍົກເລີກ) ຄວາມຍິນຍອມຂອງທ່ານ ຫຼັງຈາກລູກຂອງທ່ານໄດ້ເລີ່ມຮັບເອົາການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ, ທ່ານຕ້ອງຖອນຄວາມຍິນຍອມຢ່າງເປັນລາຍລັກອັກສອນ. ການຖອນຄວາມຍິນຍອມຂອງທ່ານບໍ່ແມ່ນການລຶບລ້າງ (ແກ້) ການດໍາເນີນການທີ່ໄດ້ເກີດຂຶ້ນແລ້ວຫຼັງຈາກທ່ານໄດ້ໃຫ້ຄວາມຍິນຍອມ ແຕ່ວ່າມັນແມ່ນກ່ອນທ່ານຖອນຄວາມຍິນຍອມ. ນອກຈາກນັ້ນ, ເຂດໂຮງຮຽນບໍ່ຈໍາເປັນຕ້ອງແກ້ໄຂ (ປ່ຽນແປງ) ບັນທຶກການສຶກສາຂອງລູກຂອງທ່ານ ເພື່ອລຶບຄໍາອ້າງອີງໃດໆ ທີ່ວ່າ ລູກຂອງທ່ານໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ຫຼັງຈາກທ່ານຖອນຄວາມ ຍິນຍອມ.



🎓 ໝາຍເຫດ ຂໍ້ກໍານົດຄວາມຍິນຍອມທີ່ລະບຸໄວ້ລຸ່ມນີ້ ຍັງຈະນໍາໃຊ້ໄດ້ກັບນັກຮຽນທີ່ເປັນຜູ້ໃຫຍ່ ແລະຜູ້ເຍົາທີ່ມີອິດສະຫຼະ.

## ຄວາມຍິນຍອມສໍາລັບການປະເມີນຜົນເບື້ອງຕົ້ນ

ເຂດໂຮງຮຽນຂອງທ່ານບໍ່ສາມາດດໍາເນີນການປະເມີນຜົນເບື້ອງຕົ້ນສໍາລັບລູກຂອງທ່ານ ເພື່ອຕັດສິນວ່າ ລູກຂອງທ່ານມີສິດເໝາະສົມຫຼືບໍ່ພາຍໃຕ້ພາກ B ຂອງ IDEA ທີ່ຈະຮັບເອົາການສຶກສາພິເສດແລະການບໍລິການທີ່ກ່ຽວຂ້ອງ ໂດຍບໍ່ຈັດຫາແຈ້ງການລ່ວງໜ້າໃຫ້ທ່ານກ່ອນ ຊຶ່ງມີລາຍລະອຽດກ່ຽວກັບການດໍາເນີນການທີ່ສະເໜີ ແລະການຂໍເອົາຄວາມຍິນຍອມຂອງທ່ານກ່ອນ ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ໜັງສືແຈ້ງການລ່ວງໜ້າ*** *ແລະ* ***ຄວາມຍິນຍອມ.***

ເຂດໂຮງຮຽນຂອງທ່ານຕ້ອງພະຍາຍາມຢ່າງສົມເຫດຜົນທີ່ຈະຂໍເອົາຄວາມຍິນຍອມຂອງທ່ານສໍາລັບການປະເມີນຜົນເບື້ອງຕົ້ນ ເພື່ອຕັດສິນວ່າ ລູກຂອງທ່ານແມ່ນເດັກທີ່ມີຄວາມພິການ ຫຼືຂາດສະມັດຖະພາບຫຼືບໍ່.

ຄວາມຍິນຍອມຂອງທ່ານສໍາລັບການປະເມີນຜົນເບື້ອງຕົ້ນ ບໍ່ໄດ້ໝາຍຄວາມວ່າ ທ່ານໄດ້ໃຫ້ຄວາມຍິນຍອມແກ່ເຂດໂຮງຮຽນໃນການເລີ່ມໃຫ້ການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ແກ່ລູກຂອງທ່ານ.

ເຂດໂຮງຮຽນບໍ່ສາມາດນໍາໃຊ້ການປະຕິເສດຄວາມຍິນຍອມຂອງທ່ານຕໍ່ການບໍລິການໃດໜຶ່ງ ຫຼື ກິດຈະກໍາໃດໜຶ່ງ ທີ່ກ່ຽວພັນກັບການປະເມີນຜົນເບື້ອງຕົ້ນ ເປັນພື້ນຖານໃນການປະຕິເສດທ່ານ ຫຼື ລູກຂອງທ່ານສໍາລັບການບໍລິການອື່ນໆ, ລວມເຖິງ ຜົນປະໂຫຍດ ຫຼື ກິດຈະກໍາ, ເວັ້ນແຕ່ວ່າ ຂໍ້ກໍານົດອື່ນຂອງພາກ B ກໍານົດໃຫ້ເຂດໂຮງຮຽນເຮັດແນວນັ້ນໄດ້.

ຖ້າວ່າ ລູກຂອງທ່ານລົງທະບຽນຮຽນໃນໂຮງຮຽນພາກຣັຖ ຫຼື ທ່ານກໍາລັງຊອກຫາໂຮງຮຽນພາກຣັຖໃຫ້ແກ່ລູກຂອງທ່ານ ແລະທ່ານໄດ້ປະຕິເສດການໃຫ້ຄວາມຍິນຍອມ ຫຼື ບໍ່ໄດ້ຕອບຮັບຄໍາຮ້ອງຂໍເອົາຄໍາຍິນຍອມສໍາລັບການປະເມີນຜົນເບື້ອງຕົ້ນ, ເຂດໂຮງຮຽນຂອງລູກຂອງທ່ານສາມາດ, ແຕ່ວ່າບໍ່ຈໍາເປັນ, ຊອກຫາການດໍາເນີນ

ການປະເມີນຜົນເບື້ອງຕົ້ນສຳລັບລູກຂອງທ່ານໄດ້ ໂດຍນຳໃຊ້ຂັ້ນຕອນການໄກ່ເກັ່ຍ ຫຼື ການຮ້ອງທຸກຜ່ານການພິຈາລະນາຄະດີຕາມຫຼັກນິຕິທັມຂອງ IDEA, ລວມເຖິງ ການປະຊຸມເພື່ອແກ້ໄຂບັນຫາ, ແລະການພິຈາລະນາຄະດີທີ່ເປັນກາງ. ເຂດໂຮງຮຽນຂອງທ່ານຈະບໍ່ລະເມີດຂໍ້ບັງຄັບຂອງຕົນເພື່ອຍົກຍ້າຍ, ລະບຸ ແລະປະເມີນຜົນລູກຂອງທ່ານ ຖ້າວ່າ ເຂົາເຈົ້າບໍ່ສະແຫວງຫາການປະເມີນຜົນລູກຂອງທ່ານໃນສະພາບການເຫຼົ່ານີ້.

**ກົດລະບຽບພິເສດສຳລັບການປະເມີນຜົນເບື້ອງຕົ້ນສຳລັບເດັກທີ່ຢູ່ພາຍໃຕ້ການດູແລຂອງຣັຖ**

ຖ້າວ່າ ເດັກຢູ່ໃນການດູແລຂອງຣັຖ ແລະບໍ່ໄດ້ອາໄສຢູ່ກັບພໍ່ແມ່, ເຂດໂຮງຮຽນບໍ່ຈຳເປັນຕ້ອງໄດ້ຮັບຄຳຍິນຍອມຈາກພໍ່ແມ່ສຳລັບການປະເມີນຜົນເບື້ອງຕົ້ນ ໃນການພິຈາລະນາຕັດສິນວ່າ ເດັກແມ່ນຜູ້ພິການຫຼືບໍ່ ຖ້າວ່າ:

1. ໄດ້ມີຄວາມພະຍາຍາມຢ່າງສົມເຫດຜົນແລ້ວ, ເຂດໂຮງຮຽນກໍບໍ່ສາມາດຊອກຫາພໍ່ແມ່ຂອງເດັກໄດ້;
2. ສິດທິຂອງພໍ່ແມ່ໄດ້ຖືກຍຸດຕິລົງ ໂດຍສອດຄ່ອງກັບກົດໝາຍຂອງຣັຖ; **<u>ຫຼື</u>**
3. ຜູ້ພິພາກສາໄດ້ມອບໝາຍສິດທິການຕັດສິນໃຈດ້ານການສຶກສາ ແລະໄດ້ຍິນຍອມສຳລັບການປະເມີນຜົນເບື້ອງຕົ້ນໃຫ້ແກ່ບຸກຄົນໃດໜຶ່ງທີ່ບໍ່ແມ່ນພໍ່ແມ່.

*ເດັກທີ່ຢູ່ໃນການດູແລຂອງຣັຖ*, ຕາມທີ່ນຳໃຊ້ໃນກົດໝາຍ IDEA, ໝາຍເຖິງ ເດັກຜູ້ທີ່ຣັຖພິຈາລະນາຈັດຫາບ່ອນຢູ່ອາໄສໃຫ້, ແມ່ນ:

1. ເດັກໃນການອຸປະຖັມ;
2. ພິຈາລະນາວ່າເປັນເດັກໃນການດູແລຂອງຣັຖ ພາຍໃຕ້ກົດໝາຍຂອງຣັຖ; **<u>ຫຼື</u>**
3. ຢູ່ໃນການດູແລຂອງອົງການສະຫວັດດີການເດັກຂອງຣັຖ.

ແຕ່ວ່າມີຂໍ້ຍົກເວັ້ນຂໍ້ໜຶ່ງ ຊຶ່ງທ່ານຄວນຮູ້. *ເດັກໃນການດູແລຂອງຣັຖ* ບໍ່ລວມ ເດັກໃນອຸປະຖັມທີ່ມີພໍ່ແມ່ລ້ຽງທີ່ມີເງື່ອນໄຂກົງຕາມຄຳນິຍາມຂອງຄຳວ່າ *ພໍ່ແມ່* ຕາມທີ່ນຳໃຊ້ໃນກົດໝາຍ IDEA.

ໃນຣັຖອໍຣິກອນ, ເດັກໃນການດູແລຂອງຣັຖ ແມ່ນເດັກທີ່ຢູ່ໃນການປົກຄອງດູແລ, ຫຼື ພາຍໃຕ້ການຄວບຄຸມດູແລ ຊົ່ວຄາວ ຫຼື ຖາວອນ ຂອງກະຊວງບໍລິການມະນຸດ ຫຼື ອົງການເຍົາວະຊົນຣັຖອໍຣິກອນ ຜ່ານການຕັດສິນຂອງສານເຍົາວະຊົນ.

**ຄວາມຍິນຍອມຂອງພໍ່ແມ່ສຳລັບການບໍລິການຕ່າງໆ**

ເຂດໂຮງຮຽນຂອງທ່ານຕ້ອງໄດ້ຮັບຄຳຍິນຍອມຂອງທ່ານກ່ອນໃຫ້ການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ແກ່ລູກຂອງທ່ານໃນຄັ້ງທຳອິດ.

ເຂດໂຮງຮຽນຕ້ອງພະຍາຍາມຢ່າງສົມເຫດຜົນໃນການຂໍເອົາຄຳຍິນຍອມຈາກທ່ານ ກ່ອນທີ່ຈະໃຫ້ການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ແກ່ລູກຂອງທ່ານໃນຄັ້ງທຳອິດ.

ຖ້າວ່າ ທ່ານບໍ່ຕອບຮັບຕໍ່ຄຳຮ້ອງຂໍເອົາຄຳຍິນຍອມຈາກທ່ານເພື່ອໃຫ້ລູກຂອງທ່ານໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງສຳລັບຄັ້ງທຳອິດ, ຫຼື ຖ້າວ່າ ທ່ານປະຕິເສດທີ່ຈະໃຫ້ຄຳຍິນຍອມດັ່ງກ່າວ ຫຼື ໃນ ເວລາຕໍ່ມາ ຖອນ (ຍົກເລີກ) ຄວາມຍິນຍອມຂອງທ່ານຢ່າງເປັນລາຍລັກອັກສອນ, ເຂດໂຮງຮຽນບໍ່ສາມາດນຳໃຊ້ລະບຽບການປົກປ້ອງຄຸ້ມຄອງ (ຊຶ່ງໄດ້ແກ່ ການໄກ່ເກັ່ຍ, ການຮ້ອງທຸກຜ່ານຂັ້ນຕອນການພິຈາລະນາຄະດີ, ການປະຊຸມເພື່ອແກ້ໄຂບັນຫາ, ຫຼື ການພິຈາລະນາຄະດີຕາມຫຼັກນິຕິທັມ) ເພື່ອຂໍເອົາການຕົກລົງ ຫຼື ຄຳຕັດສິນວ່າ ການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ (ຊຶ່ງແນະນຳໃຫ້ໂດຍທີມ IEP ຂອງລູກຂອງທ່ານ) ສາມາດຈັດຫາໃຫ້ລູກຂອງທ່ານໄດ້ໂດຍບໍ່ຕ້ອງໄດ້ຮັບຄວາມຍິນຍອມຂອງທ່ານ.

ຖ້າວ່າ ທ່ານປະຕິເສດທີ່ຈະໃຫ້ຄວາມຍິນຍອມຂອງທ່ານ ເພື່ອໃຫ້ລູກຂອງທ່ານໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ໃນຄັ້ງທຳອິດ, ຫຼື ຖ້າວ່າ ທ່ານບໍ່ຕອບຮັບຄຳຮ້ອງຂໍເອົາຄວາມຍິນຍອມດັ່ງກ່າວ ຫຼື ໃນເວລາຕໍ່ມາ ຖອນ (ຍົກເລີກ) ຄວາມຍິນຍອມຂອງທ່ານຢ່າງເປັນລາຍລັກອັກສອນ ແລະເຂດໂຮງຮຽນບໍ່ຈັດຫາການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ໃຫ້ແກ່ລູກຂອງທ່ານ ຊຶ່ງເຂົາເຈົ້າໄດ້ຊອກເອົາຄວາມ

ຍິນຍອມຂອງທ່ານ, ສະນັ້ນ ໝາຍຄວາມວ່າ ເຂດໂຮງຮຽນຂອງທ່ານ:

1. ບໍ່ໄດ້ລະເມີດຂໍ້ກຳນົດໃນການຈັດຫາການສຶກສາຂອງຣັຖທີ່ເໝາະສົມແລະບໍ່ເສັຽຄ່າ (FAPE) ໃຫ້ແກ່ລູກຂອງທ່ານ ເນື່ອງຈາກຄວາມບົກຜ່ອງໃນການຈັດຫາການບໍລິການເຫຼົ່ານັ້ນໃຫ້ແກ່ລູກຂອງທ່ານ; **<u>ແລະ</u>**
2. ບໍ່ຈຳເປັນຕ້ອງມີການປະຊຸມສຳລັບໂຄງການການສຶກສາສະເພາະບຸກຄົນ (IEP) ຫຼື ພັດທະນາ IEP ສຳລັບລູກຂອງທ່ານ ສຳລັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ຊຶ່ງເປັນເລື່ອງທີ່ໄດ້ຮ້ອງຂໍເອົາຄວາມຍິນຍອມຈາກທ່ານມາກ່ອນແລ້ວ.

ຖ້າວ່າ ທ່ານຖອນ (ຍົກເລີກ) ຄວາມຍິນຍອມຂອງທ່ານຢ່າງເປັນລາຍລັກອັກສອນໃນເວລາໃດກໍ່ຕາມ ຫຼັງຈາກລູກຂອງທ່ານໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງໃນຄັ້ງທຳອິດ, ຈາກນັ້ນ ເຂດໂຮງຮຽນຈະບໍ່ສາມາດສືບຕໍ່ໃຫ້ການບໍລິການດັ່ງກ່າວໄດ້ອີກ, ແຕ່ຕ້ອງໃຫ້ໜັງສືແຈ້ງການລ່ວງໜ້າແກ່ທ່ານ, ດັ່ງທີ່ອະທິບາຍໄວ້ພາຍໃຕ້ຫົວຂໍ້ ***ໜັງສືແຈ້ງການລ່ວງໜ້າ***, ກ່ອນທີ່ຈະຍຸດຕິການໃຫ້ບໍລິການ ເຫຼົ່ານັ້ນ.

**ຄວາມຍິນຍອມຂອງພໍ່ແມ່ສຳລັບການປະເມີນຜົນຄືນໃໝ່**

ເຂດໂຮງຮຽນຂອງທ່ານຕ້ອງຂໍເອົາຄວາມຍິນຍອມຈາກທ່ານ ກ່ອນຈະເຮັດການປະເມີນຜົນລູກຂອງທ່ານຄືນໃໝ່, ເວັ້ນແຕ່ວ່າ ເຂດໂຮງຮຽນສາມາດສະແດງໃຫ້ເຫັນວ່າ:

1. ເຂດໂຮງຮຽນໄດ້ດຳເນີນການຢ່າງສົມເຫດຜົນແລ້ວໃນການຂໍເອົາຄວາມຍິນຍອມຈາກທ່ານສຳລັບການປະເມີນຜົນຄືນໃໝ່; **<u>ແລະ</u>**
2. ທ່ານບໍ່ໄດ້ຕອບຮັບ.

ກົດໝາຍຣັຖອໍຣິກອນກຳນົດວ່າ ຕ້ອງໄດ້ຮັບຄວາມຍິນຍອມຢ່າງເປັນລາຍລັກອັກສອນ ສຳລັບການ ທົດສອບບຸກຄົນໃນດ້ານປັນຍາ ຫຼື ການທົດສອບບຸກຄະລິກພາບ; ການຍົກເວັ້ນການໃຫ້ຄວາມຍິນຍອມຈະນຳໃຊ້ບໍ່ໄດ້ ໃນກໍລະນີທີ່ມີການຮ້ອງຂໍເອົາຄວາມຍິນຍອມສຳລັບການປະເມີນຜົນອັນໃດອັນໜຶ່ງເຫຼົ່ານີ້.

ຖ້າວ່າ ທ່ານປະຕິເສດທີ່ຈະໃຫ້ຄວາມຍິນຍອມໃນການປະເມີນຜົນລູກຂອງທ່ານຄືນໃໝ່, ເຂດໂຮງຮຽນອາດ, ແຕ່ບໍ່ຈຳເປັນຕ້ອງ, ສະແຫວງຫາການປະເມີນຜົນຄືນໃໝ່ ໂດຍການນຳໃຊ້ການໄກ່ເກັ່ຍ, ການຮ້ອງທຸກຕາມຫຼັກນິຕິທັມ, ການປະຊຸມເພື່ອແກ້ໄຂບັນຫາ, ແລະການພິຈາລະນາຄະດີຕາມຫຼັກນິຕິທັມ ເພື່ອຊອກເອົາການລົບລ້າງການປະຕິເສດຂອງທ່ານໃນການຍິນຍອມຕໍ່ການປະເມີນຜົນລູກຂອງທ່ານຄືນໃໝ່. ໃນຖານະເປັນການປະເມີນຜົນເບື້ອງຕົ້ນ, ເຂດໂຮງຮຽນຂອງທ່ານບໍ່ໄດ້ລະເມີດກົດຂໍ້ບັງຄັບຂອງຕົນ ພາຍໃຕ້ພາກ B ຂອງ IDEA ຖ້າວ່າ ເຂດໂຮງຮຽນປະຕິເສດທີ່ຈະຊອກຫາການປະເມີນຜົນຄືນໃໝ່ໃນລັກສະນະນີ້.

**ການບັນທຶກຄວາມພະຍາຍາມທີ່ສົມເຫດຜົນໃນການຂໍເອົາຄວາມຍິນຍອມ**

ໂຮງຮຽນຂອງທ່ານຕ້ອງບັນທຶກເປັນເອກະສານສຳລັບຄວາມພະຍາຍາມໃນການຂໍເອົາຄວາມຍິນຍອມຈາກທ່ານສຳລັບການປະເມີນຜົນເບື້ອງຕົ້ນ, ເພື່ອຈັດຫາການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງໃນຄັ້ງທຳອິດ, ສຳລັບການປະເມີນຜົນຄືນໃໝ່, ແລະການຊອກຫາພໍ່ແມ່ຂອງເດັກທີ່ຢູ່ໃນການດູແລຂອງຣັຖ ສຳລັບການປະເມີນຜົນເບື້ອງຕົ້ນ. ບັນທຶກເອກະສານຕ້ອງລວມມີ ບັນທຶກຄວາມພະຍາຍາມຂອງເຂດໂຮງຮຽນໃນຂົງເຂດເຫຼົ່ານີ້, ເຊັ່ນ:

1. ບັນທຶກທີ່ມີລາຍລະອຽດກ່ຽວກັບການໂທລະສັບຕິດຕໍ່ທີ່ໄດ້ເຮັດໄປແລ້ວ ຫຼື ໄດ້ພະຍາຍາມເຮັດ ແລະຜົນຂອງການໂທຕິດຕໍ່ເຫຼົ່ານັ້ນ;
2. ສຳເນົາຂອງການສື່ສານຕິດຕໍ່ທີ່ໄດ້ສົ່ງຫາພໍ່ແມ່ ແລະຄຳຕອບໃດໆ ທີ່ໄດ້ຮັບ; **<u>ແລະ</u>**
3. ບັນທຶກທີ່ມີລາຍລະອຽດກ່ຽວກັບ ການໄປຢ້ຽມຢາມທີ່ເຮືອນຂອງພໍ່ແມ່ ຫຼື ສະຖານທີ່ເຮັດວຽກຂອງພໍ່ແມ່ ແລະຜົນຂອງການຢ້ຽມຢາມເຫຼົ່ານັ້ນ.

### ຂໍ້ກຳນົດຄວາມຍິນຍອມອື່ນໆ

ຄວາມຍິນຍອມຂອງທ່ານແມ່ນບໍ່ຈຳເປັນ ກ່ອນເຂດໂຮງຮຽນຈະ:

1. ກວດກາຄືນຂໍ້ມູນທີ່ມີຢູ່ໃນປັດຈຸບັນ ໃນຖານະເປັນສ່ວນໜຶ່ງຂອງການປະເມີນຜົນ ຫຼື ການປະເມີນຜົນຄືນໃໝ່ສຳລັບລູກຂອງທ່ານ;
2. ໃຫ້ລູກທ່ານຮັບການທົດສອບ ຫຼື ການປະເມີນຜົນອື່ນໆ ທີ່ໄດ້ໃຫ້ແກ່ເດັກທຸກຄົນ ເວັ້ນແຕ່ວ່າ, ກ່ອນການທົດສອບ ຫຼື ການປະເມີນຜົນນັ້ນ, ຈຳເປັນຕ້ອງໄດ້ຮັບຄວາມຍິນຍອມຈາກພໍ່ແມ່ຂອງເດັກທຸກຄົນ;

ຖ້າວ່າ ທ່ານລົງທະບຽນລູກຂອງທ່ານເຂົ້າໃນໂຮງຮຽນເອກະຊົນ ໂດຍທ່ານເສັຽຄ່າໃຊ້ຈ່າຍດ້ວຍຕົນເອງ ຫຼື ຖ້າວ່າ ທ່ານສອນລູກຂອງທ່ານຢູ່ເຮືອນ, ແລະທ່ານບໍ່ໃຫ້ຄວາມຍິນຍອມສຳລັບການປະເມີນຜົນເບື້ອງຕົ້ນແກ່ລູກຂອງທ່ານ ຫຼື ການປະເມີນຜົນຄືນໃໝ່ສຳລັບລູກຂອງທ່ານ; ຫຼື ທ່ານບົກຜ່ອງບໍ່ຕອບຮັບຄຳຮ້ອງຂໍເອົາຄວາມຍິນຍອມຈາກທ່ານ, ທາງເຂດໂຮງຮຽນຈະບໍ່ສາມາດນຳໃຊ້ຄວາມຍິນຍອມລົບລ້າງລະບຽບການ (ຊຶ່ງໄດ້ແກ່ ການໄກ່ເກັ່ຽ, ການພິຈາລະນາຄະດີຕາມຫຼັກນິຕິທັມ) ແລະບໍ່ຈຳເປັນຕ້ອງພິຈາລະນາໃຫ້ລູກຂອງທ່ານມີສິດທີ່ຈະຮັບການບໍລິການທີ່ເທົ່າທຽມກັນ (ການບໍລິການທີ່ຈັດໄວ້ໃຫ້ແກ່ເດັກພິການໃນໂຮງຮຽນເອກະຊົນທີ່ພໍ່ແມ່ເປັນຜູ້ສົ່ງໄປຮຽນ).

### ຄວາມຍິນຍອມສຳລັບການໃຊ້ຜົນປະໂຫຍດສາທາລະນະ (Use of Public Benefits) ແລະ ປະກັນໄພ (ເຊັ່ນ Medicaid)

ເຂດໂຮງຮຽນຕ້ອງພັດທະນາ ແລະນຳໃຊ້ລະບຽບການ ເພື່ອຮັບປະກັນວ່າ ການປະຕິເສດທີ່ຈະໃຫ້ຄວາມຍິນຍອມຂອງທ່ານ ສຳລັບການບໍລິການອັນໃດເຫຼົ່ານີ້ ແລະກິດຈະກຳຕ່າງໆ ນັ້ນ ຈະບໍ່ສົ່ງຜົນໃຫ້ເກີດຄວາມບົກຜ່ອງໃນການຈັດຫາການສຶກສາຂອງຣັຖທີ່ເໝາະສົມແລະບໍ່ເສັຽຄ່າໃຫ້ແກ່ລູກຂອງທ່ານ (FAPE). ນອກຈາກນີ້, ເຂດໂຮງຮຽນຂອງທ່ານບໍ່ສາມາດໃຊ້ການປະຕິເສດຂອງທ່ານທີ່ຈະໃຫ້ຄວາມຍິນຍອມສຳລັບການ ບໍລິການໃດໜຶ່ງເຫຼົ່ານີ້ ຫຼື ກິດຈະກຳຕ່າງໆ ເປັນພື້ນຖານໃນການປະຕິເສດການບໍລິການອື່ນໆ, ຜົນປະໂຫຍດ, ຫຼື ກິດຈະກຳອື່ນໆ, ເວັ້ນແຕ່ວ່າ ຂໍ້ກຳນົດອື່ນຂອງພາກ B ກຳນົດໃຫ້ເຂດໂຮງຮຽນສາມາດເຮັດແນວນັ້ນໄດ້.

ທ່ານສາມາດຖອນຄວາມຍິນຍອມຍາມໃດກໍໄດ້ ໂດຍການແຈ້ງໃຫ້ເຂດໂຮງຮຽນຮູ້ເປັນລາຍລັກອັກສອນ. ຖ້າວ່າ ທ່ານຖອນຄວາມຍິນຍອມຂອງທ່ານ, ລູກຂອງທ່ານຈະຍັງຄົງໄດ້ຮັບການສຶກສາພິເສດ ແລະການ ບໍລິການທີ່ກ່ຽວຂ້ອງ ຊຶ່ງຈຳເປັນໃນການໃຫ້ FAPE.

## ການປະເມີນຜົນດ້ານການສຶກສາຢ່າງເປັນອິດສະຫຼະ (INDEPENDENT EDUCATIONAL EVALUATIONS, IEE)

### ຂໍ້ມູນທົ່ວໄປ

ດັ່ງທີ່ອະທິບາຍໄວ້ລຸ່ມນີ້, ທ່ານມີສິດທີ່ຈະຂໍໃຫ້ມີການປະເມີນຜົນຢ່າງເປັນອິດສະຫຼະ (independent educational evaluation, IEE) ສຳລັບລູກຂອງທ່ານ ຖ້າວ່າ ທ່ານບໍ່ເຫັນດີນຳການປະເມີນຜົນລູກຂອງທ່ານ ທີ່ໄດ້ດຳເນີນການໂດຍເຂດໂຮງຮຽນຂອງທ່ານ.

ຖ້າວ່າ ທ່ານຮ້ອງຂໍໃຫ້ມີ IEE, ເຂດໂຮງຮຽນຕ້ອງໃຫ້ຂໍ້ມູນແກ່ທ່ານ ກ່ຽວກັບວ່າ ທ່ານສາມາດຂໍເອົາ IEE ໄດ້ຈາກບ່ອນໃດແດ່ ແລະກ່ຽວກັບເກນຂອງເຂດໂຮງຮຽນທີ່ນຳໃຊ້ຕໍ່ກັບການປະເມີນຜົນດ້ານການສຶກສາທີ່ເປັນອິດສະຫຼະ.

### ຄວາມໝາຍ

*ການປະເມີນຜົນທີ່ເປັນອິດສະຫຼະ* ໝາຍເຖິງ ການປະເມີນຜົນທີ່ດຳເນີນການໂດຍຜູ້ກວດສອບທີ່ມີຄຸນສົມບັດເໝາະສົມ ຊຶ່ງເປັນຜູ້ທີ່ບໍ່ແມ່ນລູກຈ້າງຂອງເຂດໂຮງຮຽນ ທີ່ຮັບຜິດຊອບສຳລັບການສຶກສາຂອງລູກທ່ານ.

*ຄ່າໃຊ້ຈ່າຍສາທາລະນະ* ໝາຍຄວາມວ່າ ເຂດໂຮງຮຽນເປັນຜູ້ຈ່າຍເຕັມສ່ວນສຳລັບຄ່າປະເມີນຜົນ ຫຼື ຮັບປະກັນວ່າ ການປະເມີນຜົນທີ່ຈັດຫາໃຫ້ໂດຍບໍ່ເສັຍຄ່າແກ່ທ່ານນັ້ນ, ສອດຄ່ອງກັບຂໍ້ກຳນົດຂອງພາກ B ຂອງ IDEA, ຊຶ່ງອະນຸຍາດໃຫ້ແຕ່ລະຣັຖສາມາດນຳໃຊ້ແຫຼ່ງຊັບພະຍາກອນສະໜັບສະໜູນຂອງຣັຖ, ທ້ອງຖິ່ນ, ຣັຖບານກາງ ແລະເອກະຊົນ ທີ່ມີຢູ່ໃນຣັຖ ເພື່ອໃຫ້ເປັນໄປຕາມຂໍ້ກຳນົດຂອງ ພາກ B ຂອງກົດໝາຍ.

### ສິດທິຕໍ່ການປະເມີນຜົນພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ

ທ່ານມີສິດທີ່ຈະຂໍໃຫ້ມີການປະເມີນຜົນທີ່ເປັນອິດສະຫຼະສໍາລັບລູກຂອງທ່ານພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ ຖ້າອ່າ ທ່ານບໍ່ເຫັນດີນໍາການປະເມີນຜົນທີ່ດໍາເນີນການໂດຍເຂດໂຮງຮຽນຂອງທ່ານ, ໂດຍຢູ່ພາຍໃຕ້ເງື່ອນໄຂຕໍ່ໄປນີ້:

1. ຖ້າວ່າ ທ່ານຮ້ອງຂໍໃຫ້ມີການປະເມີນຜົນທີ່ເປັນອິດສະຫຼະສໍາລັບລູກຂອງທ່ານພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ, ເຂດໂຮງຮຽນຕ້ອງດໍາເນີນການໂດຍບໍ່ໃຫ້ລ່າຊ້າໂດຍບໍ່ຈໍາເປັນ, <u>ຢ່າງໃດຢ່າງໜຶ່ງດັ່ງນີ້</u>: (a) ຍື່ນ ຄໍາຮ້ອງຕາມຫຼັກນິຕິທັມ ເພື່ອສະແດງວ່າ ການປະເມີນຜົນຂອງເຂດໂຮງຮຽນສໍາລັບລູກຂອງທ່ານນັ້ນແມ່ນເໝາະສົມແລ້ວ; <u>ຫຼື</u> (b) ຈັດໃຫ້ມີການປະເມີນຜົນທີ່ເປັນອິດສະຫຼະພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ, ເວັ້ນແຕ່ວ່າ ເຂດໂຮງຮຽນສະແດງໃຫ້ເຫັນໃນລະຫວ່າງການພິຈາລະນາຄະດີວ່າ ການປະເມີນຜົນສໍາລັບລູກຂອງທ່ານທີ່ທ່ານຂໍເອົານັ້ນ ບໍ່ເປັນໄປຕາມເກນຂອງເຂດໂຮງຮຽນ.

2. ຖ້າວ່າ ເຂດໂຮງຮຽນຮ້ອງຂໍໃຫ້ມີການພິຈາລະນາຄະດີ ແລະຜົນຄໍາຕັດສິນຊີ້ຂາດຄືວ່າ ການປະເມີນຜົນຂອງເຂດໂຮງຮຽນສໍາລັບລູກຂອງທ່ານນັ້ນມີຄວາມເໝາະສົມແລ້ວ, ທ່ານກໍຍັງມີສິດທີ່ຈະຂໍໃຫ້ມີການປະເມີນຜົນທີ່ເປັນອິດສະຫຼະ, ແຕ່ວ່າເຂດໂຮງຮຽນຈະບໍ່ຮັບຜິດຊອບສໍາລັບຄ່າໃຊ້ຈ່າຍ.

3. ຖ້າວ່າ ທ່ານຮ້ອງຂໍໃຫ້ມີການປະເມີນຜົນທີ່ເປັນອິດສະຫຼະສໍາລັບລູກຂອງທ່ານ, ເຂດໂຮງຮຽນອາດຖາມວ່າ ເປັນຫຍັງທ່ານຈຶ່ງຄັດຄ້ານການປະເມີນຜົນລູກຂອງທ່ານທີ່ດໍາເນີນການໂດຍເຂດໂຮງຮຽນຂອງທ່ານ. ຢ່າງໃດກໍຕາມ, ເຂດໂຮງຮຽນບໍ່ສາມາດຮຽກຮ້ອງເອົາຄໍາອະທິບາຍ ແລະບໍ່ສາມາດເຮັດໃຫ້ລ່າຊ້າໂດຍບໍ່ຈໍາເປັນ ໃນການຈັດຫາການປະເມີນຜົນທີ່ເປັນອິດສະຫຼະໃຫ້ແກ່ລູກຂອງທ່ານພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ ຫຼື ຍື່ນຄໍາຮ້ອງທຸກຜ່ານການພິຈາລະນາຄະດີ ເພື່ອຕໍ່ສູ້ແກ້ໂຕໃຫ້ແກ່ການປະເມີນຜົນຂອງເຂດໂຮງຮຽນສໍາລັບລູກຂອງທ່ານ.

ທ່ານມີສິດພຽງໜຶ່ງຄັ້ງເທົ່ານັ້ນສໍາລັບການປະເມີນຜົນທີ່ເປັນອິດສະຫຼະສໍາລັບລູກຂອງທ່ານພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ ໃນແຕ່ລະຄັ້ງທີ່ເຂດໂຮງຮຽນດໍາເນີນການປະເມີນຜົນລູກຂອງທ່ານຊຶ່ງທ່ານບໍ່ເຫັນດີນໍາ.

### ການປະເມີນຜົນໂດຍການລິເລີ່ມຂອງພໍ່ແມ່

ຖ້າວ່າ ທ່ານຂໍໃຫ້ມີການປະເມີນຜົນທີ່ເປັນອິດສະຫຼະສໍາລັບລູກຂອງທ່ານພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ ຫຼື ທ່ານແບ່ງປັນຜົນການປະເມີນລູກຂອງທ່ານກັບເຂດໂຮງຮຽນທີ່ທ່ານໄດ້ມາໂດຍອອກຄ່າໃຊ້ຈ່າຍເອງ:

1. ເຂດໂຮງຮຽນຕ້ອງນໍາຜົນການປະເມີນລູກຂອງທ່ານໄປພິຈາລະນາ, ຖ້າວ່າ ມັນກົງກັບເກນຂອງເຂດໂຮງຮຽນສໍາລັບການປະເມີນຜົນທາງການສຶກສາທີ່ເປັນອິດສະຫຼະ, ພາຍໃຕ້ການຕັດສິນໃຈໃດໆ ທີ່ໄດ້ເຮັດໂດຍຄໍານຶງເຖິງຂໍ້ກໍານົດຂອງໂຄງການການສຶກສາຂອງຣັຖທີ່ເໝາະສົມແລະບໍ່ເສັຽຄ່າ (FAPE) ສໍາລັບລູກຂອງທ່ານ; <u>**ແລະ**</u>

2. ທ່ານ ຫຼື ເຂດໂຮງຮຽນ ສາມາດສະແດງຜົນການປະເມີນລູກຂອງທ່ານໃນຖານະເປັນຫຼັກຖານໜຶ່ງໄດ້ທີ່ບ່ອນພິຈາລະນາຄະດີ.

### ຄໍາຮ້ອງຂໍໃຫ້ມີການປະເມີນຜົນໂດຍເຈົ້າໜ້າທີ່ພິຈາລະນາຄະດີ

ຖ້າວ່າ ເຈົ້າໜ້າທີ່ພິຈາລະນາຄະດີຮຽກຮ້ອງໃຫ້ມີການປະເມີນຜົນທີ່ເປັນອິດສະຫຼະສໍາລັບລູກຂອງທ່ານ, ຄ່າໃຊ້ຈ່າຍໃນການປະເມີນຜົນຕ້ອງຢູ່ພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ.

### ເກນຂອງເຂດໂຮງຮຽນ

ຖ້າວ່າ ການປະເມີນຜົນທີ່ເປັນອິດສະຫຼະຢູ່ພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ, ເກນພາຍໃຕ້ການປະເມີນຜົນນັ້ນ, ລວມເຖິງສະຖານທີ່ຂອງການປະເມີນຜົນ ແລະຄຸນສົມບັດຂອງຜູ້ປະເມີນຜົນ, ຕ້ອງຄືກັນກັບເກນທີ່ເຂດໂຮງຮຽນນໍາໃຊ້ ເມື່ອເລີ່ມການປະເມີນຜົນ (ພາຍໃຕ້ຂອບເຂດທີ່ເກນເຫຼົ່ານັ້ນສອດຄ່ອງກັບສິດທິຂອງທ່ານຕໍ່ການປະເມີນຜົນທີ່ເປັນອິດສະຫຼະ).

ຍົກເວັ້ນສຳລັບເກນທີ່ໄດ້ອະທິບາຍໄວ້ຂ້າງເທິງນີ້, ເຂດໂຮງຮຽນ ບໍ່ສາມາດວາງເງື່ອນໄຂຕ່າງໆ ຫຼື ໄລຍະເວລາທີ່ກ່ຽວພັນກັບການດຳເນີນການປະເມີນຜົນທີ່ເປັນອິດສະຫຼະພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ.

# ຄວາມລັບຂອງຂໍ້ມູນ

## ຄວາມລັບ ຄວາມໝາຍ

ຕາມທີ່ນຳໃຊ້ໃນຫົວຂໍ້ **ຄວາມລັບຂອງຂໍ້ມູນ**:

- *ການທຳລາຍ* ໝາຍເຖິງ ການທຳລາຍທາງກາຍະພາບ ຫຼື ການລົບສິ່ງຊີ້ບອກຕົວບຸກຄົນອອກຈາກຂໍ້ມູນ ເພື່ອວ່າຂໍ້ມູນນັ້ນຈະບໍ່ສາມາດລະບຸຕົວບຸກຄົນໄດ້ອີກຕໍ່ໄປ.
- *ບັນທຶກການສຶກສາ* ໝາຍເຖິງ ປະເພດຂອງບັນທຶກຕ່າງໆ ທີ່ຢູ່ພາຍໃຕ້ນິຍາມຂອງ ''ບັນທຶກການສຶກສາ'' ໃນ 34 CFR ພາກ 99 (ກົດຂໍ້ບັງຄັບທີ່ເສີມເຂົ້າໃນກົດໝາຍວ່າດ້ວຍສິດທິທາງການສຶກສາຂອງຄອບຄົວ ແລະຄວາມເປັນສ່ວນຕົວ (Family Educational Rights and Privacy Act) ຂອງປີ 1974, 20 U.S.C. § 1232g (FERPA)) ແລະ OAR 581-015-2300.
- *ອົງການທີ່ເຂົ້າຮ່ວມ* ໝາຍເຖິງ ເຂດໂຮງຮຽນໃດໆ, ອົງການ ຫຼື ສະຖາບັນທີ່ເຮັດໜ້າທີ່ເກັບກຳ, ຮັກສາໄວ້, ຫຼື ນຳໃຊ້ຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້, ຫຼື ຂໍ້ມູນທີ່ໄດ້ມາ, ພາຍໃຕ້ພາກ B ຂອງ IDEA.

## ສາມາດລະບຸຕົວບຸກຄົນໄດ້

*ສາມາດລະບຸຕົວບຸກຄົນໄດ້* ໝາຍຄວາມວ່າ ຂໍ້ມູນນັ້ນ ລວມມີ:

(a) ຊື່ຂອງລູກຂອງທ່ານ, ຊື່ຂອງທ່ານທີ່ເປັນພໍ່ແມ່, ຫຼື ຊື່ຂອງສະມາຊິກໃນຄອບຄົວອື່ນໆ;

(b) ທີ່ຢູ່ຂອງລູກ;

(c) ສິ່ງຊີ້ບອກຕົວບຸກຄົນ, ເຊັ່ນ ເລກປະກັນສັງຄົມຂອງລູກ, ເລກປະຈຳຕົວນັກຮຽນ, ຫຼື ເລກຂໍ້ມູນຕົວບຸກຄົນ;

(d) ສິ່ງຊີ້ບອກໂດຍທາງອ້ອມອື່ນໆ, ເຊັ່ນ ວັນເດືອນປີເກີດຂອງລູກ, ສະຖານທີ່ເກີດ, ແລະຊື່ເກົ່າຂອງແມ່;

(e) ຂໍ້ມູນອື່ນໆ ພຽງອັນດຽວ ຫຼື ຮ່ວມກັບຂໍ້ມູນອື່ນທີ່ເຊື່ອມໂຍງກັນ ຫຼື ສາມາດເຊື່ອມໂຍງໄປຫາເດັກຄົນໃດໜຶ່ງໂດຍສະເພາະ ຊຶ່ງຈະເຮັດໃຫ້ຄົນອື່ນໃນຊຸມຊົນໂຮງຮຽນ, ຊຶ່ງເປັນຜູ້ທີ່ບໍ່ຮູ້ຂໍ້ມູນສ່ວນຕົວໃນສະພາບການທີ່ກ່ຽວພັນ, ສາມາດຊີ້ບອກຕົວຕົນຂອງເດັກຄົນໃດໜຶ່ງໄດ້ດ້ວຍຄວາມໝັ້ນໃຈແລະສົມເຫດຜົນ; ຫຼື

(f) ຂໍ້ມູນອື່ນໆ ທີ່ຖືກຮ້ອງຂໍໂດຍບຸກຄົນຜູ້ທີ່ເຂດໂຮງຮຽນເຊື່ອຢ່າງມີເຫດຜົນວ່າ ເຂົາເຈົ້າຮູ້ຈັກຕົວຕົນຂອງນັກຮຽນທີ່ກ່ຽວພັນໃນບັນທຶກການສຶກສາ.

## ແຈ້ງການສຳລັບພໍ່ແມ່

SEA ຕ້ອງໃຫ້ແຈ້ງການທີ່ມີຂໍ້ມູນພຽງພໍສຳລັບພໍ່ແມ່ ກ່ຽວກັບຄວາມລັບຂອງຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້, ລວມເຖິງ:

1. ລາຍລະອຽດຂອງເນື້ອໃນທີ່ຢູ່ໃນແຈ້ງການໃນພາສາແມ່ຂອງປະຊາຊົນກຸ່ມຕ່າງໆ ໃນຣັຖ;
2. ລາຍລະອຽດຂໍ້ມູນຂອງເດັກທີ່ສາມາດລະບຸຕົວບຸກຄົນໄດ້ຊຶ່ງໄດ້ຖືກເກັບຮັກສາໄວ້, ປະເພດຂອງຂໍ້ມູນທີ່ໄດ້ມາ, ວິທີການທີ່ຣັຖຕັ້ງໃຈນຳໃຊ້ໃນການເກັບກຳຂໍ້ມູນ (ລວມເຖິງ ແຫຼ່ງຂໍ້ມູນທີ່ໄດ້ຮວບຮວມມາໄວ້), ວິທີການທີ່ຈະນຳໃຊ້ຂໍ້ມູນ;

3. ສະຫຼຸບນະໂຍບາຍ ແລະລະບຽບການທີ່ບັນດາອົງການຕ່າງໆ ທີ່ເຂົ້າຮ່ວມຈະຕ້ອງປະຕິບັດຕາມ ໃນເລື່ອງການເກັບຮັກສາ, ການເປີດເຜີຍຕໍ່ບຸກຄົນທີສາມ, ການເກັບກໍາ, ແລະການທໍາລາຍຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້; **ແລະ**
4. ລາຍລະອຽດຂອງສິດທິທັງໝົດຂອງພໍ່ແມ່ແລະເດັກກ່ຽວກັບຂໍ້ມູນນີ້, ລວມເຖິງ ສິດທິຕ່າງໆ ພາຍໃຕ້ກົດໝາຍວ່າດ້ວຍສິດທິທາງການສຶກສາສໍາລັບຄອບຄົວ ແລະກົດໝາຍຄວາມເປັນສ່ວນຕົວ (FERPA) ແລະການນໍາໃຊ້ກົດຂໍ້ບັງຄັບໃນ 34 CFR ພາກ 99.

ກ່ອນກິດຈະກໍາສໍາຄັນໃດໆ ໃນການລະບຸຕົວບຸກຄົນ, ຊອກຫາບ່ອນຢູ່, ຫຼື ປະເມີນຜົນເດັກ ຕາມຄວາມຈໍາເປັນດ້ານການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ (ຍັງຮູ້ຈັກໃນຊື່ "ການຊອກຫາເດັກ (child find)"), ແຈ້ງການຕ້ອງໄດ້ຖືກຕີພິມ ຫຼື ປະກາດໃນໜັງສືພິມ ຫຼື ສື່ອື່ນໆ, ຫຼືທັງສອງຢ່າງ, ພ້ອມກັບມີການແຈກຢາຍຢ່າງພຽງພໍ ທົ່ວຣັຖເພື່ອແຈ້ງໃຫ້ພໍ່ແມ່ຮູ້ກ່ຽວກັບກິດຈະກໍາເຫຼົ່ານີ້.

## ສິດທິໃນການເຂົ້າເຖິງ

ອົງການທີ່ມີສ່ວນຮ່ວມ[1] ຕ້ອງອະນຸຍາດໃຫ້ທ່ານກວດກາ ແລະທວນຄືນບັນທຶກທາງການສຶກສາໃດໆ ທີ່ກ່ຽວພັນກັບລູກຂອງທ່ານ ຊຶ່ງໄດ້ເກັບກໍາ, ຮັກສາໄວ້, ຫຼື ນໍາໃຊ້ໂດຍເຂດໂຮງຮຽນຂອງທ່ານ ພາຍໃຕ້ພາກ B ຂອງ IDEA. ອົງການທີ່ມີສ່ວນຮ່ວມ [1] ຕ້ອງປະຕິບັດຕາມຄໍາຮ້ອງຂໍຂອງທ່ານ ໃນການກວດກາແລະທວນຄືນບັນທຶກການສຶກສາໃດໆ ກ່ຽວກັບລູກຂອງທ່ານ ໂດຍບໍ່ໃຫ້ລ່າຊ້າໂດຍບໍ່ຈໍາເປັນ ແລະກ່ອນການປະຊຸມພົບປະໃດໆ ກ່ຽວກັບໂຄງການການສຶກສາສະເພາະບຸກຄົນ (IEP), ຫຼື ການພິຈາລະນາຄະດີຕາມຫຼັກນິຕິທັມທີ່ເປັນກາງ (ລວມເຖິງ ການປະຊຸມແກ້ໄຂບັນຫາ ຫຼື ການພິຈາລະນາຄະດີໃນເລື່ອງການລົງວິໄນ), ແລະບໍ່ວ່າໃນກໍລະນີໃດໆ ພາຍໃນ 45 ວັນຕາມປະຕິທິນ ຫຼັງຈາກທ່ານໄດ້ເຮັດຄໍາຮ້ອງຂໍ.

ສິດທິຂອງທ່ານໃນການກວດກາແລະທວນຄືນບັນທຶກການສຶກສາ ລວມມີ:

1. ສິດທິຂອງທ່ານໃນການໄດ້ຮັບຄໍາຕອບຕໍ່ຄໍາຮ້ອງຂໍທີ່ສົມເຫດຜົນຂອງທ່ານຈາກອົງການທີ່ມີສ່ວນຮ່ວມ ສໍາລັບຄໍາອະທິບາຍຕ່າງໆ ແລະການຕີຄວາມຂໍ້ມູນໃນບັນທຶກ;
2. ສິດທິຂອງທ່ານໃນການຮ້ອງຂໍໃຫ້ທາງອົງການທີ່ມີສ່ວນຮ່ວມ ຈັດຫາສໍາເນົາຂອງບັນທຶກຕ່າງໆ ຖ້າວ່າ ທ່ານບໍ່ສາມາດກວດສອບແລະທວນຄືນບັນທຶກຕ່າງໆ ໄດ້ຢ່າງມີປະສິດທິພາບ ເວັ້ນແຕ່ວ່າ ທ່ານຈະໄດ້ຮັບສໍາເນົາເຫຼົ່ານັ້ນ; **ແລະ**
3. ສິດທິຂອງທ່ານໃນການໃຫ້ຕົວແທນໄປກວດສອບແລະທວນຄືນບັນທຶກຕ່າງໆ.

---

[1] ກະຊວງສຶກສາທິການແຫ່ງສະຫະຣັຖອາເມລິກາ ໃຊ້ຄໍາວ່າ "*ອົງການທີ່ມີສ່ວນຮ່ວມ (participating agency)*" ເພື່ອໃຫ້ໝາຍເຖິງເຂດໂຮງຮຽນໃດໆ, ອົງການ, ຫຼື ສະຖາບັນ ທີ່ເກັບກໍາ, ຮັກສາ, ຫຼື ນໍາໃຊ້ຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້ ຫຼື ຈາກບ່ອນທີ່ໄດ້ຮັບຂໍ້ມູນມາ ພາຍໃຕ້ພາກ B ຂອງ IDEA. ເນື່ອງຈາກເອກະສານນີ້ເນັ້ນໃສ່ການປະກອບສ່ວນຂອງພໍ່ແມ່ ກັບເຂດໂຮງຮຽນໃນພື້ນທີ່, ຄໍາວ່າ "ເຂດໂຮງຮຽນ" ຖືກນໍາໃຊ້ຫຼາຍກວ່າແທນທີ່ຈະໃຊ້ຄໍາວ່າ, "ອົງການທີ່ມີສ່ວນຮ່ວມ;" ຢ່າງໃດກໍຕາມ, ກົດລະບຽບກ່ຽວກັບບັນທຶກຕ່າງໆ ທີ່ເວົ້າເຖິງໃນພາກສ່ວນນີ້ ນໍາໃຊ້ກັບອົງການທີ່ມີສ່ວນຮ່ວມທັງໝົດ.

ອົງການທີ່ມີສ່ວນຮ່ວມອາດຖືວ່າ ທ່ານມີອຳນາດໃນການກວດສອບ ແລະທວນຄືນບັນທຶກຕ່າງໆ ທີ່ກ່ຽວພັນກັບລູກຂອງທ່ານ ເວັ້ນແຕ່ວ່າ ໄດ້ຮັບຄຳແນະນຳວ່າ ທ່ານບໍ່ມີອຳນາດພາຍໃຕ້ກົດໝາຍຂອງຣັຖທີ່ກ່ຽວຂ້ອງ ທີ່ບັງຄັບໃຊ້ກັບເລື່ອງຕ່າງໆ ເຊັ່ນ ການເປັນຜູ້ປົກຄອງ, ການແຍກກັນ, ແລະການຢ່າຮ້າງ.

## ບັນທຶກການເຂົ້າເຖິງ

ອົງການທີ່ມີສ່ວນຮ່ວມແຕ່ລະອົງການ ຕ້ອງເກັບບັນທຶກລາຍຊື່ຝ່າຍຕ່າງໆ ທີ່ຂໍເອົາການເຂົ້າເຖິງບັນທຶກທາງການສຶກສາທີ່ເກັບກຳໄວ້, ຮັກສາໄວ້, ຫຼື ນຳໃຊ້ ພາຍໃຕ້ພາກ B ຂອງ IDEA (ຍົກເວັ້ນ ການເຂົ້າເຖິງໂດຍພໍ່ແມ່ ແລະພະນັກງານທີ່ໄດ້ຮັບອະນຸຍາດຂອງອົງການທີ່ມີສ່ວນຮ່ວມ), ລວມເຖິງ ຊື່ຂອງຝ່າຍຕ່າງໆ, ວັນທີທີ່ເຂົ້າເຖິງ, ແລະຈຸດປະສົງຂອງການນຳໃຊ້ບັນທຶກຂອງຝ່າຍທີ່ໄດ້ຮັບອະນຸຍາດໃຫ້ເຂົ້າເຖິງບັນທຶກ.

## ບັນທຶກຂໍ້ມູນຂອງເດັກທີ່ມີຫຼາຍກວ່າໜຶ່ງຄົນ

ຖ້າວ່າ ບັນທຶກການສຶກສາໃດໆ ມີຂໍ້ມູນຂອງເດັກຫຼາຍກວ່າໜຶ່ງຄົນ, ພໍ່ແມ່ຂອງເດັກເຫຼົ່ານັ້ນມີສິດທີ່ຈະກວດສອບ ແລະທວນຄືນສະເພາະຂໍ້ມູນທີ່ກ່ຽວພັນກັບລູກຂອງຕົນ ຫຼື ຂໍໃຫ້ແຈ້ງແຕ່ພຽງຂໍ້ມູນສະເພາະນັ້ນ.

## ລາຍການປະເພດແລະສະຖານທີ່ຂອງຂໍ້ມູນ

ເມື່ອຮ້ອງຂໍ, ອົງການທີ່ມີສ່ວນຮ່ວມຕ້ອງຈັດຫາໃຫ້ທ່ານສຳລັບລາຍການປະເພດແລະສະຖານທີ່ຂອງບັນທຶກການສຶກສາທີ່ໄດ້ເກັບກຳໄວ້, ຮັກສາໄວ້, ຫຼື ນຳໃຊ້ໂດຍອົງການ.

## ຄ່າທຳນຽມ

ແຕ່ລະອົງການທີ່ມີສ່ວນຮ່ວມອາດເກັບຄ່າທຳນຽມສຳລັບສຳເນົາຂອງບັນທຶກຕ່າງໆ ທີ່ຈັດຫາໃຫ້ທ່ານ ພາຍໃຕ້ພາກ B ຂອງ IDEA, ຖ້າວ່າ ຄ່າທຳນຽມນັ້ນບໍ່ເປັນອຸປະສັກຕໍ່ທ່ານໃນການໃຊ້ສິດກວດສອບ ແລະທົບທວນຄືນບັນທຶກເຫຼົ່ານັ້ນ.

ອົງການທີ່ມີສ່ວນຮ່ວມບໍ່ສາມາດເກັບຄ່າທຳນຽມໃນການຊອກຫາ ຫຼື ຄົ້ນຫາຂໍ້ມູນພາຍໃຕ້ພາກ B ຂອງ IDEA.

## ການແກ້ໄຂບັນທຶກຕາມຄຳຮ້ອງຂໍຂອງພໍ່ແມ່

ຖ້າວ່າ ທ່ານເຊື່ອວ່າ ຂໍ້ມູນນັ້ນທີ່ຢູ່ໃນບັນທຶກການສຶກສາ ກ່ຽວກັບລູກຂອງທ່ານທີ່ໄດ້ຖືກເກັບກຳ, ຮັກສາໄວ້, ຫຼື ນຳໃຊ້ພາຍໃຕ້ພາກ B ຂອງ IDEA ບໍ່ຖືກຕ້ອງ, ເຮັດໃຫ້ເຂົ້າໃຈຜິດ, ຫຼື ລະເມີດຄວາມເປັນສ່ວນຕົວ ຫຼື ສິດທິອື່ນໆ ຂອງລູກ, ທ່ານສາມາດຮ້ອງຂໍໃຫ້ອົງການທີ່ມີສ່ວນຮ່ວມທີ່ເປັນຜູ້ຮັກສາຂໍ້ມູນນັ້ນ ປ່ຽນແປງແກ້ໄຂຂໍ້ມູນໄດ້.

ອົງການທີ່ມີສ່ວນຮ່ວມຕ້ອງຕັດສິນໃຈວ່າຈະປ່ຽນແປງແກ້ໄຂຂໍ້ມູນຕາມຄຳຮ້ອງຂໍຂອງທ່ານຫຼືບໍ່ ພາຍໃນ ໄລຍະເວລາທີ່ສົມເຫດຜົນນັບແຕ່ໄດ້ຮັບຄຳຮ້ອງຂໍຂອງທ່ານ.

ຖ້າວ່າ ອົງການທີ່ມີສ່ວນຮ່ວມຕັດສິນໃຈທີ່ຈະບໍ່ແກ້ໄຂບັນທຶກຕາມຄຳຮ້ອງຂໍ, ອົງການນັ້ນຕ້ອງແຈ້ງໃຫ້ທ່ານຮູ້ເຖິງການຕັດສິນໃຈນັ້ນ ແລະແນະນຳທ່ານກ່ຽວກັບສິດທິຂອງທ່ານໃນການຂໍເອົາການພິຈາລະນາຄະດີ ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ໂອກາດສຳລັບການພິຈາລະນາຄະດີ*** .

## ໂອກາດສໍາລັບການພິຈາລະນາຄະດີ

ເມື່ອຮ້ອງຂໍ, ອົງການທີ່ມີສ່ວນຮ່ວມຕ້ອງໃຫ້ໂອກາດທ່ານໃນການຂໍເອົາການພິຈາລະນາຄະດີ ເພື່ອຄັດຄ້ານ ຂໍ້ມູນທີ່ຢູ່ໃນບັນທຶກການສຶກສາ ກ່ຽວກັບລູກຂອງທ່ານ ເທິງພື້ນຖານທີ່ວ່າ ຂໍ້ມູນນັ້ນບໍ່ຖືກຕ້ອງ, ເຮັດໃຫ້ ເຂົ້າໃຈຜິດ, ຫຼື ລະເມີດຄວາມເປັນສ່ວນຕົວ ຫຼື ສິດທິອື່ນໆ ຂອງລູກ.

## ລະບຽບການພິຈາລະນາຄະດີ

ການພິຈາລະນາຄະດີເພື່ອຄັດຄ້ານຂໍ້ມູນທີ່ຢູ່ໃນບັນທຶກການສຶກສາ ຕ້ອງໄດ້ດໍາເນີນການໂດຍສອດຄ່ອງກັບ ລະບຽບການສໍາລັບການພິຈາລະນາຄະດີດັ່ງກ່າວ ພາຍໃຕ້ກົດໝາຍວ່າດ້ວຍສິດທິທາງການສຶກສາ ແລະຄວາມເປັນ ສ່ວນຕົວ (FERPA).

## ຜົນຂອງການພິຈາລະນາຄະດີ

ຖ້າວ່າ, ຕາມຜົນຂອງການພິຈາລະນາຄະດີ, ອົງການທີ່ມີສ່ວນຮ່ວມຕັດສິນວ່າ ຂໍ້ມູນບໍ່ຖືກຕ້ອງ, ເຮັດໃຫ້ເຂົ້າໃຈ ຜິດ ຫຼື ລະເມີດຄວາມເປັນສ່ວນຕົວ ຫຼື ສິດທິອື່ນໆ ຂອງລູກຂອງທ່ານ, ອົງການນັ້ນຕ້ອງແກ້ໄຂຂໍ້ມູນນັ້ນໃຫ້ຖືກ ຕ້ອງ ແລະແຈ້ງໃຫ້ທ່ານຮູ້ເປັນລາຍລັກອັກສອນ.

ຖ້າວ່າ, ຕາມຜົນຂອງການພິຈາລະນາຄະດີ, ອົງການທີ່ມີສ່ວນຮ່ວມຕັດສິນວ່າ ຂໍ້ມູນບໍ່ແມ່ນບໍ່ຖືກຕ້ອງ, ບໍ່ເຮັດ ໃຫ້ເຂົ້າໃຈຜິດ ຫຼື ບໍ່ລະເມີດຄວາມເປັນສ່ວນຕົວ ຫຼື ສິດທິອື່ນໆ ຂອງລູກຂອງທ່ານ, ອົງການນັ້ນຕ້ອງແຈ້ງໃຫ້ ທ່ານຮູ້ກ່ຽວກັບສິດທິຂອງທ່ານໃນການໃສ່ຄໍາກ່າວສະແດງຄວາມຄິດເຫັນລົງໃນບັນທຶກກ່ຽວກັບຂໍ້ມູນ ຫຼື ໃຫ້ ເຫດຜົນໃດໆ ທີ່ທ່ານບໍ່ເຫັນດີນໍາການຕັດສິນຂອງອົງການທີ່ມີສ່ວນຮ່ວມ.

ຄໍາອະທິບາຍດັ່ງກ່າວທີ່ໃສ່ລົງໃນບັນທຶກຂອງລູກຕ້ອງ:

1. ໄດ້ຖືກຮັກສາໄວ້ໂດຍອົງການທີ່ມີສ່ວນຮ່ວມໃນຖານະເປັນສ່ວນໜຶ່ງຂອງບັນທຶກຂອງລູກ ນານຕາບ ເທົ່າທີ່ບັນທຶກ ຫຼື ສ່ວນທີ່ຂັດແຍ້ງນັ້ນ ໄດ້ຖືກຮັກສາໄວ້ໂດຍອົງການທີ່ມີສ່ວນຮ່ວມ; **ແລະ**
2. ຖ້າວ່າ ອົງການທີ່ມີສ່ວນຮ່ວມເປີດເຜີຍບັນທຶກຂອງລູກ ຫຼື ຂໍ້ມູນທີ່ຂັດແຍ້ງ ຕໍ່ຝ່າຍໃດໆ, ອົງການນັ້ນກໍຕ້ອງເປີດເຜີຍຄໍາອະທິບາຍນັ້ນດ້ວຍ.

## ຄວາມຍິນຍອມສໍາລັບ ການເປີດເຜີຍ ຂໍ້ມູນ ທີ່ສາມາດລະບຸຕົວບຸກຄົນໄດ້

ເວັ້ນແຕ່ວ່າ ຂໍ້ມູນນັ້ນຢູ່ໃນບັນທຶກການສຶກສາ, ແລະການເປີດເຜີຍກໍໄດ້ຮັບອະນຸຍາດໂດຍບໍ່ຕ້ອງມີຄວາມ ຍິນຍອມຂອງພໍ່ແມ່ ພາຍໃຕ້ກົດໝາຍວ່າດ້ວຍສິດທິທາງການສຶກສາ ແລະຄວາມເປັນສ່ວນຕົວ (FERPA), ຕ້ອງມີການຂໍຄວາມຍິນຍອມຈາກທ່ານກ່ອນທີ່ຈະເປີດເຜີຍຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້ ໃຫ້ແກ່ຝ່າຍ ຕ່າງໆ ທີ່ບໍ່ແມ່ນເຈົ້າໜ້າທີ່ຂອງອົງການທີ່ມີສ່ວນຮ່ວມ. ຍົກເວັ້ນພາຍໃຕ້ສະພາບການທີ່ລະບຸໄວ້ຂ້າງລຸ່ມ, ຈໍາ ເປັນຕ້ອງໄດ້ຮັບຄໍາຍິນຍອມຂອງທ່ານກ່ອນທີ່ຈະມີການເປີດເຜີຍຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້ ໃຫ້ແກ່ ເຈົ້າໜ້າທີ່ຂອງອົງການທີ່ມີສ່ວນຮ່ວມ ເພື່ອໃຫ້ເປັນໄປຕາມຂໍ້ກໍານົດຂອງພາກ B ຂອງ IDEA.

ຕ້ອງໄດ້ມີການຂໍເອົາຄວາມຍິນຍອມຈາກທ່ານ ຫຼື ຈາກເດັກທີ່ມີສິດ ຊຶ່ງເປັນຜູ້ທີ່ມີອາຍຸຮອດເກນສ່ວນໃຫຍ່ ພາຍໃຕ້ກົດໝາຍຂອງຣັຖ, ກ່ອນທີ່ຈະມີການເປີດເຜີຍຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້ ໃຫ້ແກ່ເຈົ້າໜ້າ ທີ່ຂອງອົງການທີ່ມີສ່ວນຮ່ວມ ທີ່ເປັນຜູ້ຈັດຫາ ຫຼື ຈ່າຍຄ່າບໍລິການຕ່າງໆ ໃນຊ່ວງທີ່ມີການປ່ຽນຜ່ານ.

ຖ້າວ່າ ລູກຂອງທ່ານຢູ່ໃນ, ຫຼື ກໍາລັງຈະໄປ, ໂຮງຮຽນເອກະຊົນ ທີ່ບໍ່ໄດ້ຕັ້ງຢູ່ໃນເຂດໂຮງຮຽນດຽວກັນ ກັບບ່ອນທີ່ທ່ານອາໄສຢູ່ , ຕ້ອງໄດ້ມີການຂໍເອົາຄວາມຍິນຍອມຂອງທ່ານ ກ່ອນທີ່ຈະມີການເປີດເຜີຍຂໍ້ມູນທີ່ ສາມາດລະບຸຕົວຕົນຂອງລູກ ໃຫ້ແກ່ບັນດາເຈົ້າໜ້າທີ່ຕ່າງໆ ໃນເຂດໂຮງຮຽນທີ່ເປັນທີ່ຕັ້ງຂອງໂຮງຮຽນເອ ກະຊົນ ແລະເຈົ້າໜ້າທີ່ຕ່າງໆ ໃນເຂດໂຮງຮຽນບ່ອນທີ່ທ່ານອາໄສຢູ່.

## ການປົກປ້ອງຄຸ້ມຄອງ

ອົງການທີ່ມີສ່ວນຮ່ວມແຕ່ລະແຫ່ງຕ້ອງປົກປ້ອງຄວາມລັບຂອງຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້ ໃນເວລາດໍາເນີນການເກັບກໍາ, ຮັກສາໄວ້, ເປີດເຜີຍ ແລະທໍາລາຍ.

ເຈົ້າໜ້າທີ່ໜຶ່ງຄົນຂອງອົງການທີ່ເຂົ້າຮ່ວມແຕ່ລະແຫ່ງ ຕ້ອງຖືວ່າມີຄວາມຮັບຜິດຊອບໃນການຮັບປະກັນຄວາມລັບຂອງຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້.

ທຸກຄົນທີ່ເກັບກໍາ ຫຼື ນໍາໃຊ້ຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້ ຕ້ອງໄດ້ຮັບການຝຶກອົບຮົມ ຫຼື ຄໍາແນະນໍາກ່ຽວກັບນະໂຍບາຍ ແລະລະບຽບການຂອງຣັຖໃນເລື່ອງການຮັກສາຄວາມລັບ ພາຍໃຕ້ພາກ B ຂອງ IDEA ແລະ ກົດໝາຍວ່າດ້ວຍສິດທິທາງການສຶກສາຂອງຄອບຄົວ ແລະຄວາມເປັນສ່ວນຕົວ (FERPA).

ສໍາລັບການກວດສອບສາທາລະນະ, ອົງການທີ່ເຂົ້າຮ່ວມແຕ່ລະແຫ່ງ ຕ້ອງຮັກສາລາຍຊື່ແລະຕໍາແໜ່ງໃນປັດຈຸບັນຂອງບັນດາພະນັກງານພາຍໃນອົງການທີ່ອາດມີສິດເຂົ້າເຖິງຂໍ້ມູນທີ່ສາມາດລະບຸຕົວບຸກຄົນໄດ້.

## ການທໍາລາຍຂໍ້ມູນ

ເຂດໂຮງຮຽນຂອງທ່ານຕ້ອງແຈ້ງໃຫ້ທ່ານຮູ້ ເມື່ອຂໍ້ມູນທີ່ສາມາດລະບຸຕົວບຸກຄົນ ທີ່ໄດ້ເກັບກໍາ, ຮັກສາໄວ້, ຫຼື ນໍາໃຊ້ ພາຍໃຕ້ພາກ B ຂອງ IDEA ບໍ່ມີຄວາມຈໍາເປັນອີກຕໍ່ໄປໃນການໃຫ້ການບໍລິການດ້ານການສຶກສາແກ່ລູກຂອງທ່ານ.

ຂໍ້ມູນຕ້ອງໄດ້ຖືກທໍາລາຍຕາມການຮ້ອງຂໍຂອງທ່ານ. ຢ່າງໃດກໍຕາມ, ບັນທຶກຖາວອນກ່ຽວກັບ ຊື່ຂອງລູກທ່ານ, ລວມເຖິງ ທີ່ຢູ່, ແລະເບີໂທລະສັບ, ລະດັບເກຣດຂອງເດັກ, ບັນທຶກການເຂົ້າຮຽນ, ວິຊາທີ່ຮຽນ, ລະດັບຊັ້ນຮຽນທີ່ຈົບ, ແລະປີທີ່ຮຽນຈົບ ຕ້ອງໄດ້ຖືກເກັບຮັກສາໄວ້ໂດຍບໍ່ມີການຈໍາກັດດ້ານເວລາ. ທ່ານມີສິດທີ່ຈະຂໍໃຫ້ທາງເຂດໂຮງຮຽນ ທໍາລາຍຂໍ້ມູນທາງການສຶກສາຂອງລູກ ເມື່ອມັນບໍ່ມີຄວາມຈໍາເປັນອີກຕໍ່ໄປ.

# ການແກ້ໄຂບັນຫາຂໍ້ຂັດແຍ້ງກັນ

## ການໄກ່ເກັ່ຍ

### ຂໍ້ມູນທົ່ວໄປ

ການບໍລິການໄກ່ເກັ່ຍມີໃຫ້ຜ່ານ ODE ເພື່ອອະນຸຍາດໃຫ້ທ່ານ ແລະເຂດໂຮງຮຽນ ສາມາດແກ້ໄຂບັນຫາຄວາມຂັດແຍ້ງກັນ ທີ່ກ່ຽວພັນໃນເລື່ອງໃດໆ ພາຍໃຕ້ພາກ B ຂອງ IDEA, ລວມເຖິງ ເລື່ອງຕ່າງໆ ທີ່ເກີດຂຶ້ນກ່ອນໜ້າທີ່ຈະມີການຍື່ນຄໍາຮ້ອງທຸກຕາມຫຼັກນິຕິທັມ (due process complaint). ສະນັ້ນ, ການໄກ່ເກັ່ຍຈຶ່ງມີໃຫ້ເພື່ອແກ້ໄຂຂໍ້ຂັດແຍ້ງ ພາຍໃຕ້ພາກ B ຂອງ IDEA, ບໍ່ວ່າ ທ່ານຈະໄດ້ຍື່ນຄໍາຮ້ອງທຸກຕາມຫຼັກນິຕິທັມ ເພື່ອຂໍເອົາການພິຈາລະນາຄະດີ ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ການຍື່ນຄໍາຮ້ອງທຸກຕາມຫຼັກນິຕິທັມ***ຫຼື ໄດ້ຍື່ນຄໍາຮ້ອງທຸກເລື່ອງການສຶກສາພິເສດ ຫຼືບໍ່ກໍຕາມ.

### ຂໍ້ກໍານົດຕ່າງໆ

ລະບຽບການຕ່າງໆ ຕ້ອງຮັບປະກັນວ່າ ຂັ້ນຕອນການໄກ່ເກັ່ຍນັ້ນ:

1. ເປັນໄປດ້ວຍຄວາມສະໝັກໃຈຂອງທ່ານ ແລະຂອງເຂດໂຮງຮຽນ ;
2. ຕ້ອງບໍ່ຖືກນໍາໃຊ້ເພື່ອປະຕິເສດ ຫຼື ເຮັດໃຫ້ລ່າຊ້າ ຕໍ່ສິດທິຂອງທ່ານໃນການຂໍເອົາການພິຈາລະນາຄະດີ, ຫຼື ເພື່ອປະຕິເສດສິດທິອື່ນໆ ທີ່ກໍານົດໄວ້ພາຍໃຕ້ພາກ B ຂອງ IDEA; **<u>ແລະ</u>**

3. ດຳເນີນການໂດຍຜູ້ໄກ່ເກັ່ຽທີ່ມີຄຸນສົມບັດເໝາະສົມ ແລະເປັນກາງ ຊຶ່ງເປັນຜູ້ທີ່ຜ່ານການຝຶກອົບຮົມໃນການໃຊ້ເຕັກນິກການໄກ່ເກັ່ຽທີ່ມີປະສິດທິພາບ.

ຣັຖຕ້ອງເກັບຮັກສາລາຍຊື່ຂອງບຸກຄົນທີ່ເປັນຜູ້ໄກ່ເກັ່ຽທີ່ມີຄຸນສົມບັດເໝາະສົມ ແລະຮູ້ຈັກກົດໝາຍ ແລະກົດຂໍ້ບັງຄັບ ທີ່ກ່ຽວຂ້ອງກັບຂໍ້ກຳນົດຂອງການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ. ຣັຖຕ້ອງເລືອກຜູ້ໄກ່ເກັ່ຽໂດຍວິທີສຸ່ມເລືອກ, ໝູນວຽນກັນ, ຫຼື ວິທີອື່ນທີ່ເປັນກາງ.

ຣັຖມີໜ້າທີ່ຮັບຜິດຊອບສຳລັບຄ່າໃຊ້ຈ່າຍໃນການໄກ່ເກັ່ຽ, ລວມເຖິງ ຄ່າໃຊ້ຈ່າຍໃນການຈັດປະຊຸມພົບປະກັນ.

ການປະຊຸມແຕ່ລະຄັ້ງໃນຂັ້ນຕອນການໄກ່ເກັ່ຽນັ້ນຕ້ອງໄດ້ຖືກຈັດລົງຕາຕະລາງຢ່າງເໝາະສົມກັບເວລາ ແລະຈັດຂຶ້ນໃນສະຖານທີ່ທີ່ສະດວກສຳລັບທ່ານ ແລະເຂດໂຮງຮຽນ.

ຖ້າວ່າ ທ່ານ ແລະເຂດໂຮງຮຽນແກ້ໄຂບັນຫາຂໍ້ຂັດແຍ້ງຜ່ານຂັ້ນຕອນການໄກ່ເກັ່ຽ, ທັງສອງຝ່າຍຕ້ອງເຮັດສັນຍາຜູກມັດກັນທາງກົດໝາຍ ຊຶ່ງມີລາຍລະອຽດຂອງການແກ້ໄຂບັນຫາ ແລະ:

1. ລະບຸວ່າ ລາຍລະອຽດການສົນທະນາທັງໝົດທີ່ໄດ້ເກີດຂຶ້ນໃນລະຫວ່າງຂັ້ນຕອນການໄກ່ເກັ່ຽ ຈະຍັງຄົງເປັນຄວາມລັບ ແລະບໍ່ສາມາດເອົາໄປໃຊ້ເປັນຫຼັກຖານໃນຂັ້ນຕອນການພິຈາລະນາຄະດີຕ່າງ ໄປ ຫຼື ການດຳເນີນຄະດີທາງແພ່ງໃດໆ (ຄະດີໃນສານ); <u>**ແລະ**</u>
2. ເຊັນຊື່ໃສ່ໂດຍທ່ານ ແລະຕົວແທນຂອງເຂດໂຮງຮຽນທີ່ມີອຳນາດໃນການຜູກມັດເຂດໂຮງຮຽນ.

ສັນຍາຂໍ້ຕົກລົງການໄກ່ເກັ່ຽທີ່ລົງຊື່ແລ້ວ ຈະມີຜົນບັງຄັບໃຊ້ໃນເຂດອຳນາດສານໃດໆ (ສານທີ່ມີອຳນາດພາຍໃຕ້ກົດໝາຍຂອງຣັຖໃນການພິຈາລະນາຄະດີສຳລັບຄະດີປະເພດນີ້) ຫຼື ໃນສານຂັ້ນຕົ້ນຂອງ ສະຫະຣັຖອາເມລິກາ.

ລາຍລະອຽດການສົນທະນາທີ່ໄດ້ເກີດຂຶ້ນໃນລະຫວ່າງຂັ້ນຕອນການໄກ່ເກັ່ຽຕ້ອງໄດ້ຖືກເກັບເປັນຄວາມລັບ. ລາຍລະອຽດນັ້ນບໍ່ສາມາດນຳໃຊ້ເປັນຫຼັກຖານໃນການພິຈາລະນາຄະດີໃດໆ ໃນອະນາຄົດ ຫຼື ການດຳເນີນຄະດີທາງແພ່ງໃດໆ ໃນສານຂອງຣັຖບານກາງ ຫຼືຂອງຣັຖ ທີ່ໄດ້ຮັບການຊ່ວຍເຫຼືອພາຍໃຕ້ພາກ B ຂອງ IDEA.

**ຄວາມເປັນກາງຂອງຜູ້ໄກ່ເກັ່ຽ**

ຜູ້ໄກ່ເກັ່ຽ:

1. ຕ້ອງບໍ່ແມ່ນພະນັກງານຂອງ SEA ຫຼື ເຂດໂຮງຮຽນ ທີ່ກ່ຽວຂ້ອງໃນການສຶກສາ ຫຼື ການເບິ່ງແຍງລູກຂອງທ່ານ; <u>**ແລະ**</u>
2. ຕ້ອງບໍ່ມີຜົນປະໂຫຍດທາງອາຊີບສ່ວນຕົວ ຊຶ່ງຂັດແຍ້ງກັບຄວາມເປັນກາງຂອງຜູ້ໄກ່ເກັ່ຽ.

ບຸກຄົນທີ່ມີຄຸນສົມບັດເປັນຜູ້ໄກ່ເກັ່ຽ ບໍ່ແມ່ນພະນັກງານຂອງເຂດໂຮງຮຽນ ຫຼື ອົງການຂອງຣັຖ ເນື່ອງຈາກເຂົາ ຫຼື ລາວ ໄດ້ຮັບຄ່າຈ້າງຈາກອົງການເພື່ອໃຫ້ຮັບໃຊ້ໃນຖານະເປັນຜູ້ໄກ່ເກັ່ຽເທົ່ານັ້ນ.

# ລະບຽບການຮ້ອງທຸກຕໍ່ຣັຖ

### ຄວາມແຕກຕ່າງລະຫວ່າງລະບຽບການສຳລັບການຮ້ອງທຸກຕາມຫຼັກນິຕິທັມ ແລະ ການພິຈາລະນາຄະດີແລະສຳລັບການຮ້ອງທຸກຕໍ່ຣັຖ

ກົດຂໍ້ບັງຄັບສຳລັບພາກ B ຂອງ IDEA ໄດ້ກຳນົດເປັນລະບຽບການແຍກຕ່າງຫາກ ສຳລັບການຮ້ອງທຸກຕໍ່ຣັຖ (state complaints) ແລະສຳລັບການຮ້ອງທຸກຕາມຫຼັກນິຕິທັມ (due process complaints) ແລະການພິຈາລະນາຄະດີ (hearings). ດັ່ງທີ່ອະທິບາຍລຸ່ມນີ້, ບຸກຄົນ ຫຼື ອົງການໃດໆ ສາມາດຍື່ນເລື່ອງຮ້ອງທຸກຕໍ່ຣັຖຊຶ່ງກ່າວຫາການລະເມີດຂໍ້ກຳນົດພາກສ່ວນໃດໆ ຂອງ ພາກ B ໂດຍເຂດໂຮງຮຽນ, SEA, ຫຼື ອົງການສາທາລະນະອື່ນໆ. ສະເພາະທ່ານ ຫຼື ເຂດໂຮງຮຽນເທົ່ານັ້ນທີ່ສາມາດຍື່ນຄຳຮ້ອງທຸກຕາມຫຼັກນິຕິທັມ ໃນເລື່ອງໃດໆ ທີ່ກ່ຽວ

ພັນກັບຂໍ້ສະເໜີ ຫຼື ການປະຕິເສດ ຕໍ່ການລິເລີ່ມ ຫຼື ປ່ຽນແປງເອກະລັກຂອງບຸກຄົນ, ການປະເມີນຜົນ ຫຼື ການຈັດວາງທາງການສຶກສາສຳລັບເດັກພິການ ຫຼືຂາດສະມັດຖພາບ, ຫຼື ຂໍ້ກຳນົດຂອງການໃຫ້ການສຶກສາຂອງ ຣັຖທີ່ເໝາະສົມແລະບໍ່ເສັຽຄ່າ (FAPE) ແກ່ເດັກ.

ໂດຍທົ່ວໄປແລ້ວ ເຈົ້າໜ້າທີ່ຂອງ SEA ຕ້ອງແກ້ໄຂຄຳຮ້ອງທຸກຕໍ່ຣັຖພາຍໃນ 60 ວັນຕາມກຳນົດໃນປະຕິທິນ, ເວັ້ນແຕ່ວ່າ ໄດ້ມີການ ຂະຫຍາຍເວລາອອກໄປຢ່າງເໝາະສົມ, ເຈົ້າໜ້າທີ່ພິຈາລະນາຄະດີທີ່ເປັນກາງ (ເອີ້ນວ່າ ຜູ້ພິພາກສາກົດໝາຍປົກຄອງ, ຫຼື ALJ) ຕ້ອງພິຈາລະນາຄະດີຕາມຫຼັກນິຕິທັມ (ຖ້າວ່າ ບໍ່ສາມາດແກ້ໄຂຕົກ ລົງກັນໄດ້ຜ່ານການປະຊຸມ ຫຼື ຜ່ານການໄກ່ເກັ່ຽ) ແລະອອກຄຳຕັດສິນເປັນລາຍລັກອັກສອນພາຍໃນ 45 ວັນ ຕາມປະຕິທິນ ຫຼັງຈາກສິ້ນສຸດໄລຍະເວລາການແກ້ໄຂບັນຫາແລ້ວ, ດັ່ງທີ່ອະທິບາຍໄວ້ໃນເອກະສານສະບັບນີ້ ພາຍໃຕ້ຫົວຂໍ້ ຂະບວນການແກ້ໄຂບັນຫາ, ເວັ້ນແຕ່ວ່າ ເຈົ້າໜ້າທີ່ພິຈາລະນາຄະດີ ອະນຸຍາດໃຫ້ຂະຫຍາຍເວລາ ອອກໄປໄດ້ເປັນການສະເພາະ ຕາມຄຳຮ້ອງຂໍຂອງທ່ານ ຫຼື ຂອງເຂດໂຮງຮຽນ.

ຄຳຮ້ອງທຸກຕໍ່ຣັຖ ແລະຄຳຮ້ອງທຸກຕາມຫຼັກນິຕິທັມ, ການແກ້ໄຂບັນຫາ ແລະຂັ້ນຕອນການພິຈາລະນາຄະດີ ແມ່ນອະທິບາຍເພີ່ມເຕີມໄວ້ຢ່າງລະອຽດລຸ່ມນີ້. SEA ຕ້ອງພັດທະນາຮູບແບບວິທີການ ເພື່ອຊ່ວຍທ່ານໃນ ການຍື່ນຄຳຮ້ອງທຸກຕາມຫຼັກນິຕິທັມ ແລະຊ່ວຍທ່ານ ຫຼື ຝ່າຍອື່ນໆ ໃນການຍື່ນຄຳຮ້ອງທຸກຕໍ່ຣັຖ ດັ່ງທີ່ ອະທິ ບາຍໄວ້ໃນຫົວຂໍ້ ***ຮູບແບບພອມ.***

## ການນຳໃຊ້ລະບຽບການຮ້ອງທຸກຕໍ່ຣັຖ

### ຂໍ້ມູນທົ່ວໄປ

SEA ແຕ່ລະແຫ່ງຕ້ອງມີລະບຽບການທີ່ເປັນລາຍລັກອັກສອນສຳລັບ:

1. ການແກ້ໄຂຄຳຮ້ອງທຸກທາງການສຶກສາພິເສດໃດໆ, ລວມເຖິງ ຄຳຮ້ອງທຸກທີ່ຍື່ນໂດຍອົງການ ຫຼື ບຸກຄົນ ຈາກຣັຖອື່ນ; ແລະ
2. ການຍື່ນຄຳຮ້ອງທຸກຕໍ່ SEA.
3. ແຈກຢາຍລະບຽບການຮ້ອງທຸກທໍ່ອຣັຖໃຫ້ແກ່ບັນດາພໍ່ແມ່ ແລະບຸກຄົນອື່ນໆ ທີ່ສົນໃຈ, ລວມເຖິງ ການຝຶກອົບຮົມພໍ່ແມ່ ແລະສູນຂໍ້ມູນຕ່າງໆ, ອົງການທີ່ປົກປ້ອງແລະຊ່ວຍເຫຼືອຕ່າງໆ, ສູນຢູ່ອາໄສ ແບບເປັນອິດສະຫຼະ, ແລະໜ່ວຍງານທີ່ເໝາະສົມອື່ນໆ.

### ການບັນເທົາຍຽວຍາສຳລັບການຖືກປະຕິເສດການບໍລິການທີ່ເໝາະສົມ

ໃນການແກ້ໄຂຄຳຮ້ອງທຸກຕໍ່ຣັຖ ຊຶ່ງທາງ SEA ໄດ້ພົບວ່າ ບົກພ່ອງໃນການຈັດຫາການບໍລິການທີ່ ເໝາະ ສົມໃຫ້, ທາງ SEA ຕ້ອງຈັດການແກ້ໄຂ:

1. ຄວາມບົກພ່ອງໃນການຈັດຫາການບໍລິການທີ່ເໝາະສົມ, ລວມເຖິງ ການດຳເນີນການແກ້ໄຂໃຫ້ ຖືກຕ້ອງແລະເໝາະສົມ ເພື່ອສະໜອງຕອບຕໍ່ຄວາມຕ້ອງການຂອງເດັກ (ເຊັ່ນ ການບໍລິການ ຊົດເຊີຍ ຫຼື ການໃຊ້ຄືນເປັນເງິນ); <u>ແລະ</u>
2. ການຈັດຫາການບໍລິການທີ່ເໝາະສົມໃນອະນາຄົດສຳລັບເດັກພິການທຸກຄົນ.

## ລະບຽບການຮ້ອງທຸກຕໍ່ຣັຖຂັ້ນຕ່ຳສຸດ

### ຂໍ້ຈຳກັດດ້ານເວລາ; ຂັ້ນຕອນຂັ້ນຕ່ຳສຸດ

SEA ແຕ່ລະແຫ່ງຕ້ອງລະບຸໃນລະບຽບການຮ້ອງທຸກຕໍ່ຣັຖ ກ່ຽວກັບການຈຳກັດເວລາ 60 ວັນຕາມປະຕິທິນ ຫຼັງຈາກການຍື່ນຄຳຮ້ອງທຸກ ເພື່ອ:

1. ດຳເນີນການສືບສວນໃນສະຖານທີ່ນັ້ນຢ່າງເປັນອິດສະຫຼະ, ຖ້າ SEA ຕັດສິນວ່າ ຈຳເປັນ ຕ້ອງມີການສືບສວນ;

2. ໃຫ້ຜູ້ຮ້ອງທຸກໄດ້ມີໂອກາດຍື່ນຂໍ້ມູນເພີ່ມເຕີມ, ທັງໂດຍວາຈາ ຫຼື ເປັນລາຍລັກອັກສອນ, ກ່ຽວກັບ ຂໍ້ກ່າວຫາໃນຄໍາຮ້ອງທຸກ;
3. ໃຫ້ໂອກາດແກ່ເຂດໂຮງຮຽນ ຫຼື ອົງການສາທາລະນະອື່ນໆ ໃນການຕອບຮັບຄໍາຮ້ອງທຸກ, ລວມເຖິງ, ໃນຂັ້ນຕໍ່າສຸດ: (a) ທາງເລືອກຂອງອົງການ, ຂໍ້ສະເໜີໃນການແກ້ໄຂຄໍາຮ້ອງທຸກ; **<u>ແລະ</u>** (b) ໂອກາດສໍາລັບພໍ່ແມ່ທີ່ຍື່ນຄໍາຮ້ອງທຸກ ແລະອົງການ ເພື່ອໃຫ້ຕົກລົງກັນໂດຍຄວາມສະໝັກໃຈໃນການເຂົ້າຮ່ວມການໄກ່ເກັ່ຍກັນ;
4. ກວດກາຄືນຂໍ້ມູນທີ່ກ່ຽວຂ້ອງທັງໝົດ ແລະເຮັດການຕັດສິນໃຈຢ່າງເປັນອິດສະຫຼະວ່າ ເຂດໂຮງຮຽນ ຫຼື ອົງການສາທາລະນະອື່ນໆ ກໍາລັງລະເມີດຂໍ້ກໍານົດຂອງພາກ B ຂອງ IDEA ຫຼືບໍ່; **<u>ແລະ</u>**
5. ອອກໜັງສືຄໍາຕັດສິນຕໍ່ຄໍາຮ້ອງທຸກ ທີ່ຕອບຂໍ້ກ່າວຫາແຕ່ລະຂໍ້ທີ່ຢູ່ໃນຄໍາຮ້ອງທຸກ ພ້ອມດ້ວຍ (a) ການຄົ້ນພົບຂໍ້ເທັດຈິງ ແລະຂໍ້ສະຫຼຸບ; **<u>ແລະ</u>** (b) ເຫດຜົນສໍາລັບຄໍາຕັດສິນຊີ້ຂາດຂອງ SEA.

**ການຂະຫຍາຍເວລາ; ຄໍາຕັດສິນຊີ້ຂາດ; ການດໍາເນີນການ**

ລະບຽບການຂອງອົງການທາງການສຶກສາຂອງຣັຖທີ່ໄດ້ອະທິບາຍໄວ້ຂ້າງເທິງນີ້ຍັງຕ້ອງ:

1. ອະນຸຍາດໃຫ້ຂະຫຍາຍເວລາອອກໄປໄດ້ 60 ວັນຕາມປະຕິທິນ ສະເພາະ ຖ້າວ່າ: (a) ເກີດສະພາບການທີ່ເປັນຂໍ້ຍົກເວັ້ນທີ່ກ່ຽວຂ້ອງກັບຄໍາຮ້ອງທຸກຕໍ່ຣັຖໂດຍສະເພາະ; **<u>ຫຼື</u>** (b) ທ່ານ ແລະເຂດໂຮງຮຽນ ຫຼື ອົງການສາທາລະນະອື່ນໆ ທີ່ກ່ຽວຂ້ອງ ເຫັນດີນໍາກັນດ້ວຍຄວາມສະໝັກໃຈທີ່ຈະຂະຫຍາຍເວລາອອກໄປເພື່ອແກ້ໄຂບັນຫາຜ່ານຂັ້ນຕອນການໄກ່ເກັ່ຍ ຫຼື ຂັ້ນຕອນການແກ້ໄຂໃນລະດັບທ້ອງຖິ່ນ.
2. ລວມມີລະບຽບການສໍາລັບການດໍາເນີນການທີ່ມີປະສິດທິພາບ ຕາມຄໍາຕັດສິນຊີ້ຂາດຂອງ SEA, ຖ້າວ່າ ຈໍາເປັນ, ລວມເຖິງ: (a) ກິດຈະກໍາການຊ່ວຍເຫຼືອທາງເຕັກນິກ; (b) ການເຈລະຈາ; **<u>ແລະ</u>** (c) ການດໍາເນີນການແກ້ໄຂໃຫ້ຖືກຕ້ອງ ເພື່ອໃຫ້ບັນລຸຜົນ.

**ຄໍາຮ້ອງທຸກຕໍ່ຣັຖ ແລະການພິຈາລະນາຄະດີຕາມຫຼັກນິຕິທັມ**

ຖ້າວ່າ ໜັງສືຄໍາຮ້ອງທຸກຕໍ່ຣັຖທີ່ໄດ້ຮັບນັ້ນ ຍັງມີປະເດັນທີ່ຢູ່ໃນການພິຈາລະນາຄະດີຕາມຫຼັກນິຕິທັມດ້ວຍດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ການຍື່ນຄໍາຮ້ອງທຸກຕາມຫຼັກນິຕິທັມ***, ຫຼື ຄໍາຮ້ອງທຸກຕໍ່ຣັຖນັ້ນມີຫຼາຍ ປະເດັນ ຊຶ່ງມີໜຶ່ງປະເດັນ ຫຼືຫຼາຍປະເດັນ ເປັນສ່ວນໜຶ່ງຂອງການພິຈາລະນາຄະດີດັ່ງກ່າວ, ຣັຖຕ້ອງແຍກປະເດັນໃດໆ ທີ່ຢູ່ໃນການພິຈາລະນາຄະດີຕາມຫຼັກນິຕິທັມອອກໄວ້ກ່ອນ ຈົນກວ່າການພິຈາລະນາຄະດີຈະຜ່ານພົ້ນໄປແລ້ວ. ປະເດັນໃດໆ ທີ່ຢູ່ໃນຄໍາຮ້ອງທຸກຕໍ່ຣັຖ ຊຶ່ງບໍ່ແມ່ນພາກສ່ວນໜຶ່ງຂອງການພິຈາລະນາຄະດີຕາມຫຼັກນິຕິທັມ ຕ້ອງໄດ້ຖືກແກ້ໄຂ ໂດຍນໍາໃຊ້ການກໍານົດເວລາ ແລະລະບຽບການດັ່ງທີ່ອະທິບາຍໄວ້ ຂ້າງເທິງ.

ຖ້າວ່າ ປະເດັນທີ່ຍົກຂຶ້ນມາໃນຄໍາຮ້ອງທຸກຕໍ່ຣັຖນັ້ນ ໄດ້ເຄີຍຖືກຕັດສິນມາກ່ອນແລ້ວໃນການພິຈາລະນາຄະດີຕາມຫຼັກນິຕິທັມ ຊຶ່ງກ່ຽວພັນກັບຄູ່ຄວາມຝ່າຍເກົ່າ (ຍົກຕົວຢ່າງ, ທ່ານ ແລະເຂດໂຮງຮຽນ), ສະນັ້ນ ຄໍາຕັດສິນຈາກການພິຈາລະນາຄະດີຕາມຫຼັກນິຕິທັມຈະຜູກມັດກັບປະເດັນນັ້ນ ແລະ SEA ຕ້ອງແຈ້ງ ຜູ້ຮ້ອງທຸກວ່າ ຄໍາຕັດສິນນັ້ນມີຜົນຜູກມັດ.

ຄໍາຮ້ອງທຸກທີ່ກ່າວຫາເຂດໂຮງຮຽນ ຫຼື ອົງການສາທາລະນະອື່ນໆ ວ່າບົກຜ່ອງໃນການດໍາເນີນການຕາມຄໍາຕັດສິນຂອງການພິຈາລະນາຄະດີຕາມຫຼັກນິຕິທັມ ຕ້ອງໄດ້ຖືກແກ້ໄຂໂດຍທາງ SEA.

## ການຍື່ນຄຳຮ້ອງທຸກຕໍ່ຣັຖ

ອົງການ ຫຼື ບຸກຄົນສາມາດຍື່ນໜັງສືຄຳຮ້ອງທຸກຕໍ່ຣັຖທີ່ລົງລາຍເຊັນໄວ້ແລ້ວ ພາຍໃຕ້ລະບຽບການທີ່ອະທິບາຍໄວ້ຂ້າງເທິງ.

ຄຳຮ້ອງທຸກຕໍ່ຣັຖຕ້ອງລວມມີ:

1. ຄຳຖະແຫຼງທີ່ບອກວ່າ ເຂດໂຮງຮຽນ ຫຼື ອົງການສາທາລະນະອື່ນໆ ໄດ້ລະເມີດຂໍ້ກຳນົດຂອງພາກ B ຂອງ IDEA ຫຼື ກົດຂໍ້ບັງຄັບການດຳເນີນການໃນ 34 CFR ພາກ 300;
2. ຂໍ້ເທັດຈິງທີ່ເປັນພື້ນຖານຂອງຄຳຖະແຫຼງ;
3. ລາຍເຊັນ ແລະຂໍ້ມູນສຳລັບຕິດຕໍ່ ສຳລັບຝ່າຍທີ່ຍື່ນຄຳຮ້ອງທຸກ; ແລະ
4. ຖ້າວ່າ ການລະເມີດທີ່ກ່າວຫານັ້ນກ່ຽວຂ້ອງສະເພາະກັບເດັກຄົນໜຶ່ງ:
   (a) ຊື່ຂອງເດັກ ແລະທີ່ຢູ່ທີ່ເປັນບ່ອນຢູ່ອາໄສຂອງເດັກ;
   (b) ຊື່ຂອງໂຮງຮຽນທີ່ເດັກໄປຮຽນ;
   (c) ໃນກໍລະນີຂອງເດັກ ຫຼືໄວໜຸ່ມທີ່ບໍ່ມີເຮືອນຢູ່, ໃຫ້ບອກຂໍ້ມູນສຳລັບຕິດຕໍ່ທີ່ມີ, ແລະຊື່ຂອງໂຮງຮຽນທີ່ເດັກໄປຮຽນ;
   (d) ລາຍລະອຽດລັກສະນະບັນຫາຂອງເດັກ, ລວມເຖິງ ຂໍ້ເທັດຈິງທີ່ກ່ຽວພັນກັບບັນຫາ; **<u>ແລະ</u>**
   (e) ຂໍ້ສະເໜີໃນການແກ້ໄຂບັນຫາໃນຂອບເຂດທີ່ຮູ້ ແລະມີໃຫ້ແກ່ຄູ່ຄວາມຝ່າຍທີ່ຍື່ນຄຳຮ້ອງທຸກໃນເວລາທີ່ມີການຍື່ນຄຳຮ້ອງທຸກ.

ຄຳຮ້ອງທຸກຕ້ອງກ່າວອ້າງການລະເມີດທີ່ໄດ້ເກີດຂຶ້ນ ຊຶ່ງມີໄລຍະເວລາບໍ່ເກີນໜຶ່ງປີ ກ່ອນໜ້າວັນທີທີ່ໄດ້ຮັບຄຳຮ້ອງທຸກ ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ການນຳໃຊ້ລະບຽບການຮ້ອງທຸກຕໍ່ຣັຖ*** .

ຄູ່ຄວາມຝ່າຍທີ່ຍື່ນຄຳຮ້ອງທຸກຕໍ່ຣັຖ ຕ້ອງສົ່ງສຳເນົາຂອງຄຳຮ້ອງທຸກໃຫ້ແກ່ເຂດໂຮງຮຽນ ຫຼື ອົງການສາທາລະນະອື່ນໆ ທີ່ຮັບໃຊ້ເດັກໃນເວລາດຽວກັນກັບທີ່ໄດ້ຍື່ນຄຳຮ້ອງທຸກກັບ SEA.

# ລະບຽບການຮ້ອງທຸກຕາມຫຼັກນິຕິທັມ

## ການຍື່ນຄຳຮ້ອງທຸກຕາມຫຼັກນິຕິທັມ

### ຂໍ້ມູນທົ່ວໄປ

ທ່ານ ຫຼື ເຂດໂຮງຮຽນສາມາດຮ້ອງຂໍໃຫ້ມີການພິຈາລະນາຄະດີຕາມຫຼັກນິຕິທັມໃນເລື່ອງໃດໆ ກໍຕາມທີ່ກ່ຽວພັນກັບຂໍ້ສະເໜີ ຫຼື ຂໍ້ປະຕິເສດທີ່ຈະລິເລີ່ມ ຫຼື ປ່ຽນແປງເອກະລັກບຸກຄົນ, ການປະເມີນຜົນ ຫຼື ການຈັດວາງທາງການສຶກສາໃຫ້ແກ່ລູກຂອງທ່ານ, ຫຼື ການຈັດຫາການສຶກສາຂອງຣັຖທີ່ເໝາະສົມແລະບໍ່ເສັຽຄ່າ (FAPE) ໃຫ້ແກ່ລູກຂອງທ່ານ.

ການຮ້ອງທຸກຕາມຫຼັກນິຕິທັມ ຕ້ອງກ່າວອ້າງການລະເມີດທີ່ໄດ້ເກີດຂຶ້ນ ຊຶ່ງມີໄລຍະເວລາບໍ່ເກີນສອງປີກ່ອນໜ້າທີ່ທ່ານ ຫຼື ເຂດໂຮງຮຽນໄດ້ຮູ້ ຫຼື ຄວນໄດ້ຮູ້ ກ່ຽວກັບການກະທຳທີ່ຖືກກ່າວຫາ ຊຶ່ງເປັນພື້ນຖານຂອງການຮ້ອງທຸກນີ້.

ກຳນົດເວລາຂ້າງເທິງນີ້ ນຳໃຊ້ບໍ່ໄດ້ກັບທ່ານ ຖ້າວ່າ ທ່ານບໍ່ສາມາດຍື່ນຄຳຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມພາຍໃນຂອບເວລາທີ່ກຳນົດໄວ້ ເນື່ອງຈາກ:

1. ເຂດໂຮງຮຽນໄດ້ເຮັດໃຫ້ເຂົ້າໃຈຜິດຢ່າງຊັດເຈນວ່າ ເຂົາເຈົ້າໄດ້ແກ້ບັນຫາທີ່ບົ່ງໄວ້ໃນຄຳຮ້ອງທຸກແລ້ວ; **<u>ຫຼື</u>**
2. ເຂດໂຮງຮຽນໄດ້ປິດບັງຂໍ້ມູນຈາກທ່ານທີ່ວ່າ ເຂົາເຈົ້າມີໜ້າທີ່ໃນການຈັດຫາໃຫ້ແກ່ທ່ານພາຍໃຕ້ພາກ B ຂອງ IDEA.

### ຂໍ້ມູນສຳລັບພໍ່ແມ່

ODE ຈະແຈ້ງໃຫ້ທ່ານຮູ້ກ່ຽວກັບຄ່າບໍລິການທາງກົດໝາຍ ແລະການບໍລິການທີ່ກ່ຽວຂ້ອງອື່ນໆ ທີ່ບໍ່ເສັຽຄ່າ ຫຼືລາຄາຖືກ ທີ່ມີໃຫ້ໃນເຂດພື້ນທີ່ຂອງທ່ານ ຖ້າວ່າ ທ່ານຮ້ອງຂໍເອົາຂໍ້ມູນດັ່ງກ່າວ. ເຂດໂຮງຮຽນຕ້ອງໃຫ້ ຂໍ້ມູນດັ່ງກ່າວແກ່ທ່ານ ຖ້າວ່າ ທ່ານຮ້ອງຂໍ ຫຼື ທ່ານ ຫຼື ເຂດໂຮງຮຽນຍື່ນຄຳຮ້ອງທຸກຕາມຫຼັກນິຕິທັມ.

## ການຮ້ອງທຸກຕາມຫຼັກນິຕິທັມ (DUE PROCESS COMPLAINT)

### ຂໍ້ມູນທົ່ວໄປ

ໃນການຮ້ອງຂໍເອົາການພິຈາລະນາຄະດີ, ທ່ານ ຫຼື ເຂດໂຮງຮຽນ (ຫຼື ທະນາຍຄວາມຂອງທ່ານ ຫຼື ທະນາຍຄວາມຂອງເຂດໂຮງຮຽນ) ຕ້ອງສົ່ງຄຳຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມໃຫ້ແກ່ຄູ່ຄວາມອີກຝ່າຍໜຶ່ງ. ຄຳຮ້ອງຂໍເອົາການພິຈາລະນາຄະດີ ຕ້ອງມີເນື້ອໃນທັງໝົດທີ່ບົ່ງໄວ້ຂ້າງລຸ່ມ ແລະຕ້ອງເກັບເປັນຄວາມລັບ.

ໃຜກໍຕາມທີ່ຍື່ນຄຳຮ້ອງທຸກ ຕ້ອງຈັດຫາສຳເນົາຂອງຄຳຮ້ອງຂໍເອົາການພິຈາລະນາຄະດີໃຫ້ແກ່ SEA ດ້ວຍ.

### ເນື້ອໃນຄຳຮ້ອງຂໍເອົາການພິຈາລະນາຄະດີ

ຄຳຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມ ຕ້ອງລວມມີ:

1. ຊື່ຂອງເດັກ;
2. ທີ່ຢູ່ອາໄສຂອງເດັກ;
3. ຊື່ໂຮງຮຽນຂອງເດັກ;
4. ຖ້າວ່າ ເດັກບໍ່ມີເຮືອນຢູ່, ຂໍ້ມູນສຳລັບຕິດຕໍ່ຂອງເດັກ ແລະຊື່ໂຮງຮຽນຂອງເດັກ;

5. ລາຍລະອຽດລັກສະນະບັນຫາຂອງເດັກທີ່ກ່ຽວພັນກັບການດຳເນີນການທີ່ສະເໜີ ຫຼື ປະຕິເສດ, ລວມເຖິງ ຂໍ້ເທັດຈິງທີ່ກ່ຽວພັນກັບບັນຫາ; **<u>ແລະ</u>**
6. ການແກ້ໄຂບັນຫາທີ່ສະເໜີໃນຂອບເຂດທີ່ຮູ້ ແລະມີໃຫ້ແກ່ຝ່າຍທີ່ຮ້ອງທຸກ (ທ່ານ ຫຼື ເຂດໂຮງຮຽນ) ໃນເວລານັ້ນ.

ທ່ານ ຫຼື ເຂດໂຮງຮຽນບໍ່ສາມາດມີການພິຈາລະນາຄະດີຕາມຫຼັກນິຕິທັມໄດ້ ຈົນກວ່າທ່ານ ຫຼື ເຂດໂຮງຮຽນ (ຫຼື ທະນາຍຄວາມຂອງທ່ານ ຫຼື ທະນາຍຄວາມຂອງເຂດໂຮງຮຽນ) ຈະຍື່ນຄຳຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມ ທີ່ລວມເຖິງ ຂໍ້ມູນທີ່ບົ່ງໄວ້ຂ້າງເທິງ.

**ຄວາມພໍພຽງຂອງຄຳຮ້ອງຂໍເອົາການພິຈາລະນາຄະດີ**

ການຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມນັ້ນຈະດຳເນີນຕໍ່ໄປໄດ້, ມັນຈະຕ້ອງມີຂໍ້ມູນທີ່ພຽງພໍ. ຄຳຮ້ອງຂໍເອົາການພິຈາລະນາຄະດີຈະຖືວ່າພໍພຽງ (ມີຂໍ້ມູນພຽງພໍຕາມຂໍ້ກຳນົດຂ້າງເທິງ) ເວັ້ນແຕ່ວ່າ ຄູ່ຄວາມຝ່າຍທີ່ຮັບຄຳຮ້ອງຂໍເອົາການພິຈາລະນາຄະດີ (ທ່ານ ຫຼື ເຂດໂຮງຮຽນ) ແຈ້ງຕໍ່ເຈົ້າໜ້າທີ່ພິຈາລະນາຄະດີ ແລະຄູ່ຄວາມອີກຝ່າຍໜຶ່ງ, ພາຍໃນ 15 ວັນຕາມປະຕິທິນ ນັບແຕ່ໄດ້ຮັບຄຳຮ້ອງທຸກ, ວ່າ ຄູ່ຄວາມຝ່າຍທີ່ໄດ້ຮັບເລື່ອງນັ້ນ ເຊື່ອວ່າຄຳຮ້ອງຂໍເອົາການພິຈາລະນາຄະດີບໍ່ມີເງື່ອນໄຂເໝາະສົມຕາມຂໍ້ກຳນົດທີ່ບົ່ງໄວ້ຂ້າງເທິງ.

ພາຍໃນຫ້າວັນຕາມປະຕິທິນທີ່ໄດ້ຮັບແຈ້ງການວ່າ ຄູ່ຄວາມຝ່າຍທີ່ໄດ້ຮັບເລື່ອງ (ທ່ານ ຫຼື ເຂດໂຮງຮຽນ) ພິຈາລະນາເຫັນວ່າ ຄຳຮ້ອງທຸກຕາມຫຼັກນິຕິທັມນັ້ນບໍ່ພຽງພໍ, ເຈົ້າໜ້າທີ່ພິຈາລະນາຄະດີຕ້ອງຕັດສິນວ່າ ຄຳຮ້ອງທຸກນັ້ນເປັນໄປຕາມຂໍ້ກຳນົດທີ່ບົ່ງໄວ້ຂ້າງເທິງຫຼືບໍ່, ແລະແຈ້ງໃຫ້ທ່ານ ແລະເຂດໂຮງຮຽນຮູ້ເປັນລາຍລັກອັກສອນທັນທີ.

**ການແກ້ໄຂຄຳຮ້ອງຂໍເອົາການພິຈາລະນາຄະດີ**

ທ່ານ ຫຼື ເຂດໂຮງຮຽນສາມາດປ່ຽນແປງຄຳຮ້ອງຂໍເອົາການພິຈາລະນາຄະດີໄດ້ສະເພາະວ່າ:

1. ຄູ່ຄວາມອີກຝ່າຍໜຶ່ງອະນຸມັດການປ່ຽນແປງຕ່າງໆ ຢ່າງເປັນລາຍລັກອັກສອນ ແລະໄດ້ຮັບ ໂອກາດໃນການແກ້ໄຂຄຳຮ້ອງຂໍເອົາການພິຈາລະນາຄະດີ ຜ່ານການປະຊຸມແກ້ໄຂບັນຫາ, ດັ່ງທີ່ ອະທິບາຍໄວ້ໃນຫົວຂໍ້ ***ຂະບວນການແກ້ໄຂບັນຫາ***; **<u>ຫຼື</u>**
2. ພາຍໃນຫ້າວັນກ່ອນເລີ່ມການພິຈາລະນາຄະດີຕາມຫຼັກນິຕິທັມ, ເຈົ້າໜ້າທີ່ພິຈາລະນາຄະດີໃຫ້ອະນຸຍາດໃນການດຳເນີນການປ່ຽນແປງໄດ້.

ຖ້າຄູ່ຄວາມຝ່າຍທີ່ຮ້ອງທຸກ (ທ່ານ ຫຼື ເຂດໂຮງຮຽນ) ເຮັດການປ່ຽນແປງຕໍ່ກັບຄຳຮ້ອງຂໍເອົາການພິຈາລະນາຄະດີ, ຂອບເຂດກຳນົດເວລາສຳລັບການປະຊຸມແກ້ໄຂບັນຫາ (ພາຍໃນ 15 ວັນຕາມປະຕິທິນ ນັບແຕ່ໄດ້ຮັບຄຳຮ້ອງຂໍເອົາການພິຈາລະນາຄະດີ) ແລະຊ່ວງເວລາສຳລັບການແກ້ໄຂບັນຫາ (ພາຍໃນ 30 ວັນນັບແຕ່ໄດ້ຮັບຄຳຮ້ອງຂໍເອົາການພິຈາລະນາຄະດີ) ຈະເລີ່ມຕົ້ນອີກຄັ້ງໃນວັນທີທີ່ມີການຍື່ນຄຳຮ້ອງທຸກທີ່ແກ້ໄຂໃໝ່.

**ເຂດໂຮງຮຽນຕອບຮັບຕໍ່ຄຳຮ້ອງທຸກຕາມຫຼັກນິຕິທັມ**

ຖ້າວ່າ ເຂດໂຮງຮຽນບໍ່ໄດ້ສົ່ງໜັງສືແຈ້ງການໃຫ້ແກ່ທ່ານລ່ວງໜ້າ, ຕາມທີ່ອະທິບາຍໄວ້ໃນຫົວຂໍ້ ***ໜັງສືແຈ້ງການລ່ວງໜ້າ*** , ກ່ຽວກັບເລື່ອງທີ່ຢູ່ໃນຄຳຮ້ອງທຸກຂອງທ່ານ, ເຂດໂຮງຮຽນຕ້ອງສົ່ງຄຳຕອບໃຫ້ແກ່ທ່ານພາຍໃນ 10 ວັນຕາມປະຕິທິນ ນັບແຕ່ໄດ້ຮັບຄຳຮ້ອງຂໍເອົາການພິຈາລະນາຄະດີ ຊຶ່ງລວມມີ:

1. ຄຳອະທິບາຍວ່າ ເປັນຫຍັງເຂດໂຮງຮຽນຈຶ່ງໄດ້ສະເໜີ ຫຼື ປະຕິເສດທີ່ຈະດຳເນີນການໃນສິ່ງທີ່ເປັນ ປະເດັນໃນຄຳຮ້ອງທຸກ;
2. ລາຍລະອຽດຂອງທາງເລືອກອື່ນໆ ທີ່ທີມໂຄງການການສຶກສາສະເພາະບຸກຄົນ (IEP) ໄດ້ພິຈາລະນາໄວ້ ແລະເຫດຜົນຕ່າງໆ ວ່າເປັນຫຍັງທາງເລືອກເຫຼົ່ານັ້ນຈຶ່ງຖືກປະຕິເສດ;
3. ລາຍລະອຽດກ່ຽວກັບລະບຽບການປະເມີນຜົນແຕ່ລະອັນ, ການຕີລາຄາ, ບັນທຶກ, ຫຼື ລາຍງານທີ່ເຂດໂຮງຮຽນໄດ້ນຳໃຊ້ເປັນພື້ນຖານສຳລັບການດຳເນີນການທີ່ໄດ້ສະເໜີ ຫຼື ປະຕິເສດ; **<u>ແລະ</u>**

4. ລາຍລະອຽດກ່ຽວກັບປັດໃຈອື່ນໆ ທີ່ກ່ຽວພັນກັບການດຳເນີນການຂອງເຂດໂຮງຮຽນທີ່ໄດ້ສະເໜີ ຫຼື ປະຕິເສດ.

ການໃຫ້ຂໍ້ມູນຕາມລາຍການທີ 1-4 ຂ້າງເທິງນີ້ ບໍ່ແມ່ນການກີດກັນເຂດໂຮງຮຽນຈາກການກ່າວວ່າ ຄຳຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທຳຂອງທ່ານນັ້ນແມ່ນບໍ່ພຽງພໍ.

**ຄູ່ຄວາມຝ່າຍອື່ນໆ ຕອບຮັບຕໍ່ຄຳຮ້ອງທຸກຕາມຫຼັກນິຕິທຳ**

ຍົກເວັ້ນແຕ່ໄດ້ລະບຸໄວ້ໃນຫົວຂໍ້ຍ່ອຍຂ້າງເທິງນີ້, ***ເຂດໂຮງຮຽນຕອບຮັບຕໍ່ຄຳຮ້ອງທຸກຕາມຫຼັກນິຕິທຳ***, ຄູ່ຄວາມຝ່າຍທີ່ໄດ້ຮັບຄຳຮ້ອງຂໍເອົາການພິຈາລະນາຄະດີຕ້ອງສົ່ງຄຳຕອບໃຫ້ແກ່ຄູ່ຄວາມອີກຝ່າຍໜຶ່ງພາຍໃນ 10 ວັນຕາມປະຕິທິນ ນັບແຕ່ໄດ້ຮັບຄຳຮ້ອງຂໍເອົາການພິຈາລະນາຄະດີ ໂດຍບອກເຖິງປະເດັນສະເພາະທີ່ຢູ່ໃນຄຳຮ້ອງຂໍເອົາການພິຈາລະນາຄະດີ.

## ຮູບແບບຟອມ

SEA ຕ້ອງພັດທະນາຮູບແບບຟອມເພື່ອຊ່ວຍທ່ານໃນການຍື່ນຄຳຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທຳ ແລະເພື່ອຊ່ວຍທ່ານ ແລະຝ່າຍອື່ນໆ ໃນການຍື່ນຄຳຮ້ອງທຸກຕໍ່ຣັຖ. ຢ່າງໃດກໍ່ຕາມ, ຣັຖຂອງທ່ານ ຫຼື ເຂດໂຮງຮຽນ ອາດບໍ່ຮຽກຮ້ອງໃຫ້ ນຳໃຊ້ຮູບແບບຟອມເຫຼົ່ານີ້. ໃນຄວາມເປັນຈິງແລ້ວ, ທ່ານສາມາດນຳໃຊ້ແບບຟອມຂອງຣັຖ ຫຼື ແບບຟອມທີ່ເໝາະສົມອື່ນໄດ້, ຕາບໃດທີ່ແບບຟອມນັ້ນມີຂໍ້ມູນຕາມທີ່ກຳນົດໄວ້ສຳລັບການຍື່ນຄຳຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທຳ ຫຼື ຄຳຮ້ອງທຸກຕໍ່ຣັຖ.

## ການກຳນົດບ່ອນຮຽນໃຫ້ເດັກ ໃນຂະນະທີ່ການຮ້ອງທຸກຕາມຫຼັກນິຕິທຳ ແລະການພິຈາລະນາຄະດີຍັງຄ້າງຄາຢູ່.

ຍົກເວັ້ນແຕ່ໄດ້ກຳນົດໄວ້ຂ້າງລຸ່ມໃນຫົວຂໍ້ ***ລະບຽບການເມື່ອ ດຳເນີນການທາງວິໄນຕໍ່ເດັກພິການ,*** ເມື່ອຄຳຮ້ອງຂໍເອົາການພິຈາລະນາຄະດີໄດ້ຖືກສົ່ງໃຫ້ແກ່ຄູ່ຄວາມອີກຝ່າຍໜຶ່ງ, ໃນລະຫວ່າງຊ່ວງເວລາຂອງຂັ້ນຕອນການແກ້ໄຂບັນຫາ, ແລະໃນຂະນະລໍຖ້າຄຳຕັດສິນຂອງການພິຈາລະນາຄະດີ ຫຼື ການດຳເນີນຄະດີຂອງສານ, ລູກຂອງທ່ານຕ້ອງຍັງຢູ່ໃນບ່ອນຮຽນທີ່ຮຽນຢູ່ໃນປັດຈຸບັນຕໍ່ໄປ, ເວັ້ນແຕ່ວ່າທ່ານ ແລະເຂດໂຮງຮຽນຈະເຫັນດີເປັນແບບອື່ນ.

ຖ້າວ່າຄຳຮ້ອງທຸກຕາມຫຼັກນິຕິທຳ ກ່ຽວພັນກັບການສະໝັກເຂົ້າຮຽນຄັ້ງທຳອິດໃນໂຮງຮຽນພາກຣັຖ, ລູກຂອງທ່ານ, ພ້ອມດ້ວຍຄວາມຍິນຍອມຂອງທ່ານ, ຕ້ອງໄດ້ຖືກຈັດໃຫ້ຢູ່ໃນໂຄງການຮ່ຳຮຽນປົກກະຕິຂອງໂຮງຮຽນພາກຣັຖ ຈົນກວ່າການດຳເນີນການດັ່ງກ່າວຂ້າງເທິງທັງໝົດຈະສຳເລັດຮຽບຮ້ອຍ.

ຖ້າວ່າ ການຮ້ອງທຸກຕາມຫຼັກນິຕິທຳກ່ຽວພັນກັບການສະໝັກຂໍຮັບການບໍລິການເບື້ອງຕົ້ນພາຍໃຕ້ພາກ B ຂອງ IDEA ສຳລັບເດັກທີ່ພວມຍົກຍ້າຍຈາກການຮັບບໍລິການພາຍໃຕ້ພາກ C ຂອງ IDEA ໄປຫາພາກ B ຂອງ IDEA ແລະບໍ່ມີສິດອີກຕໍ່ໄປສຳລັບການບໍລິການໃນພາກ C ເນື່ອງຈາກເດັກໄດ້ມີອາຍຸຮອດສາມປີ, ເຂດໂຮງຮຽນກໍບໍ່ຈຳເປັນຕ້ອງໃຫ້ການບໍລິການພາຍໃຕ້ພາກ C ທີ່ເດັກເຄີຍໄດ້ຮັບ. ຖ້າພົບວ່າ ເດັກມີສິດພາຍໃຕ້ພາກ B ຂອງIDEA ແລະທ່ານຍິນຍອມໃຫ້ລູກຂອງທ່ານຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງໃນຄັ້ງທຳອິດ, ຈາກນັ້ນ, ລໍຖ້າຜົນການພິຈາລະນາຄະດີ, ທາງເຂດໂຮງຮຽນຕ້ອງໃຫ້ການສຶກສາພິເສດເຫຼົ່ານັ້ນ ແລະການບໍລິການທີ່ກ່ຽວຂ້ອງ ທີ່ບໍ່ໄດ້ຢູ່ໃນຂໍ້ໂຕ້ແຍ້ງ (ການບໍລິການທີ່ທ່ານ ແລະເຂດໂຮງຮຽນເຫັນດີນຳກັນ). ຖ້າເຈົ້າໜ້າທີ່ພິຈາລະນາຄະດີໃນການພິຈາລະນາຄະດີຕາມຫຼັກນິຕິທຳ ຊຶ່ງຈັດຂຶ້ນໂດຍອົງການດ້ານການສຶກສາຂອງຣັຖ ເຫັນດີນຳທ່ານວ່າ ການປ່ຽນແປງບ່ອນຮຽນແມ່ນເໝາະສົມ, ການກຳນົດບ່ອນຮຽນຕ້ອງເປັນບ່ອນຮຽນໃນປັດຈຸບັນຂອງລູກຂອງທ່ານ ຊຶ່ງລູກຂອງທ່ານຈະໄດ້ຮ່ຳຮຽນຕໍ່ໄປໃນຂະນະລໍຖ້າຄຳຕັດສິນຂອງການພິຈາລະນາຄະດີທີ່ເປັນກາງ ຫຼື ການດຳເນີນຄະດີໃນສານ.

## ຂັ້ນຕອນການແກ້ໄຂບັນຫາ

### ການປະຊຸມເພື່ອແກ້ໄຂບັນຫາ

ພາຍໃນ 15 ວັນຕາມປະຕິທິນ ນັບແຕ່ໄດ້ຮັບແຈ້ງການກ່ຽວກັບການຮ້ອງທຸກຕາມຫຼັກນິຕິທັມຂອງທ່ານ, ແລະກ່ອນການພິຈາລະນາຄະດີເລີ່ມຕົ້ນ, ທາງເຂດໂຮງຮຽນຕ້ອງຈັດການປະຊຸມກັບທ່ານ ແລະສະມາຊິກທີ່ກ່ຽວຂ້ອງ ຫຼື ສະມາຊິກຂອງທີມໂຄງການການສຶກສາສະເພາະບຸກຄົນ (IEP) ຊຶ່ງເປັນຜູ້ມີຄວາມຮູ້ສະເພາະກ່ຽວກັບຂໍ້ເທັດຈິງທີ່ລະບຸໄວ້ໃນຄໍາຮ້ອງທຸກຂອງທ່ານ. ການປະຊຸມ:

1. ຕ້ອງລວມມີ ຕົວແທນຂອງເຂດໂຮງຮຽນທີ່ມີອໍານາດໃນການຕັດສິນໃຈໃນນາມຂອງເຂດໂຮງຮຽນ; **<u>ແລະ</u>**
2. ຕ້ອງບໍ່ມີທະນາຍຄວາມຂອງເຂດໂຮງຮຽນ ເວັ້ນແຕ່ວ່າ ທ່ານມີທະນາຍພາມາ.

ທ່ານ ແລະເຂດໂຮງຮຽນພິຈາລະນາໃຫ້ສະມາຊິກທີ່ກ່ຽວຂ້ອງຈາກທີມ IEP ເຂົ້າຮ່ວມໃນກອງປະຊຸມ.

ຈຸດປະສົງຂອງການປະຊຸມແມ່ນເພື່ອໃຫ້ທ່ານໄດ້ປຶກສາຫາລືກ່ຽວກັບຄໍາຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມ, ແລະຂໍ້ເທັດຈິງທີ່ເປັນພື້ນຖານຂອງຄໍາຮ້ອງ, ເພື່ອວ່າ ທາງເຂດໂຮງຮຽນຈະມີໂອກາດທີ່ຈະແກ້ໄຂຂໍ້ຂັດແຍ້ງ.

ການປະຊຸມແກ້ໄຂຂໍ້ຂັດແຍ້ງແມ່ນບໍ່ຈໍາເປັນ ຖ້າວ່າ:

1. ທ່ານ ແລະເຂດໂຮງຮຽນ ເຫັນດີນໍາກັນເປັນລາຍລັກອັກສອນທີ່ຈະຍົກເລີກການປະຊຸມ; **<u>ຫຼື</u>**
2. ທ່ານ ແລະເຂດໂຮງຮຽນ ເຫັນດີນໍາກັນທີ່ຈະນໍາໃຊ້ຂັ້ນຕອນການໄກ່ເກັ່ຽ, ຕາມທີ່ອະທິບາຍໄວ້ໃນຫົວຂໍ້ ***ການໄກ່ເກັ່ຽ*** .

### ໄລຍະເວລາການແກ້ໄຂບັນຫາ

ຖ້າວ່າ ເຂດໂຮງຮຽນບໍ່ໄດ້ແກ້ໄຂບັນຫາຄໍາຮ້ອງທຸກໃນການຮ້ອງຂໍເອົາການພິຈາລະນາຄະດີ ຈົນທ່ານເພິ່ງພໍໃຈ ພາຍໃນ 30 ວັນຕາມປະຕິທິນ ນັບແຕ່ໄດ້ຮັບຄໍາຮ້ອງຂໍ (ໃນລະຫວ່າງຊ່ວງເວລາສໍາລັບຂັ້ນຕອນການແກ້ໄຂບັນຫາ), ການພິຈາລະນາຄະດີຕາມຫຼັກນິຕິທັມກໍອາດເກີດຂຶ້ນໄດ້.

ກໍານົດເວລາ 45 ວັນຕາມປະຕິທິນສໍາລັບການອອກຄໍາຕັດສິນຊີ້ຂາດ, ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້, ***ຄໍາຕັດສິນຂອງການພິຈາລະນາຄະດີ*** , ຈະເລີ່ມຕົ້ນຂຶ້ນໃນວັນທີ່ສິ້ນສຸດໄລຍະການແກ້ໄຂບັນຫາ 30 ວັນຕາມປະຕິທິນ, ພ້ອມກັບຂໍ້ຍົກເວັ້ນທີ່ແນ່ນອນສໍາລັບການປັບໄລຍະເວລາແກ້ໄຂ້ບັນຫາ 30 ຕາມ ປະຕິທິນ, ຕາມທີ່ອະທິບາຍໄວ້ຂ້າງລຸ່ມ.

ເວັ້ນແຕ່ວ່າ ທັງທ່ານ ແລະເຂດໂຮງຮຽນໄດ້ເຫັນດີນໍາກັນທີ່ຈະຍົກເລີກຂະບວນການແກ້ໄຂບັນຫາ ຫຼື ການນໍາໃຊ້ວິທີການໄກ່ເກັ່ຽ, ການບົກພ່ອງບໍ່ເຂົ້າຮ່ວມໃນການປະຊຸມແກ້ໄຂບັນຫາຂອງທ່ານຈະເຮັດໃຫ້ກໍານົດເວລາຊ້າອອກໄປອີກສໍາລັບຂະບວນການແກ້ໄຂບັນຫາ ແລະການພິຈາລະນາຄະດີຕາມຫຼັກນິຕິທັມ ຈົນກວ່າຈະມີການປະຊຸມກັນຂຶ້ນ.

ຖ້າວ່າ, ຫຼັກຈາກໄດ້ພະຍາຍາມຢ່າງສົມເຫດຜົນ ແລະໄດ້ບັນທຶກເປັນເອກະສານສໍາລັບຄວາມພະຍາຍາມດັ່ງກ່າວແລ້ວ, ເຂດໂຮງຮຽນບໍ່ສາມາດຂໍເອົາການເຂົ້າຮ່ວມຂອງທ່ານໃນການປະຊຸມແກ້ໄຂບັນຫາໄດ້, ເຂດໂຮງຮຽນອາດຮ້ອງຂໍໃຫ້ເຈົ້າໜ້າທີ່ພິຈາລະນາຄະດີຍົກເລີກຄໍາຮ້ອງຂໍເອົາການພິຈາລະນາຄະດີຂອງທ່ານ ເມື່ອສິ້ນສຸດໄລຍະແກ້ໄຂບັນຫາ 30 ຕາມປະຕິທິນແລ້ວ. ການບັນທຶກເປັນເອກະສານກ່ຽວກັບຄວາມພະຍາຍາມດັ່ງກ່າວນັ້ນ ຕ້ອງລວມມີ ບັນທຶກຄວາມພະຍາຍາມຂອງເຂດໂຮງຮຽນທີ່ຈະຈັດການເລື່ອງເວລາແລະສະຖານທີ່ທີ່ໄດ້ເຫັນດີນໍາກັນ, ເຊັ່ນ:

1. ບັນທຶກລາຍລະອຽດຂອງການໂທລະສັບຕິດຕໍ່ ຫຼື ໄດ້ພະຍາຍາມໂທຕິດຕໍ່ ແລະຜົນຂອງການໂທຕິດຕໍ່ເຫຼົ່ານັ້ນ;
2. ສໍາເນົາຂອງການສື່ສານໂຕ້ຕອບທີ່ໄດ້ສົ່ງໃຫ້ທ່ານ ແລະຄໍາຕອບໃດໆ ທີ່ໄດ້ຮັບ; **<u>ແລະ</u>**

3. ບັນທຶກທີ່ມີລາຍລະອຽດກ່ຽວກັບການໄປຢ້ຽມຢາມທ່ານຢູ່ເຮືອນຂອງທ່ານ ຫຼື ສະຖານທີ່ເຮັດວຽກຂອງທ່ານ ແລະຜົນຂອງການຢ້ຽມຢາມເຫຼົ່ານັ້ນ.

ຖ້າວ່າ ເຂດໂຮງຮຽນບົກພ່ອງບໍ່ສາມາດຈັດການປະຊຸມຂຶ້ນໄດ້ພາຍໃນ 15 ວັນຕາມປະຕິທິນ ນັບແຕ່ໄດ້ຮັບແຈ້ງການຂອງທ່ານເລື່ອງການຮ້ອງຂໍເອົາການພິຈາລະນາຄະດີ **ຫຼື** ບົກພ່ອງບໍ່ສາມາດເຂົ້າຮ່ວມໃນການປະຊຸມເພື່ອແກ້ໄຂບັນຫາ, ທ່ານກໍສາມາດຮ້ອງຂໍໃຫ້ເຈົ້າໜ້າທີ່ພິຈາລະນາຄະດີເລີ່ມກຳນົດເວລາການພິຈາລະນາຄະດີທີ່ມີກຳນົດ 45 ວັນຕາມປະຕິທິນໄດ້.

**ການປັບໄລຍະເວລາແກ້ໄຂບັນຫາທີ່ມີກຳນົດເວລາ 30 ວັນຕາມປະຕິທິນ**

ຖ້າວ່າ ທ່ານແລະເຂດໂຮງຮຽນເຫັນດີນຳກັນເປັນລາຍລັກອັກສອນທີ່ຈະຍົກເລີກການປະຊຸມເພື່ອແກ້ໄຂບັນຫາ, ໃນກໍລະນີນີ້ ກຳນົດເວລາ 45 ວັນຕາມປະຕິທິນສຳລັບການພິຈາລະນາຄະດີກໍຈະເລີ່ມຕົ້ນໃນວັນຕໍ່ໄປ.

ຫຼັງຈາກເລີ່ມການໄກ່ເກັ່ຽ ຫຼື ການປະຊຸມເພື່ອແກ້ໄຂບັນຫາ ແລະກ່ອນສິ້ນສຸດໄລຍະແກ້ໄຂບັນຫາ 30 ວັນຕາມປະຕິທິນ, ຖ້າວ່າ ທ່ານແລະເຂດໂຮງຮຽນເຫັນດີນຳກັນເປັນລາຍລັກອັກສອນວ່າ ເປັນໄປບໍ່ໄດ້ທີ່ຈະຕົກລົງກັນໄດ້, ສະນັ້ນ ກຳນົດເວລາ 45 ວັນຕາມປະຕິທິນສຳລັບການພິຈາລະນາຄະດີກໍຈະເລີ່ມຂຶ້ນໃນວັນຕໍ່ໄປ.

ຖ້າວ່າ ທ່ານ ແລະເຂດໂຮງຮຽນເຫັນດີທີ່ຈະນຳໃຊ້ຂະບວນການໄກ່ເກັ່ຽ ແຕ່ວ່າຍັງບໍ່ສາມາດບັນລຸຂໍ້ຕົກລົງກັນໄດ້, ເມື່ອສິ້ນສຸດໄລຍະ 30 ວັນຕາມປະຕິທິນສຳລັບໄລຍະແກ້ໄຂບັນຫາ ຂະບວນການໄກ່ເກັ່ຽອາດດຳເນີນການຕໍ່ໄປໄດ້ ຈົນກວ່າວ່າ ຈະບັນລຸຂໍ້ຕົກລົງຮ່ວມກັນ ຖ້າວ່າທັງສອງຝ່າຍເຫັນດີໃນການດຳເນີນການຕໍ່ໄປຢ່າງເປັນລາຍລັກອັກສອນ. ຢ່າງໃດກໍຕາມ, ຖ້າວ່າ ທ່ານ ຫຼື ເຂດໂຮງຮຽນຖອນຕົວອອກຈາກຂະບວນການໄກ່ເກັ່ຽໃນລະຫວ່າງຢູ່ໃນໄລຍະການສືບຕໍ່ດຳເນີນການນີ້, ສະນັ້ນ ກຳນົດເວລາ 45 ວັນຕາມປະຕິທິນສຳລັບການພິຈາລະນາຄະດີກໍຈະເລີ່ມຕົ້ນຂຶ້ນໃນວັນຕໍ່ໄປ.

**ໜັງສືຂໍ້ຕົກລົງການປະນີປະນອມກັນ**

ຖ້າວ່າ ການແກ້ໄຂຂໍ້ຂັດແຍ້ງສາມາດບັນລຸຜົນໄດ້ໃນການປະຊຸມແກ້ໄຂບັນຫາ, ທ່ານແລະເຂດໂຮງຮຽນຕ້ອງເຂົ້າສູ່ການເຮັດສັນຍາຜູກມັດກັນທາງກົດໝາຍ ຊຶ່ງຈະຕ້ອງ:

1. ເຊັນຊື່ໃສ່ໂດຍທ່ານ ແລະຕົວແທນຂອງເຂດໂຮງຮຽນທີ່ມີອຳນາດໃນການຜູກມັດເຂດໂຮງຮຽນ; **ແລະ**
2. ສາມາດບັງຄັບໃຊ້ໄດ້ໃນເຂດສານໃດໆ ຂອງຣັຖ (ສານຂອງຣັຖທີ່ມີອຳນາດໃນການພິຈາລະນາຄະດີປະເພດນີ້) ຫຼື ໃນສານຂັ້ນຕົ້ນຂອງສະຫະຣັຖອາເມລິກາ.

**ຊ່ວງເວລາທວດກາຄືນຂໍ້ຕົກລົງ**

ຖ້າວ່າ ທ່ານ ແລະເຂດໂຮງຮຽນເຂົ້າສູ່ຂໍ້ຕົກລົງນຳກັນ ຊຶ່ງເປັນຜົນມາຈາກການປະຊຸມແກ້ໄຂບັນຫາ, ຝ່າຍໃດຝ່າຍໜຶ່ງ (ທ່ານ ຫຼື ເຂດໂຮງຮຽນ) ສາມາດເຮັດໃຫ້ຂໍ້ຕົກລົງເປັນໂມຄະໄດ້ພາຍໃນ 3 ວັນເຮັດວຽກ ນັບແຕ່ ເວລາທີ່ທັງທ່ານ ແລະເຂດໂຮງຮຽນໄດ້ເຊັນຊື່ໃນຂໍ້ຕົກລົງ.

# ການພິຈາລະນາຄະດີຄຳຮ້ອງທຸກຕາມຫຼັກນິຕິທັມ

## ການພິຈາລະນາຄະດີທີ່ເປັນກາງ

### ຂໍ້ມູນທົ່ວໄປ

ເມື່ອໃດກໍຕາມທີ່ມີການຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມ, ທ່ານ ຫຼື ເຂດໂຮງຮຽນທີ່ກ່ຽວພັນໃນຂໍ້ຂັດແຍ້ງ ຕ້ອງມີໂອກາດໄດ້ຮັບການພິຈາລະນາຄະດີທີ່ເປັນກາງ, ດັ່ງທີ່ອະທິບາຍໄວ້ໃນ ***ການຮ້ອງທຸກຕາມຫຼັກນິຕິທັມ*** ແລະພາກສ່ວນ ***ຂະບວນການແກ້ໄຂບັນຫາ***.

### ເຈົ້າໜ້າທີ່ພິຈາລະນາຄະດີທີ່ເປັນກາງ

ຢ່າງໜ້ອຍທີ່ສຸດ, ເຈົ້າໜ້າທີ່ພິຈາລະນາຄະດີ:

1. ຕ້ອງບໍ່ແມ່ນພະນັກງານຂອງ SEA ຫຼື ເຂດໂຮງຮຽນທີ່ກ່ຽວຂ້ອງໃນການສຶກສາ ຫຼື ການເບິ່ງແຍງເດັກ. ຢ່າງໃດກໍຕາມ, ບຸກຄົນບໍ່ແມ່ນພະນັກງານຂອງອົງການ ກໍຍ້ອນວ່າບຸກຄົນນັ້ນໄດ້ຮັບ ຄ່າຈ້າງຈາກ ODE ຊຶ່ງເປັນອົງການທີ່ຮັບໃຊ້ໃນຖານະເປັນເຈົ້າໜ້າທີ່ພິຈາລະນາຄະດີເທົ່ານັ້ນ;
2. ຕ້ອງບໍ່ມີຄວາມຂັດແຍ້ງທາງຜົນປະໂຫຍດສ່ວນຕົວ ຫຼື ທາງອາຊີບ ຊຶ່ງຂັດແຍ້ງກັບຄວາມເປັນກາງຂອງຜູ້ພິພາກສາ (ALJ) ໃນການພິຈາລະນາຄະດີ;
3. ຕ້ອງມີຄວາມຮູ້ ແລະເຂົ້າໃຈກ່ຽວກັບຂໍ້ກຳນົດຂອງ IDEA, ແລະກົດຂໍ້ບັງຄັບຂອງຣັຖ ແລະຣັຖບານກາງ ທີ່ກ່ຽວຂ້ອງກັບ IDEA, ແລະການຕີຄວາມທາງກົດໝາຍຂອງ IDEA ໂດຍສານຂອງຣັຖ ແລະຣັຖບານກາງ; **<u>ແລະ</u>**
4. ຕ້ອງມີຄວາມຮູ້ ແລະຄວາມສາມາດໃນການດຳເນີນການພິຈາລະນາຄະດີ, ອອກຄຳຕັດສິນແລະຂຽນຄຳຕັດສິນ, ໂດຍສອດຄ່ອງກັບແນວທາງປະຕິບັດທາງກົດໝາຍທີ່ເປັນມາດຕະຖານ ແລະເໝາະສົມ.

ເຂດໂຮງຮຽນແຕ່ລະແຫ່ງຕ້ອງເກັບຮັກສາລາຍຊື່ຂອງບັນດາຜູ້ທີ່ຮັບໃຊ້ໃນຖານະເປັນຜູ້ພິພາກສາ ແລະ ຄຳຖະແຫຼງການມີຄຸນສົມບັດເໝາະສົມສຳລັບແຕ່ລະຄົນ.

### ປະເດັນເລື່ອງຂອງການພິຈາລະນາຄະດີ

ຄູ່ຄວາມ (ທ່ານ ຫຼື ເຂດໂຮງຮຽນ) ທີ່ຮ້ອງຂໍເອົາການພິຈາລະນາຄະດີ ບໍ່ສາມາດຍົກເອົາປະເດັນອື່ນໆ ທີ່ບໍ່ຢູ່ໃນຄຳຮ້ອງຂໍເອົາການພິຈາລະນາຄະດີ ມາເວົ້າໃນບ່ອນພິຈາລະນາຄະດີໄດ້, ເວັ້ນແຕ່ວ່າ ຄູ່ຄວາມອີກຝ່າຍໜຶ່ງຍິນຍອມ.

### ກຳນົດເວລາສຳລັບການຮ້ອງຂໍເອົາການພິຈາລະນາຄະດີ

ທ່ານ ຫຼື ເຂດໂຮງຮຽນ ຕ້ອງຮ້ອງຂໍເອົາການພິຈາລະນາຄະດີທີ່ເປັນກາງສຳລັບຄຳຮ້ອງທຸກຕາມຫຼັກນິຕິທັມພາຍໃນສອງປີ ນັບແຕ່ວັນທີທີ່ທ່ານ ຫຼື ເຂດໂຮງຮຽນໄດ້ຮູ້ກ່ຽວກັບປະເດັນບັນຫາທີ່ບົ່ງໄວ້ໃນຄຳຮ້ອງຂໍເອົາການພິຈາລະນາຄະດີ.

### ຂໍ້ຍົກເວັ້ນສຳລັບກຳນົດເວລາ

ກຳນົດເວລາຂ້າງເທິງນີ້ນຳໃຊ້ບໍ່ໄດ້ກັບທ່ານ ຖ້າວ່າ ທ່ານບໍ່ສາມາດຍື່ນຄຳຮ້ອງຂໍເອົາການພິຈາລະນາຄະດີໄດ້ ເນື່ອງຈາກ:

1. ເຂດໂຮງຮຽນຈົງໃຈບິດເບືອນຄວາມຈິງວ່າ ເຂົາເຈົ້າໄດ້ແກ້ໄຂບັນຫາ ຫຼື ປະເດັນທີ່ທ່ານໄດ້ລະບຸໄວ້ໃນຄຳຮ້ອງທຸກຂອງທ່ານ; **<u>ຫຼື</u>**
2. ເຂດໂຮງຮຽນປິດບັງຂໍ້ມູນບໍ່ໃຫ້ທ່ານຮູ້ວ່າ ເຂດໂຮງຮຽນມີໜ້າທີ່ຕ້ອງຈັດຫາໃຫ້ທ່ານພາຍໃຕ້ພາກ B ຂອງ IDEA.

## ສິດທິດ້ານການພິຈາລະນາຄະດີ

### ຂໍ້ມູນທົ່ວໄປ

ທ່ານມີສິດທີ່ຈະເປັນຕົວແທນຕົນເອງເອງຢູ່ທີ່ບ່ອນພິຈາລະນາຄະດີ. ນອກຈາກນີ້, ຝ່າຍໃດໆ ກໍຕາມໃນການພິຈາລະນາຄະດີ (ລວມເຖິງ ການພິຈາລະນາຄະດີທີ່ກ່ຽວພັນກັບລະບຽບການດ້ານວິໄນ) ມີສິດທີ່ຈະ:

1. ໄດ້ຮັບຄໍາແນະນໍາ ແລະພາໄປໂດຍທະນາຍຄວາມ ແລະ/ຫຼື ບຸກຄົນທີ່ມີຄວາມຮູ້ພິເສດ ຫຼື ຜ່ານການຝຶກອົບຮົມ ກ່ຽວກັບບັນຫາຂອງເດັກພິການ ຫຼື ຂາດສະມັດຖະພາບ;
2. ມີທະນາຍຄວາມເປັນຕົວແທນຢູ່ທີ່ບ່ອນພິຈາລະນາຄະດີ;
3. ສະແດງຫຼັກຖານ ແລະປະເຊີນໜ້າ, ກວດສອບ, ແລະຮຽກຮ້ອງໃຫ້ພະຍານເຂົ້າຮ່ວມ;
4. ຫ້າມສະແດງຫຼັກຖານໃດໆ ຢູ່ທີ່ບ່ອນພິຈາລະນາຄະດີ ທີ່ຍັງບໍ່ໄດ້ເປີດເຜີຍໃຫ້ຄູ່ຄວາມຝ່າຍນັ້ນຮູ້ ຢ່າງໜ້ອຍຫ້າວັນເຮັດວຽກກ່ອນຮອດວັນພິຈາລະນາຄະດີ;
5. ຂໍເອົາບັນທຶກການພິຈາລະນາຄະດີທີ່ເປັນລາຍລັກອັກສອນຄໍາຕໍ່ຄໍາ, ຫຼື ຕາມການເລືອກຂອງທ່ານ, ທາງອີເລັກໂຕຣນິກ; **<u>ແລະ</u>**
6. ຂໍເອົາຂໍ້ເທັດຈິງທີ່ຄົ້ນພົບ ແລະຄໍາຕັດສິນທີ່ເປັນລາຍລັກອັກສອນ, ຫຼື ຕາມການເລືອກຂອງທ່ານ, ທາງອີເລັກໂຕຣນິກ.

### ການເປີດເຜີຍຂໍ້ມູນເພີ່ມເຕີມ

ຢ່າງໜ້ອຍຫ້າວັນເຮັດວຽກ ກ່ອນການພິຈາລະນາຄະດີ, ທ່ານ ແລະເຂດໂຮງຮຽນຕ້ອງເປີດເຜີຍຊຶ່ງກັນແລະກັນ ກ່ຽວກັບການປະເມີນຜົນທັງໝົດທີ່ໄດ້ເຮັດສໍາເລັດພາຍໃນວັນທີນັ້ນ ແລະຄໍາແນະນໍາທີ່ອີງຕາມການ ປະເມີນຜົນເຫຼົ່ານັ້ນ ທີ່ທ່ານ ຫຼື ເຂດໂຮງຮຽນຕັ້ງໃຈທີ່ຈະນໍາໃຊ້ທີ່ບ່ອນພິຈາລະນາຄະດີ.

ເຈົ້າໜ້າທີ່ພິຈາລະນາຄະດີສາມາດຫ້າມຄູ່ຄວາມຝ່າຍໃດກໍຕາມ ທີ່ບົກຜ່ອງບໍ່ປະຕິບັດຕາມຂໍ້ກໍານົດນີ້ ບໍ່ໃຫ້ສະແດງຜົນການປະເມີນທີ່ກ່ຽວຂ້ອງ ຫຼື ຄໍາແນະນໍາທີ່ບ່ອນພິຈາລະນາຄະດີໂດຍປາດສະຈາກຄໍາຍິນຍອມຈາກອີກຝ່າຍໜຶ່ງ.

### ສິດທິຂອງພໍ່ແມ່ທີ່ບ່ອນພິຈາລະນາຄະດີ

ທ່ານຕ້ອງໄດ້ຮັບສິດໃນການ:

1. ໃຫ້ລູກຂອງທ່ານໄປປາກົດຕົວຢູ່ທີ່ບ່ອນພິຈາລະນາຄະດີດ້ວຍ;
2. ເປີດການພິຈາລະນາຄະດີສູ່ສາທາລະນະ; **<u>ແລະ</u>**
3. ໄດ້ຮັບບັນທຶກຂອງການພິຈາລະນາຄະດີ, ຂໍ້ຄົ້ນພົບ ແລະຄໍາຕັດສິນທີ່ຈັດຫາໃຫ້ທ່ານໂດຍບໍ່ເສັຽຄ່າ.

## ຄໍາຕັດສິນຄະດີ

### ການຕັດສິນຂອງຜູ້ພິພາກສາກົດໝາຍບໍລິຫານ

ຄໍາຕັດສິນຂອງເຈົ້າໜ້າທີ່ພິຈາລະນາຄະດີເລື່ອງທີ່ວ່າ ລູກຂອງທ່ານໄດ້ຮັບການສຶກສາຂອງຣັຖທີ່ເໝາະສົມແລະບໍ່ເສັຽຄ່າ (FAPE) ຫຼືບໍ່ນັ້ນ ຕ້ອງອີງຕາມຫຼັກຖານ ແລະຂໍ້ໂຕ້ແຍ້ງທີ່ກ່ຽວພັນໂດຍກົງກັບ FAPE.

ໃນເລື່ອງການກ່າວຫາການລະເມີດລະບຽບການ (ເຊັ່ນ "ທີມ IEP ທີ່ບໍ່ສົມບູນ"), ເຈົ້າໜ້າທີ່ພິຈາລະນາຄະດີອາດພົບວ່າ ລູກຂອງທ່ານບໍ່ໄດ້ຮັບ FAPE ສະເພາະຖ້າວ່າການລະເມີດລະບຽບການນັ້ນ:

1. ຂັດຂວາງສິດທິຂອງລູກຂອງທ່ານໃນການຮັບເອົາການສຶກສາຂອງຣັຖ ທີ່ເໝາະສົມແລະບໍ່ເສັຽຄ່າ (FAPE);
2. ກີດກັນທ່ານຢ່າງເຫັນໄດ້ຊັດໂດຍບໍ່ໃຫ້ທ່ານມີໂອກາດເຂົ້າຮ່ວມໃນຂະບວນການຕັດສິນໃນເລື່ອງການຈັດຫາການສຶກສາຂອງຣັຖທີ່ເໝາະສົມແລະບໍ່ເສັຽຄ່າ (FAPE) ໃຫ້ແກ່ລູກຂອງທ່ານ; **<u>ຫຼື</u>**

3. ເປັນສາເຫດເຮັດໃຫ້ລູກຂອງທ່ານສູນເສັຽຜົນປະໂຫຍດດ້ານການສຶກສາ.

ບໍ່ມີຂໍ້ກຳນົດໃດເລີຍທີ່ອະທິບາຍໄວ້ຂ້າງເທິງນີ້ທີ່ຈະຖືກຕີຄວາມວ່າເປັນການກີດກັນເຈົ້າໜ້າທີ່ພິຈາລະນາຄະດີບໍ່ໃຫ້ອອກຄຳສັ່ງໃຫ້ເຂດໂຮງຮຽນປະຕິບັດຕາມຂໍ້ກຳນົດໃນພາກສ່ວນລະບຽບການປົກປ້ອງຄຸ້ມຄອງ ຂອງກົດຂໍ້ບັງຄັບຂອງຣັຖບານກາງພາຍໃຕ້ພາກ B ຂອງ IDEA (34 CFR §§300.500 ຮອດ 300.536).

**ແຍກຄຳຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມອອກ**

ບໍ່ມີສ່ວນໃດໃນລະບຽບການປົກປ້ອງຄຸ້ມຄອງຂອງກົດຂໍ້ບັງຄັບຣັຖບານກາງພາຍໃຕ້ພາກ B ຂອງ IDEA (34 CFR §§300.500 ຮອດ 300.536) ທີ່ຈະຖືກຕີຄວາມໄດ້ວ່າ ເປັນການກີດກັນທ່ານຈາກການຍື່ນເລື່ອງຮ້ອງທຸກແຍກຕ່າງຫາກກ່ຽວກັບປະເດັນທີ່ແຍກຕ່າງຫາກຈາກເລື່ອງຮ້ອງທຸກທີ່ໄດ້ຍື່ນໄປແລ້ວ.

**ຂໍ້ຄົ້ນພົບ ແລະຄຳຕັດສິນທີ່ສະໜອງໃຫ້ແກ່ຄະນະທີ່ປຶກສາ ແລະສາທາລະນະທົ່ວໄປ**

SEA ຫຼື ເຂດໂຮງຮຽນ (ອັນໃດກໍຕາມທີ່ຮັບຜິດຊອບໃນການພິຈາລະນາຄະດີຂອງທ່ານ), ຫຼັງຈາກລຶບຂໍ້ມູນທີ່ສາມາດລະບຸຕົວບຸກຄົນອອກແລ້ວ, ຕ້ອງ:

1. ໃຫ້ສິ່ງຄົ້ນພົບ ແລະຄຳຕັດສິນໃນການພິຈາລະນາຄະດີ ຫຼື ການອຸທອນ ແກ່ຄະນະທີ່ປຶກສາດ້ານການສຶກສາພິເສດຂອງຣັຖ; <u>**ແລະ**</u>
2. ເຜີຍແຜ່ສິ່ງຄົ້ນພົບ ແລະຄຳຕັດສິນ ຕໍ່ສາທາລະນະ.

## <u>ກຳນົດເວລາ ແລະຄວາມສະດວກຂອງການພິຈາລະນາຄະດີ; ຄຳຕັດສິນຊີ້ຂາດ</u>

SEA ຕ້ອງຮັບປະກັນວ່າ ຕ້ອງບໍ່ດົນກາຍ 45 ວັນຫຼັງຈາກສິ້ນສຸດໄລຍະເວລາ 30 ວັນຕາມປະຕິທິນສຳລັບການປະຊຸມແກ້ໄຂບັນຫາ <u>**ຫຼື**</u>, ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ຍ່ອຍ ***ການປັບໄລຍະເວລາແກ້ໄຂບັນຫາ 30 ວັນຕາມປະຕິທິນ,*** ບໍ່ດົນກາຍ 45 ວັນຕາມປະຕິທິນ ຫຼັງຈາກສິ້ນສຸດໄລຍະເວລາທີ່ປັບແລ້ວ:

1. ການບັນລຸຄຳຕັດສິນຊີ້ຂາດໃນການພິຈາລະນາຄະດີ; <u>**ແລະ**</u>
2. ສຳເນົາຂອງຄຳຕັດສິນຖືກສົ່ງໄປສະນີໃຫ້ແກ່ແຕ່ລະຝ່າຍ.

ເຈົ້າໜ້າທີ່ພິຈາລະນາຄະດີອາດອະນຸຍາດໃຫ້ມີການຂະຫຍາຍເວລາພິເສດທີ່ກາຍຈາກໄລຍະ 45 ວັນຕາມ ປະຕິທິນ ດັ່ງທີ່ອະທິບາຍໄວ້ຂ້າງເທິງ ຕາມຄຳຮ້ອງຂໍຂອງຝ່າຍໃດຝ່າຍໜຶ່ງ (ທ່ານ ຫຼື ເຂດໂຮງຮຽນ)

ການພິຈາລະນາຄະດີແຕ່ລະຄັ້ງຕ້ອງໄດ້ຈັດຂຶ້ນໃນເວລາ ແລະສະຖານທີ່ທີ່ສະດວກຕາມສົມຄວນສຳລັບທ່ານ ແລະລູກຂອງທ່ານ.

**ຄຳຕັດສິນຊີ້ຂາດ**

ຄຳຕັດສິນທີ່ມາຈາກການພິຈາລະນາຄະດີຕາມຫຼັກນິຕິທັມ (ລວມເຖິງ ການພິຈາລະນາຄະດີທີ່ກ່ຽວພັນກັບລະບຽບການດ້ານວິໄນ) ຖືວ່າເປັນຄຳຕັດສິນຊີ້ຂາດ, ຍົກເວັ້ນວ່າ ຝ່າຍໃດໜຶ່ງທີ່ກ່ຽວຂ້ອງໃນການພິຈາລະນາຄະດີ (ທ່ານ ຫຼື ເຂດໂຮງຮຽນ) ອາດອຸທອນຄຳຕັດສິນໂດຍການນຳໄປສູ່ການດຳເນີນຄະດີທາງແພ່ງ, ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ການດຳເນີນຄະດີທາງແພ່ງ, ລວມເຖິງ ໄລຍະເວລາໃນການຍື່ນຟ້ອງຄະດີເຫຼົ່ານັ້ນ***.

## <u>ການດຳເນີນຄະດີທາງແພ່ງ, ລວມເຖິງ ໄລຍະເວລາທີ່ຈະຍື່ນການດຳເນີນຄະດີເຫຼົ່ານັ້ນ</u>

### ຂໍ້ມູນທົ່ວໄປ

ຄູ່ຄວາມຝ່າຍໃດກໍຕາມ (ທ່ານ ຫຼື ເຂດໂຮງຮຽນ) ທີ່ບໍ່ເຫັນດີນຳສິ່ງຄົ້ນພົບ ແລະຄຳຕັດສິນໃນການພິຈາລະນາຄະດີຕາມຫຼັກນິຕິທັມ (ລວມເຖິງ ການພິຈາລະນາຄະດີ ທີ່ກ່ຽວພັນກັບລະບຽບການທາງວິໄນ) ມີສິດທີ່ຈະຂໍໃຫ້ມີການດຳເນີນຄະດີທາງແພ່ງໃນເລື່ອງທີ່ເປັນປະເດັນຂອງການພິຈາລະນາຄະດີຕາມຫຼັກນິຕິທັມ. ການດຳເນີນຄະດີອາດເຮັດໃນສານທີ່ມີຄວາມສາມາດຂອງຣັຖ (ສານຂອງຣັຖທີ່ມີອຳນາດໃນການພິຈາລະນາຄະດີປະເພດນີ້) ຫຼື ໃນສານຂັ້ນຕົ້ນຂອງຣັຖບານກາງ ໂດຍບໍ່ຄຳນຶງເຖິງຈຳນວນເງິນໃນຂໍ້ພິພາດ.

**ການຈຳກັດເວລາ**

ຄູ່ຄວາມຝ່າຍໃດໜຶ່ງ (ທ່ານ ຫຼື ເຂດໂຮງຮຽນ) ທີ່ຂໍເອົາການດຳເນີນຄະດີ ມີເວລາ 90 ວັນຕາມປະຕິທິນ ນັບແຕ່ວັນທີຂອງຄຳຕັດສິນຂອງເຈົ້າໜ້າທີ່ພິລະນາຄະດີ ເພື່ອຍື່ນຟ້ອງຄະດີແພ່ງ.

**ລະບຽບການເພີ່ມເຕີມ**

ໃນການດຳເນີນຄະດີທາງແພ່ງໃດໆ, ສານ:

1. ຈະໄດ້ຮັບບັນທຶກການດຳເນີນຄະດີປົກຄອງ;
2. ຮັບຟັງຫຼັກຖານເພີ່ມເຕີມ ຕາມຄຳຮ້ອງຂໍຂອງທ່ານ ຫຼື ຄຳຮ້ອງຂໍຂອງເຂດໂຮງຮຽນ; **<u>ແລະ</u>**
3. ອີງຄຳຕັດສິນຕາມຫຼັກຖານທີ່ມີນ້ຳໜັກຫຼາຍກວ່າ ແລະໃຫ້ການບັນເທົາຍຽວຍາ ຊຶ່ງສານພິຈາລະນາວ່າເໝາະສົມ.

ພາຍໃຕ້ສະພາບການທີ່ເໝາະສົມ, ການບັນເທົາທຸກຕາມຄຳສັ່ງສານ ອາດລວມເຖິງ ການຊົດໃຊ້ຄືນຄ່າຮ່ຳຮຽນຂອງໂຮງຮຽນເອກະຊົນ ແລະຄ່າຊົດເຊີຍການບໍລິການທາງການສຶກສາ.

**ອຳນາດໃນການຕັດສິນຄະດີຂອງສານຂັ້ນຕົ້ນ**

ສານຂັ້ນຕົ້ນຂອງສະຫະຣັດອາເມລິກາມີອຳນາດໃນການດຳເນີນຄະດີທີ່ຍື່ນເຂົ້າມາພາຍໃຕ້ພາກ B ຂອງ IDEA ໂດຍບໍ່ຄຳນຶງເຖິງຈຳນວນເງິນໃນຂໍ້ພິພາດ.

**ກົດລະບຽບຂອງໂຄງສ້າງ**

ບໍ່ມີສ່ວນໃດໃນພາກ B ຂອງ IDEA ກົດກັນ ຫຼື ຈຳກັດສິດທິ, ຂັ້ນຕອນ, ແລະການຍຽວຍາ ທີ່ມີໃຫ້ພາຍໃຕ້ຣັຖທຳມະນູນຂອງສະຫະຣັດອາເມລິກາ, ກົດໝາຍວ່າດ້ວຍຄົນພິການຂອງອາເມລິກາ (Americans with Disabilities Act) ປີ 1990, ຫົວຂໍ້ທີ 5 ຂອງກົດໝາຍວ່າດ້ວຍການຟື້ນຟູສະມັຖພາບ (Title V of the Rehabilitation Act) ປີ 1973 (ມາດຕາ 504), ຫຼື ກົດໝາຍຂອງຣັຖບານກາງອື່ນໆ ທີ່ປົກປ້ອງສິດທິຂອງເດັກພິການ, ຍົກເວັ້ນວ່າ ກ່ອນການຍື່ນຟ້ອງຄະດີທາງແພ່ງພາຍໃຕ້ກົດໝາຍເຫຼົ່ານີ້ໃນການສະແຫວງຫາການບັນເທົາຍຽວຍາ ຊຶ່ງຍັງມີໃຫ້ພາຍໃຕ້ພາກ B ຂອງ IDEA, ລະບຽບການຕາມຂັ້ນຕອນທາງກົດໝາຍທີ່ອະທິບາຍໄວ້ຂ້າງເທິງ ຕ້ອງໄດ້ຖືກນຳໄປໃຊ້ຈົນສຸດທາງກ່ອນ ພາຍໃຕ້ຂອບເຂດດຽວກັນທີ່ມັນຈະເປັນ ຖ້າວ່າ ຄູ່ຄວາມໄດ້ຍື່ນດຳເນີນຄະດີພາຍໃຕ້ພາກ B ຂອງ IDEA. ນີ້ໝາຍຄວາມວ່າ ທ່ານອາດໄດ້ຮັບການຍຽວຍາທີ່ມີໃຫ້ພາຍໃຕ້ກົດໝາຍອື່ນໆ ຊຶ່ງທັບຊ້ອນກັບບັນດາການຍຽວຍາທີ່ມີໃຫ້ພາຍໃຕ້ IDEA, ແຕ່ວ່າ ໂດຍທົ່ວໄປແລ້ວ, ເພື່ອຂໍເອົາການຍຽວຍາພາຍໃຕ້ກົດໝາຍອື່ນໆ ເຫຼົ່ານັ້ນ, ທຳອິດ ທ່ານຕ້ອງນຳໃຊ້ການຍຽວຍາທາງການປົກຄອງທີ່ມີໃຫ້ກ່ອນພາຍໃຕ້ IDEA (ເຊັ່ນວ່າ ການຮ້ອງທຸກຕາມຫຼັກນິຕິທັມ; ຂະບວນການແກ້ໄຂບັນຫາ, ລວມເຖິງ ການປະຊຸມແກ້ໄຂບັນຫາ; ແລະລະບຽບການພິຈາລະນາຄະດີທີ່ເປັນກາງ) ກ່ອນຈະເຂົ້າສູ່ສານໂດຍກົງ.

## ຂໍ້ມູນທົ່ວໄປ

ໃນການດຳເນີນຄະດີໃດໆ ຫຼື ການຟ້ອງຮ້ອງຄະດີທີ່ເຮັດຂຶ້ນມາພາຍໃຕ້ພາກ B ຂອງ IDEA, ພາຍໃຕ້ດຸນພິນິດຂອງສານ, ສານອາດຕັດສິນໃຫ້ທະນາຍຄວາມໄດ້ຮັບຄ່າທະນາຍຄວາມໂດຍເປັນສ່ວນໜຶ່ງຂອງຄ່າໃຊ້ຈ່າຍຂອງທ່ານ, ຖ້າວ່າ ທ່ານຊະນະຄະດີ (ຊະນະ).

ໃນການດຳເນີນຄະດີໃດໆ ຫຼື ການຟ້ອງຮ້ອງຄະດີທີ່ເຮັດຂຶ້ນມາພາຍໃຕ້ພາກ B ຂອງ IDEA, ພາຍໃຕ້ດຸນພິນິດຂອງສານ, ສານອາດຕັດສິນໃຫ້ທະນາຍຄວາມຂອງທ່ານຈ່າຍຄ່າທະນາຍຄວາມທີ່ສົມເຫດຜົນຊຶ່ງເປັນສ່ວນໜຶ່ງຂອງຄ່າໃຊ້ຈ່າຍຂອງອົງການທາງການສຶກສາຂອງຣັຖ ຫຼື ເຂດໂຮງຮຽນທີ່ຊະນະຄະດີ, ຖ້າວ່າ ທະນາຍຄວາມ: (a) ໄດ້ຍື່ນຄຳຮ້ອງທຸກ ຫຼື ຄະດີໃນສານ ຊຶ່ງສານພົບວ່າ ບໍ່ສຳຄັນ, ບໍ່ສົມເຫດຜົນ, ຫຼື ບໍ່ມີມູນເຫດ; **<u>ຫຼື</u>** (b) ໄດ້ສືບຕໍ່ຟ້ອງຮ້ອງ ຫຼັງຈາກການຟ້ອງຮ້ອງເຫັນໄດ້ຊັດວ່າ ບໍ່ສຳຄັນ, ບໍ່ສົມເຫດຜົນ, ຫຼື ບໍ່ມີມູນເຫດ; **<u>ຫຼື:</u>**

ໃນການດຳເນີນຄະດີໃດໆ ຫຼື ການຟ້ອງຮ້ອງຄະດີທີ່ເຮັດຂຶ້ນມາພາຍໃຕ້ພາກ B ຂອງ IDEA, ພາຍໃຕ້ດຸນພິນິດຂອງສານ, ສານອາດຕັດສິນໃຫ້ທ່ານ ຫຼື ທະນາຍຄວາມຂອງທ່ານ ຈ່າຍຄ່າທະນາຍຄວາມທີ່ສົມເຫດຜົນຊຶ່ງເປັນສ່ວນໜຶ່ງຂອງຄ່າໃຊ້ຈ່າຍຂອງອົງການທາງການສຶກສາຂອງຣັຖ ຫຼື ເຂດໂຮງຮຽນ ທີ່ຊະນະຄະດີ, ຖ້າວ່າ ຄຳຮ້ອງຂໍເອົາການພິຈາລະນາຄະດີຂອງທ່ານ ຫຼືໃນພາຍຫຼັງເປັນຄະດີໃນສານ ໄດ້ສະແດງໃຫ້ເຫັນວ່າ ມີຈຸດປະສົງທີ່ບໍ່ເໝາະສົມ, ເຊັ່ນວ່າ ເພື່ອຂົ່ມເຫັງ, ເພື່ອເຮັດໃຫ້ເກີດການລ່າຊ້າທີ່ບໍ່ຈຳເປັນ, ຫຼື ເພື່ອເພີ່ມຄ່າດຳເນີນຄະດີ ຫຼື ຟ້ອງຮ້ອງຄະດີ ໂດຍບໍ່ຈຳເປັນ.

## ການຕັດສິນໃຫ້ຄ່າທຳນຽມ

ສານຈະຕັດສິນໃຫ້ຄ່າທຳນຽມຂອງທະນາຍຄວາມທີ່ສົມເຫດຜົນດັ່ງນີ້:

1. ຄ່າທຳນຽມຕ້ອງອີງຕາມອັດຕາທີ່ນຳໃຊ້ຢູ່ໃນຊຸມຊົນສຳລັບການດຳເນີນຄະດີ ຫຼື ການຟ້ອງຮ້ອງຄະດີຕາມປະເພດ ແລະຄຸນນະພາບຂອງການບໍລິການທີ່ຈັດຫາໃຫ້. ໃນເວລາຄິດໄລ່ຄ່າທຳນຽມ ຕ້ອງບໍ່ຄິດໄລ່ເງິນໂບນັດ ຫຼື ບວກເພີ່ມ.
2. ຄ່າທຳນຽມຂອງທະນາຍຄວາມ ຈະບໍ່ມີໃຫ້ ແລະຄ່າໃຊ້ຈ່າຍຕ່າງໆ ທີ່ກ່ຽວຂ້ອງ ຈະບໍ່ສາມາດຊົດໃຊ້ຄືນໃຫ້ໄດ້ໃນການດຳເນີນຄະດີ ຫຼື ການຟ້ອງຮ້ອງຄະດີໃດໆ ພາຍໃຕ້ພາກ B ຂອງ IDEA ສຳລັບການ ບໍລິການທີ່ໄດ້ໃຫ້ ຫຼັງຈາກທີ່ໄດ້ເຮັດໜັງສືຂໍ້ສະເໜີການຊົດໃຊ້ເງິນໃຫ້ແກ່ທ່ານ ຖ້າວ່າ:
    a. ຂໍ້ສະເໜີໄດ້ເຮັດພາຍໃນເວລາທີ່ກຳນົດໃຫ້ໂດຍກົດລະບຽບຂໍ້ທີ 68 ຂອງກົດລະບຽບຂອງຣັຖບານກາງສຳລັບລະບຽບການທາງແພ່ງ ( Federal Rules of Civil Procedure) ຫຼື, ໃນກໍລະນີຂອງການພິຈາລະນາຄະດີຕາມຫຼັກນິຕິທັມ, ໃນເວລາໃດກໍຕາມທີ່ມີໄລຍະເວລາຫຼາຍກວ່າ 10 ວັນຕາມປະຕິທິນ ກ່ອນການດຳເນີນຄະດີເລີ່ມຕົ້ນ;
    b. ຂໍ້ສະເໜີບໍ່ຖືກຍອມຮັບພາຍໃນ 10 ວັນຕາມປະຕິທິນ; **<u>ແລະ</u>**
    c. ສານ ຫຼື ເຈົ້າໜ້າທີ່ພິຈາລະນາຄະດີປົກຄອງ ພົບວ່າ ສຸດທ້າຍແລ້ວ ການຍຽວຍາທີ່ທ່ານໄດ້ຮັບນັ້ນ ບໍ່ເຮັດໃຫ້ທ່ານພໍໃຈຫຼາຍກວ່າຂໍ້ສະເໜີການຊົດໃຊ້ເງິນ.

    ເຖິງວ່າຈະມີຂໍ້ຈຳກັດເຫຼົ່ານີ້, ອາດມີການຕັດສິນໃຫ້ຄ່າທະນາຍຄວາມ ແລະຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ໃຫ້ແກ່ທ່ານ ຖ້າວ່າ ທ່ານຊະນະຄະດີ ແລະທ່ານກໍມີຄວາມຖືກຕ້ອງໃນການປະຕິເສດຂໍ້ສະເໜີການຊົດໃຊ້ເງິນ.
3. ຄ່າທຳນຽມຕ່າງໆ ຈະບໍ່ຖືກຕັດສິນໃຫ້ໃນສ່ວນທີ່ກ່ຽວຂ້ອງກັບການປະຊຸມໃດໆ ຂອງໂຄງການການສຶກສາສະເພາະບຸກຄົນ (IEP) ເວັ້ນແຕ່ວ່າ ການປະຊຸມຖືກຈັດຂຶ້ນ ຊຶ່ງເປັນຜົນມາຈາກການດຳເນີນຄະດີປົກຄອງ ຫຼື ການຟ້ອງຮ້ອງຄະດີ. ນອກຈາກນີ້ ຈະບໍ່ມີການຕັດສິນໃຫ້ຄ່າທຳນຽມສຳລັບການໄກ່ເກັ່ຽ ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ການໄກ່ເກັ່ຽ***.

ການປະຊຸມແກ້ໄຂບັນຫາ, ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ຂະບວນການແກ້ໄຂບັນຫາ***, ບໍ່ຖືວ່າເປັນການປະຊຸມທີ່ຈັດຂຶ້ນເນື່ອງຈາກເປັນຜົນຂອງການພິຈາລະນາຄະດີປົກຄອງ ຫຼື ການຟ້ອງຮ້ອງຄະດີ, ແລະນອກຈາກນີ້ ຍັງບໍ່ຖືວ່າ ເປັນການພິຈາລະນາຄະດີປົກຄອງ ຫຼື ການຟ້ອງຮ້ອງຄະດີສໍາລັບຈຸດປະສົງຂອງ ການຈັດຫາຄ່າທໍານຽມຂອງທະນາຍຄວາມເຫຼົ່ານີ້.
ສານຈະຫຼຸດຈໍານວນເງິນຄ່າທະນາຍຄວາມທີ່ໃຫ້ພາຍໃຕ້ພາກ B ຂອງ IDEA ຕາມຄວາມເໝາະສົມ, ຖ້າສານພົບວ່າ:

1. ໃນລະຫວ່າງການດໍາເນີນຄະດີ ຫຼື ໄຕ່ສວນຄະດີ, ທ່ານ ຫຼື ທະນາຍຄວາມຂອງທ່ານໄດ້ເຮັດໃຫ້ເກີດຄວາມລ່າຊ້າໂດຍບໍ່ສົມເຫດຜົນສໍາລັບການແກ້ໄຂບັນຫາຂໍ້ຂັດແຍ້ງຂັ້ນສຸດທ້າຍ;

2. ຈໍານວນເງິນຄ່າທະນາຍຄວາມທີ່ອະນຸມັດໃຫ້ມີຈໍານວນເກີນອັດຕາທົ່ວໄປໃນຊຸມຊົນໂດຍບໍ່ສົມເຫດຜົນສໍາລັບການບໍລິການທີ່ຄ້າຍຄືກັນນີ້ຈາກທະນາຍຄວາມອື່ນໆ ທີ່ມີຄວາມຊໍານານ, ຊື່ສຽງ, ແລະ ປະສົບການຄ້າຍຄືກັນ.

3. ເວລາທີ່ໄດ້ໃຊ້ໄປ ແລະການບໍລິການທາງກົດໝາຍທີ່ໄດ້ໃຫ້ ແມ່ນຫຼາຍເກີນໄປ ຖ້າພິຈາລະນາເຖິງລັກສະນະຂອງການຟ້ອງຮ້ອງ ຫຼື ການດໍາເນີນຄະດີ; **<u>ຫຼື</u>**

4. ທະນາຍຄວາມທີ່ເປັນຕົວແທນຂອງທ່ານ ບໍ່ໄດ້ໃຫ້ຂໍ້ມູນທີ່ເໝາະສົມແກ່ທາງເຂດໂຮງຮຽນ ຕາມແຈ້ງການການຮ້ອງຂໍເອົາການພິຈາລະນາຄະດີ ດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ການຮ້ອງທຸກຕາມຫຼັກນິຕິທັມ***.

ຢ່າງໃດກໍຕາມ, ສານອາດບໍ່ຫຼຸດຄ່າທໍານຽມ ຖ້າສານພົບວ່າ ຣັຖ ຫຼື ເຂດໂຮງຮຽນ ເຮັດໃຫ້ການແກ້ບັນຫາຂັ້ນສຸດທ້າຍຂອງການດໍາເນີນຄະດີ ຫຼື ຟ້ອງຮ້ອງຄະດີ ຕ້ອງລ່າຊ້າອອກໄປໂດຍບໍ່ສົມເຫດຜົນ ຫຼື ໄດ້ມີການລະເມີດພາຍໃຕ້ຂໍ້ກໍານົດລະບຽບການປົກປ້ອງຄຸ້ມຄອງ ຂອງພາກ B ຂອງ IDEA.

# ລະບຽບການເມື່ອດຳເນີນການທາງວິໄນຕໍ່ເດັກພິການ

## ອຳນາດຂອງຝ່າຍບຸກຄົນຂອງໂຮງຮຽນ

**ການພິຈາລະນາຕາມກໍລະນີ**

ຝ່າຍບຸກຄົນຂອງໂຮງຮຽນອາດພິຈາລະນາສະພາບການສະເພາະໃດໜຶ່ງໂດຍຂຶ້ນກັບກໍລະນີ, ໃນເວລາພິຈາລະນາຕັດສິນວ່າ ການປ່ຽນບ່ອນຮຽນ (change of placement), ທີ່ໄດ້ເຮັດໂດຍສອດຄ່ອງກັບຂໍ້ກຳນົດດ້ານວິໄນຕໍ່ໄປນີ້ ນັ້ນ, ແມ່ນເໝາະສົມສຳລັບເດັກທີ່ພິການຊຶ່ງໄດ້ລະເມີດກົດລະບຽບຂອງນັກຮຽນ ຫຼືບໍ່.

**ຂໍ້ມູນທົ່ວໄປ**

ໃນຂອບເຂດທີ່ວ່າ ຝ່າຍບຸກຄົນໄດ້ດຳເນີນການດັ່ງກ່າວນັ້ນກັບເດັກນັກຮຽນທີ່ບໍ່ໄດ້ພິການດ້ວຍເຊັ່ນກັນ, ຝ່າຍບຸກຄົນຂອງໂຮງຮຽນອາດ ຍ້າຍເດັກພິການທີ່ລະເມີດກົດລະບຽບຂອງນັກຮຽນອອກຈາກບ່ອນຮຽນປັດຈຸບັນຂອງເຂົາ ເປັນເວລາບໍ່ເກີນ **10 ວັນຮຽນ** ຕິດຕໍ່ກັນ ແລະໃຫ້ໄປຢູ່ບ່ອນຮຽນອື່ນ, ສະຖານທີ່ອື່ນ, ທີ່ເໝາະສົມຊົ່ວຄາວ, ຫຼື ໃຫ້ພັກການຮຽນຊົ່ວຄາວ. ຝ່າຍບຸກຄົນຂອງໂຮງຮຽນຍັງອາດກຳນົດໂທດເພີ່ມໃນການຍ້າຍເດັກອອກບໍ່ເກີນ **10 ວັນຮຽນ** ຕິດຕໍ່ກັນໃນປີການສຶກສາດຽວກັນນັ້ນ ສຳລັບການປະພຶດຜິດກົດລະບຽບຂອງນັກຮຽນທີ່ແຍກຕ່າງຫາກ, ຕາບໃດທີ່ການຍົກຍ້າຍເດັກອອກນັ້ນ ບໍ່ເຮັດໃຫ້ເກີດການປ່ຽນບ່ອນຮຽນ (ເບິ່ງ ***ການປ່ຽນບ່ອນຮຽນເນື່ອງຈາກການຖອດຖອນທາງວິໄນ*** ເພື່ອຮູ້ຄວາມໝາຍ).

ເມື່ອເດັກທີ່ພິການໄດ້ຖືກຍົກຍ້າຍອອກຈາກບ່ອນຮຽນປັດຈຸບັນ ເປັນເວລາທັງໝົດ **10 ວັນຮຽນ** ໃນປີການສຶກສາດຽວກັນ, ທາງເຂດໂຮງຮຽນຕ້ອງຈັດຫາການບໍລິການຕ່າງໆ ໃຫ້, ໃນລະຫວ່າງວັນຕໍ່ມາທີ່ຍ້າຍອອກໃນປີການສຶກສານັ້ນ, ໃນຂອບເຂດທີ່ກຳນົດໄວ້ລຸ່ມນີ້ພາຍໃຕ້ຫົວຂໍ້ຍ່ອຍ ***ການບໍລິການຕ່າງໆ***.

**ອຳນາດເພີ່ມເຕີມ**

ຖ້າວ່າ ການປະພຶດລະເມີດກົດລະບຽບຂອງນັກຮຽນນັ້ນບໍ່ແມ່ນການສະແດງອອກເຖິງຄວາມພິການຂອງເດັກ (ເບິ່ງຂໍ້ຍ່ອຍ ***ການພິຈາລະນາຕັດສິນດ້ານການສະແດງອອກ***) ແລະການລົງວິໄນປ່ຽນບ່ອນຮຽນຈະມີໄລຍະເວລາກາຍ **10 ວັນຮຽນ** ຕິດຕໍ່ກັນ, ຝ່າຍບຸກຄົນຂອງໂຮງຮຽນອາດນຳໃຊ້ລະບຽບການທາງວິໄນຕໍ່ກັບເດັກທີ່ພິການໄດ້ ໃນລັກສະນະດຽວກັນ ແລະໃນໄລຍະເວລາດຽວກັນກັບທີ່ຈະໃຊ້ກັບເດັກທີ່ບໍ່ໄດ້ພິການ, ຍົກເວັ້ນວ່າໂຮງຮຽນຕ້ອງຈັດຫາການບໍລິການໃຫ້ແກ່ເດັກຄົນນັ້ນ ດັ່ງທີ່ອະທິບາຍໄວ້ລຸ່ມນີ້ໃນຫົວຂໍ້ ***ການບໍລິການຕ່າງໆ***. ທີມ IEP ຂອງເດັກພິຈາລະນາຈັດຫາບ່ອນຮຽນອື່ນໃຫ້ຊົ່ວຄາວສຳລັບການບໍລິການດັ່ງກ່າວ.

## ການບໍລິການຕ່າງໆ

ເຂດໂຮງຮຽນມີໜ້າທີ່ສະເພາະໃນການຈັດຫາການບໍລິການຕ່າງໆ ໃຫ້ແກ່ເດັກພິການທີ່ໄດ້ຖືກຍົກຍ້າຍອອກຈາກບ່ອນຮຽນປັດຈຸບັນຂອງເຂົາ ເປັນເວລາ **10 ວັນຮຽນ ຫຼື ໜ້ອຍກວ່ານັ້ນ** ໃນປີການສຶກສານັ້ນ, ຖ້າວ່າ ທາງເຂດຈັດຫາການບໍລິການໃຫ້ແກ່ເດັກທີ່ບໍ່ພິການ ທີ່ໄດ້ຖືກຍົກຍ້າຍອອກໃນລັກສະນະດຽວກັນນີ້. ການບໍລິການຕ່າງໆ ທີ່ຕ້ອງໄດ້ຈັດຫາໃຫ້ເດັກພິການທີ່ໄດ້ຖືກຍົກຍ້າຍອອກຈາກບ່ອນຮຽນປັດຈຸບັນຂອງເຂົາ ອາດຕ້ອງໄດ້ຈັດຫາໃຫ້ໃນບ່ອນຮຽນອື່ນຊົ່ວຄາວນັ້ນດ້ວຍ.

ເດັກພິການຊຶ່ງຖືກຍ້າຍອອກຈາກບ່ອນຮຽນປັດຈຸບັນຂອງເຂົາເປັນເວລາ **ຫຼາຍກວ່າ 10 ວັນຮຽນ** ແລະການປະພຶດບໍ່ສະແດງໃຫ້ເຫັນເຖິງຄວາມພິການຂອງເດັກ (ເບິ່ງຫົວຂໍ້ຍ່ອຍ, ***ການພິຈາລະນາຕັດສິນດ້ານການສະແດງອອກ***) ຫຼື ຜູ້ທີ່ຖືກຍ້າຍອອກພາຍໃຕ້ສະພາບການພິເສດ (ເບິ່ງຫົວຂໍ້ຍ່ອຍ, ***ສະພາບການພິເສດ*** ) ຕ້ອງ:

1. ສືບຕໍ່ໄດ້ຮັບການບໍລິການທາງການສຶກສາ (ມີໃຫ້ສຳລັບການສຶກສາຂອງຣັຖທີ່ເໝາະສົມແລະບໍ່ເສັຽຄ່າ), ເພື່ອໃຫ້ເດັກສາມາດສືບຕໍ່ເຂົ້າຮ່ວມໃນຫຼັກສູດການສຶກສາທົ່ວໄປໄດ້, ເຖິງວ່າຈະຢູ່ໃນສະຖານທີ່ຮຽນບ່ອນອື່ນ (ຊຶ່ງອາດແມ່ນສະຖານທີ່ຮຽນອື່ນຊົ່ວຄາວ), ແລະເພື່ອໃຫ້ກ້າວໜ້າບັນລຸຕາມເປົ້າໝາຍທີ່ວາງໄວ້ໃນ IEP ຂອງເດັກ; **ແລະ**

2. ໄດ້ຮັບການປະເມີນຜົນດ້ານພຶດຕິກໍາ, ຕາມຄວາມເໝາະສົມ, ແລະການບໍລິການແຊກແຊງຊ່ວຍເຫຼືອດ້ານການປະພຶດ ແລະການດັດປັບແກ້ໄຂ, ຊຶ່ງມີຮູບແບບທີ່ຈະຊ່ວຍແກ້ບັນຫາການລະເມີດດ້ານການປະພຶດ ເພື່ອບໍ່ໃຫ້ເກີດເຫດການແບບນີ້ອີກ.

ຫຼັງຈາກເດັກພິການໄດ້ຖືກຍ້າຍອອກຈາກບ່ອນຮຽນປັດຈຸບັນຂອງເຂົາເປັນເວລາ **10 ວັນຮຽນ** ໃນປີການສຶກສາດຽວກັນນັ້ນ, ແລະ **<u>ຖ້າວ່າ</u>** ການຍົກຍ້າຍອອກໃນປັດຈຸບັນມີໄລຍະເວລາ **10 ວັນຮຽນ** ຕິດຕໍ່ກັນ ຫຼື ໜ້ອຍກວ່ານັ້ນ **ແລະ** ຖ້າວ່າ ການຍ້າຍອອກບໍ່ແມ່ນການປ່ຽນບ່ອນຮຽນ (ເບິ່ງຄວາມໝາຍລຸ່ມນີ້), **<u>ຈາກນັ້ນ</u>** ພາຍໃຕ້ການປຶກສາຫາລືກັບຄູຂອງນັກຮຽນຢ່າງໜ້ອຍໜຶ່ງຄົນ, ຝ່າຍບຸກຄົນຂອງໂຮງຮຽນຈະພິຈາລະນາຕັດສິນຂອບເຂດຂອງການບໍລິການທີ່ຈໍາເປັນເພື່ອໃຫ້ເດັກສາມາດສືບຕໍ່ເຂົ້າຮ່ວມໃນຫຼັກສູດການສຶກສາທົ່ວໄປໄດ້, ເຖິງວ່າຈະຢູ່ໃນສະຖານທີ່ຮຽນອື່ນ, ແລະເພື່ອໃຫ້ກ້າວໜ້າບັນລຸເປົ້າໝາຍທີ່ວາງໄວ້ໃນ IEP ຂອງເດັກ.

ຖ້າການຍ້າຍອອກແມ່ນການປ່ຽນບ່ອນຮຽນ (ເບິ່ງຫົວຂໍ້, ***ການປ່ຽນບ່ອນຮຽນເນື່ອງຈາກການຖອດຖອນທາງວິໄນ*** ), ທີມ IEP ຂອງເດັກຈະພິຈາລະນາຕັດສິນໃຫ້ການບໍລິການທີ່ເໝາະສົມ ເພື່ອໃຫ້ເດັກສາມາດສືບຕໍ່ເຂົ້າຮ່ວມໃນຫຼັກສູດການສຶກສາທົ່ວໄປໄດ້, ເຖິງວ່າ ຈະຢູ່ໃນສະຖານທີ່ອື່ນ (ຊຶ່ງອາດແມ່ນບ່ອນຮຽນອື່ນຊົ່ວຄາວ), ແລະເພື່ອໃຫ້ກ້າວໜ້າບັນລຸ ເປົ້າໝາຍທີ່ວາງໄວ້ໃນ IEP ຂອງເດັກ.

## ການພິຈາລະນາຕັດສິນດ້ານການສະແດງອອກ

ພາຍໃນ **10 ວັນຮຽນ** ຂອງການຕັດສິນໃຈໃດໆ ທີ່ຈະປ່ຽນບ່ອນຮຽນຂອງເດັກທີ່ພິການເນື່ອງຈາກການ ລະເມີດກົດລະບຽບຂອງນັກຮຽນ (ຍົກເວັ້ນສໍາລັບການຍ້າຍອອກທີ່ມີໄລຍະເວລາ **10 ວັນຮຽນ** ຕິດຕໍ່ກັນ ຫຼື ໜ້ອຍກວ່ານັ້ນ ແລະບໍ່ແມ່ນການປ່ຽນບ່ອນຮຽນ), ເຂດໂຮງຮຽນ, ທ່ານ, ແລະສະມາຊິກທີ່ກ່ຽວຂ້ອງອື່ນໆ ຂອງທີມ IEP (ຕາມທີ່ພິຈາລະນາຕັດສິນໂດຍທ່ານ ແລະເຂດໂຮງຮຽນ) ຕ້ອງກວດກາຄືນຂໍ້ມູນທັງໝົດທີ່ກ່ຽວຂ້ອງໃນແຟ້ມປະຫວັດຂອງເດັກ, ລວມເຖິງ IEP ຂອງເດັກ, ການສັງເກດໃດໆ ຂອງຄູ, ແລະຂໍ້ມູນທີ່ກ່ຽວຂ້ອງໃດໆ ທີ່ຈັດຫາໃຫ້ໂດຍທ່ານ ເພື່ອປະກອບການພິຈາລະນາຕັດສິນວ່າ:

1. ການກະທໍາທີ່ສົງໃສນັ້ນໄດ້ມີສາເຫດ, ຫຼື ມີຄວາມກ່ຽວພັນໂດຍກົງ ແລະຊັດເຈນ ຕໍ່ກັບ, ຄວາມພິການຂອງເດັກ ຫຼືບໍ່; **<u>ຫຼື</u>**

2. ການກະທໍາທີ່ສົງໃສນັ້ນແມ່ນຜົນໂດຍກົງຈາກຄວາມລົ້ມເຫຼວຂອງເຂດໂຮງຮຽນໃນການດໍາເນີນການຕາມ IEP ຂອງເດັກຫຼືບໍ່.

ຖ້າວ່າເຂດການສຶກສາ, ທ່ານ, ແລະສະມາຊິກທີ່ກ່ຽວຂ້ອງຂອງທີມ IEP ຂອງລູກພິຈາລະນາຕັດສິນວ່າ ມັນກົງກັບເງື່ອນໄຂໃດໜຶ່ງເຫຼົ່ານັ້ນ, ການກະທໍານັ້ນຕ້ອງໄດ້ຖືກພິຈາລະນາວ່າເປັນການສະແດງອອກເຖິງຄວາມພິການຂອງເດັກ.

ຖ້າວ່າ ເຂດການສຶກສາ, ທ່ານ, ແລະສະມາຊິກອື່ນທີ່ກ່ຽວຂ້ອງຂອງທີມ IEP ຂອງລູກພິຈາລະນາຕັດສິນວ່າ ການກະທໍາທີ່ສົງໃສນັ້ນແມ່ນຜົນໂດຍກົງມາຈາກຄວາມລົ້ມເຫຼວຂອງເຂດການສຶກສາໃນການດໍາເນີນການຕາມແຜນການສຶກສາ IEP, ເຂດໂຮງຮຽນຕ້ອງດໍາເນີນການທັນທີເພື່ອປັບເທົ່າຍຽວຍາຄວາມບົກຜ່ອງເຫຼົ່ານັ້ນ.

**ການພິຈາລະນາຕັດສິນວ່າ ການປະພຶດໄດ້ສະແດງໃຫ້ເຫັນເຖິງຄວາມພິການຂອງເດັກ.**

ຖ້າວ່າ ເຂດໂຮງຮຽນ, ທ່ານ, ແລະສະມາຊິກອື່ນທີ່ກ່ຽວຂ້ອງຂອງທີມ IEP ພິຈາລະນາຕັດສິນວ່າ ການກະທຳໄດ້ສະແດງໃຫ້ເຫັນເຖິງຄວາມພິການຂອງເດັກ, ທີມ IEP ຕ້ອງເຮັດແນວໃດແນວໜຶ່ງດັ່ງນີ້:

1. ດຳເນີນການປະເມີນຜົນພຶດຕິກຳ, ເວັ້ນແຕ່ວ່າ ເຂດໂຮງຮຽນໄດ້ປະເມີນຜົນການປະພຶດແລ້ວ ກ່ອນທີ່ການປະພຶດນັ້ນໄດ້ສົ່ງຜົນໃຫ້ເກີດການປ່ຽນບ່ອນຮຽນ, ແລະໄດ້ດຳເນີນການຕາມແຜນການແຊກແຊງຊ່ວຍເຫຼືອດ້ານການປະພຶດສຳລັບເດັກ; <u>**ຫຼື**</u>
2. ຖ້າວ່າ ໄດ້ມີການພັດທະນາແຜນການແຊກແຊງຊ່ວຍເຫຼືອດ້ານການປະພຶດຂຶ້ນມາແລ້ວ, ຕ້ອງມີການກວດກາຄືນແຜນການແຊກແຊງຊ່ວຍເຫຼືອດ້ານການປະພຶດນັ້ນ, ແລະດັດປັບຕາມຄວາມຈຳເປັນ, ເພື່ອແກ້ໄຂບັນຫາດ້ານການປະພຶດ.

ຍົກເວັ້ນແຕ່ທີ່ໄດ້ອະທິບາຍໄວ້ຂ້າງລຸ່ມໃນຫົວຂໍ້ຍ່ອຍ ***ສະພາບການພິເສດ***, ເຂດໂຮງຮຽນຕ້ອງຈັດໃຫ້ລູກຂອງທ່ານກັບຄືນໄປຮຽນບ່ອນເກົ່າ, ເວັ້ນແຕ່ວ່າ ທ່ານ ແລະເຂດໂຮງຮຽນຕົກລົງເຫັນດີໃນການປ່ຽນບ່ອນຮຽນໃໝ່ ຊຶ່ງເປັນສ່ວນໜຶ່ງຂອງການດັດປັບແຜນການແຊກແຊງຊ່ວຍເຫຼືອດ້ານການປະພຶດ.

**ສະພາບການພິເສດ**

ບໍ່ວ່າການປະພຶດຈະສະແດງໃຫ້ເຫັນເຖິງຄວາມພິການຂອງລູກຫຼືບໍ່ກໍຕາມ, ຝ່າຍບຸກຄົນຂອງໂຮງຮຽນສາມາດຍົກຍ້າຍນັກຮຽນໄປບ່ອນ ຮຽນອື່ນຊົ່ວຄາວໄດ້ເປັນເວລາດົນເຖິງ 45 ວັນຮຽນ (ຕາມທີ່ພິຈາລະນາຕັດສິນໂດຍທີມ IEP ຂອງເດັກ), ຖ້າວ່າ ລູກຂອງທ່ານ:

1. ຖືອາວຸດ (ເບິ່ງຄວາມໝາຍລຸ່ມນີ້) ໄປໂຮງຮຽນ ຫຼື ມີອາວຸດຢູ່ທີ່ໂຮງຮຽນ, ໃນບໍລິເວນເດີ່ນໂຮງຮຽນ, ຫຼື ທີ່ງານໂຮງຮຽນພາຍໃຕ້ເຂດອຳນາດສານຂອງ SEA ຫຼື ເຂດໂຮງຮຽນ;
2. ມີ ຫຼື ນຳໃຊ້ຢາເສບຕິດຜິດກົດໝາຍທັງໆ ທີ່ຮູ້ (ເບິ່ງຄວາມໝາຍລຸ່ມນີ້) ຫຼື ຂາຍ ຫຼືຊັກຊວນໃຫ້ຂາຍສານຄວບຄຸມ (ເບິ່ງຄວາມໝາຍລຸ່ມນີ້), ໃນຂະນະຢູ່ໃນໂຮງຮຽນ, ໃນບໍລິເວນເດີ່ນໂຮງຮຽນ, ຫຼື ທີ່ງານໂຮງຮຽນ ພາຍໃຕ້ເຂດອຳນາດສານຂອງ SEA ຫຼື ເຂດໂຮງຮຽນ; <u>**ຫຼື**</u>
3. ເຮັດໃຫ້ເກີດການບາດເຈັບທາງຮ່າງກາຍຢ່າງຮຸນແຮງ (ເບິ່ງຄວາມໝາຍລຸ່ມນີ້) ຕໍ່ກັບຄົນອື່ນ ໃນຂະນະຢູ່ໂຮງຮຽນ, ໃນບໍລິເວນເດີ່ນໂຮງຮຽນ, ຫຼື ທີ່ງານໂຮງຮຽນ ພາຍໃຕ້ເຂດອຳນາດສານຂອງ SEA ຫຼື ເຂດໂຮງຮຽນ.

**ຄຳນິຍາມ**

*ສານຄວບຄຸມພິເສດ* ໝາຍເຖິງ ຢາ ຫຼື ສານອື່ນໆ ທີ່ລະບຸໄວ້ພາຍໃຕ້ຕາຕະລາງທີ I, II, III, IV, ຫຼື V ໃນມາດຕາ 202(c) ຂອງກົດໝາຍວ່າດ້ວຍສານຄວບຄຸມ (Controlled Substances Act) (21 U.S.C. 812(c)).

*ຢາຜິດກົດໝາຍ* ໝາຍເຖິງ ສານຄວບຄຸມພິເສດ; ແຕ່ບໍ່ລວມເຖິງ ສານຄວບຄຸມທີ່ຄອບຄອງ ຫຼື ນຳໃຊ້ໄດ້ຢ່າງຖືກກົດໝາຍ ພາຍໃຕ້ການຄວບຄຸມດູແລຂອງຜູ້ຊ່ຽວຊານດ້ານການດູແລສຸຂະພາບທີ່ມີໃບອະນຸຍາດ ຫຼື ຄອບຄອງ ຫຼື ນຳໃຊ້ໄດ້ຢ່າງຖືກກົດໝາຍ ພາຍໃຕ້ການອະນຸຍາດອື່ນພາຍໃຕ້ກົດໝາຍນັ້ນ ຫຼື ພາຍໃຕ້ຂໍ້ກຳນົດອື່ນຂອງກົດໝາຍຣັຖບານກາງ.

*ການບາດເຈັບທາງຮ່າງກາຍຢ່າງຮຸນແຮງ* ມີຄວາມໝາຍດັ່ງທີ່ໃຫ້ໄວ້ສຳລັບຄຳວ່າ ''ການບາດເຈັບທາງຮ່າງກາຍຢ່າງຮຸນແຮງ'' ໃຕ້ຫຍໍ້ໜ້າ
(3) ຂອງຂໍ້ຍ່ອຍ (h) ຂອງມາດຕາ 1365 ບົດທີ 18, ປະມວນກົດໝາຍແຫ່ງສະຫະຣັຖອາເມລິກາ..

*ອາວຸດ* ມີຄວາມໝາຍດັ່ງທີ່ໃຫ້ໄວ້ສຳລັບຄຳວ່າ ''ອາວຸດອັນຕະລາຍ'' ໃຕ້ຫຍໍ້ໜ້າ (2) ຂອງຂໍ້ຍ່ອຍທຳອິດ (g) ຂອງມາດຕາ 930 ຂອງບົດທີ 18, ປະມວນກົດໝາຍແຫ່ງສະຫະຣັຖອາເມລິກາ.

**ການແຈ້ງຂ່າວສານ**

ໃນວັນທີທີ່ມີການຕັດສິນໃຈທີ່ຈະຍ້າຍເດັກອອກ ຊຶ່ງເປັນການປ່ຽນບ່ອນຮຽນຂອງລູກຂອງທ່ານ ເນື່ອງຈາກການລະເມີດກົດລະບຽບຂອງນັກຮຽນ, ເຂດໂຮງຮຽນຕ້ອງແຈ້ງໃຫ້ທ່ານຮູ້ເຖິງການຕັດສິນໃຈນັ້ນ, ແລະຈັດຫາແຈ້ງການກ່ຽວກັບລະບຽບການປົກປ້ອງຄຸ້ມຄອງໃຫ້ແກ່ທ່ານ.

## ການປ່ຽນບ່ອນຮຽນເນື່ອງຈາກການຖອດຖອນທາງວິໄນ

ການຍົກຍ້າຍລູກທີ່ພິການຂອງທ່ານອອກຈາກບ່ອນຮຽນໃນປັດຈຸບັນຂອງເຂົາ ກໍແມ່ນ **ການປ່ຽນບ່ອນຮຽນ** ຖ້າວ່າ:

1. ການຍົກຍ້າຍມີໄລຍະເວລາຫຼາຍກວ່າ 10 ວັນຮຽນຕິດຕໍ່ກັນ; **ຫຼື**
2. ລູກຂອງທ່ານໄດ້ຖືກຍ້າຍອອກເປັນລໍາດັບຕໍ່ເນື່ອງກັນຈົນກາຍເປັນແບບແຜນໜຶ່ງ ເນື່ອງຈາກ:
    a. ລໍາດັບການຍ້າຍມີໄລຍະເວລາຫຼາຍກວ່າ 10 ວັນຮຽນໃນປີການສຶກສາໜຶ່ງ;
    b. ການປະພຶດຂອງເດັກມີລັກສະນະຄ້າຍຄືກັບການປະພຶດໃນຄັ້ງກ່ອນຢ່າງຊັດເຈນ ຊຶ່ງສົ່ງຜົນໃຫ້ເກີດເປັນລໍາດັບການຍ້າຍອອກທີ່ຕໍ່ເນື່ອງກັນ;
    c. ຈາກປັດໃຈເພີ່ມເຕີມດັ່ງກ່າວໃນດ້ານໄລຍະເວລາຂອງການຍົກຍ້າຍອອກແຕ່ລະຄັ້ງ, ຈໍານວນລວມຂອງເວລາທີ່ລູກຂອງທ່ານໄດ້ຖືກຍົກຍ້າຍອອກ, ແລະຄວາມໃກ້ຄຽງກັນຂອງການຍ້າຍ - ແຕ່ລະຄັ້ງ.

ເຂດໂຮງຮຽນຈະເປັນຜູ້ຕັດສິນວ່າ ແບບແຜນການຍ້າຍອອກນັ້ນກໍ່ໃຫ້ເກີດການປ່ຽນບ່ອນຮຽນຫຼືບໍ່, ໂດຍ ພິຈາລະນາຕາມແຕ່ລະກໍລະນີ ແລະ, ຖ້າວ່າ ຖືກຄັດຄ້ານ, ກໍຈະມີການທົບທວນຄືນຜ່ານຂັ້ນຕອນຕາມຫຼັກ ນິຕິທໍາ ແລະການດໍາເນີນຄະດີທາງສານ.

## ການພິຈາລະນາຕັດສິນກ່ຽວກັບບ່ອນຮຽນ

ທີມແຜນການສຶກສາສະເພາະບຸກຄົນ (IEP) ພິຈາລະນາຕັດສິນບ່ອນຮຽນອື່ນຊົ່ວຄາວ ສໍາລັບການຍົກຍ້າຍອອກປະເພດ **ປ່ຽນບ່ອນຮຽນ**, ແລະການຍົກຍ້າຍອອກພາຍໃຕ້ຫົວຂໍ້ຍ່ອຍ ***ອໍານາດເພີ່ມເຕີມ*** ແລະ ***ສະພາບການພິເສດ*** .

## ການອຸທອນ

### ຂໍ້ມູນທົ່ວໄປ

ທ່ານສາມາດຮ້ອງຂໍເອົາການພິຈາລະນາຄະດີຕາມຫຼັກນິຕິທັມໄດ້ (ເບິ່ງຫົວຂໍ້ ***ລະບຽບການຮ້ອງທຸກຕາມຫຼັກນິຕິທັມ*** ) ຖ້າວ່າ ທ່ານບໍ່ເຫັນດີນໍາ:

1. ການຕັດສິນໃຈໃດໆ ກ່ຽວກັບການຈັດບ່ອນຮຽນໃຫ້ເດັກທີ່ໄດ້ເຮັດຂຶ້ນພາຍໃຕ້ຂໍ້ກໍານົດທາງວິໄນເຫຼົ່ານີ້; **ຫຼື**
2. ການພິຈາລະນາຕັດສິນດ້ານການສະແດງອອກທີ່ອະທິບາຍໄວ້ຂ້າງເທິງ.

ເຂດໂຮງຮຽນອາດຮ້ອງຂໍເອົາການຮ້ອງທຸກຕາມຫຼັກນິຕິທັມ (ເບິ່ງຂ້າງເທິງ) ຖ້າທາງເຂດເຊື່ອວ່າ ການໃຫ້ເດັກຍັງຮຽນຢູ່ບ່ອນເກົ່ານັ້ນແມ່ນມີແນວໂນ້ມທີ່ຈະເຮັດໃຫ້ເກີດການບາດເຈັບຕໍ່ເດັກຂອງທ່ານ ຫຼືຕໍ່ຄົນອື່ນໆ.

**ອຳນາດຂອງເຈົ້າໜ້າທີ່ພິຈາລະນາຄະດີ**

ເຈົ້າໜ້າທີ່ພິຈາລະນາຄະດີທີ່ມີຄຸນສົມບັດກົງຕາມຂໍ້ກຳນົດທີ່ອະທິບາຍໄວ້ໃນຫົວຂໍ້ຍ່ອຍ ***ເຈົ້າໜ້າທີ່ພິຈາລະນາຄະດີທີ່ເປັນກາງ*** ຕ້ອງດຳເນີນການພິຈາລະນາຄະດີຕາມຫຼັກນິຕິທັມ ແລະເຮັດການຕັດສິນ. ເຈົ້າໜ້າທີ່ພິຈາລະນາຄະດີອາດ:

1. ສົ່ງລູກທີ່ພິການຫຼືຂາດສະມັຖພາບຂອງທ່ານກັບຄືນໄປບ່ອນເກົ່າກ່ອນໜ້າທີ່ໄດ້ຖືກຍ້າຍອອກ ຖ້າເຈົ້າໜ້າທີ່ພິຈາລະນາຄະດີພິຈາລະນາເຫັນວ່າ ການຍ້າຍອອກນັ້ນເປັນການລະເມີດຂໍ້ກຳນົດດັ່ງທີ່ ອະທິບາຍໄວ້ໃນຫົວຂໍ້ ***ອຳນາດຂອງຝ່າຍບຸກຄົນຂອງໂຮງຮຽນ*** , ຫຼືວ່າ ການປະພຶດຂອງລູກຂອງທ່ານໄດ້ສະແດງອອກເຖິງຄວາມພິການຂອງເດັກ; <u>ຫຼື</u>
2. ສັ່ງໃຫ້ມີການຍ້າຍບ່ອນຮຽນສຳລັບລູກຂອງທ່ານ ໂດຍໃຫ້ຍ້າຍໄປບ່ອນຮຽນອື່ນຊົ່ວຄາວ ເປັນເວລາບໍ່ເກີນ 45 ວັນຮຽນ ຖ້າເຈົ້າໜ້າທີ່ພິຈາລະນາຄະດີ ພິຈາລະນາເຫັນວ່າ ການໃຫ້ລູກຂອງທ່ານຍັງຄົງຮຽນຢູ່ບ່ອນເກົ່ານັ້ນແມ່ນມີແນວໂນ້ມທີ່ຈະເຮັດໃຫ້ເກີດການບາດເຈັບຕໍ່ລູກຂອງທ່ານ ຫຼືຕໍ່ຄົນອື່ນໆ.

ລະບຽບການພິຈາລະນາຄະດີເຫຼົ່ານີ້ອາດໄດ້ຖືກດຳເນີນການຊ້ຳອີກ, ຖ້າເຂດໂຮງຮຽນເຊື່ອວ່າ ການສົ່ງລູກຂອງທ່ານກັບຄືນໄປບ່ອນຮຽນເກົ່າຈະມີແນວໂນ້ມທີ່ຈະເຮັດໃຫ້ເກີດການບາດເຈັບຕໍ່ລູກຂອງທ່ານ ຫຼື ຕໍ່ຄົນອື່ນໆ.

ເມື່ອໃດກໍຕາມທີ່ທ່ານ ຫຼື ເຂດໂຮງຮຽນຍື່ນຄຳຮ້ອງທຸກຕາມຫຼັກນິຕິທັມ ເພື່ອຮ້ອງຂໍເອົາການພິຈາລະນາຄະດີດັ່ງກ່າວ, ການພິຈາລະນາຄະດີຕ້ອງໄດ້ຖືກຈັດຂຶ້ນແລະເປັນໄປຕາມຂໍ້ກຳນົດດັ່ງທີ່ອະທິບາຍໄວ້ໃນຫົວຂໍ້ ***ລະບຽບການຮ້ອງທຸກຕາມຫຼັກນິຕິທັມ*** ແລະ ***ການພິຈາລະນາຄະດີເລື່ອງຮ້ອງທຸກຕາມຫຼັກ ນິຕິທັມ***, ຍົກເວັ້ນຂໍ້ຕໍ່ໄປນີ້:

1. SEA ຫຼື ເຂດໂຮງຮຽນຕ້ອງຈັດການໃຫ້ມີການພິຈາລະນາຄະດີຕາມຫຼັກນິຕິທັມແບບເລັ່ງດ່ວນ, ຊຶ່ງຕ້ອງເກີດຂຶ້ນພາຍໃນ <u>**20**</u> ວັນຮຽນ ນັບແຕ່ວັນທີທີ່ຮ້ອງຂໍເອົາການພິຈາລະນາຄະດີ ແລະຕ້ອງໃຫ້ຄຳຕັດສິນພາຍໃນ <u>**10**</u> ວັນຮຽນ ຫຼັງການພິຈາລະນາຄະດີ.
2. ເວັ້ນແຕ່ວ່າ ທ່ານ ແລະ ເຂດໂຮງຮຽນ ເຫັນດີນຳກັນເປັນລາຍລັກອັກສອນ ໃນການຍົກເລີກການປະຊຸມ, ຫຼື ເຫັນດີໃນການນຳໃຊ້ວິທີການໄກ່ເກັ່ຍ, ການປະຊຸມແກ້ໄຂບັນຫາ ຕ້ອງໄດ້ຈັດຂຶ້ນພາຍໃນ <u>***ເຈັດ***</u> ວັນຕາມປະຕິທິນ ນັບແຕ່ໄດ້ຮັບແຈ້ງການເລື່ອງການຮ້ອງທຸກຕາມຫຼັກນິຕິທັມ. ການພິຈາລະນາຄະດີສາມາດດຳເນີນການຕໍ່ໄປໄດ້ ເວັ້ນແຕ່ວ່າ ເລື່ອງບັນຫາໄດ້ຖືກແກ້ໄຂຈົນພໍໃຈກັນທັງສອງຝ່າຍພາຍໃນ <u>**15**</u> ວັນຕາມປະຕິທິນ ນັບແຕ່ໄດ້ຮັບຄຳຮ້ອງທຸກຕາມຫຼັກນິຕິທັມ.

ທ່ານ ຫຼື ເຂດໂຮງຮຽນ ສາມາດອຸທອນຄຳຕັດສິນໄດ້ໃນການພິຈາລະນາຄະດີຕາມຫຼັກນິຕິທັມແບບເລັ່ງດ່ວນ ໃນຮູບແບບດຽວກັນສຳລັບຄຳຕັດສິນໃນການພິຈາລະນາຄະດີຕາມຫຼັກນິຕິທັມອື່ນໆ (ເບິ່ງຫົວຂໍ້ ***ການອຸທອນ***).

## ການກຳນົດບ່ອນຮຽນໃນລະຫວ່າງການອຸທອນ

ດັ່ງທີ່ອະທິບາຍຂ້າງເທິງ, ເມື່ອທ່ານ ຫຼື ເຂດໂຮງຮຽນ ຍື່ນເລື່ອງຮ້ອງທຸກຕາມຫຼັກນິຕິທັມທີ່ກ່ຽວຂ້ອງກັບເລື່ອງທາງວິໄນ, ລູກຂອງທ່ານຕ້ອງ (ເວັ້ນແຕ່ວ່າ ທ່ານ ແລະ ODE ຫຼື ເຂດໂຮງຮຽນເຫັນດີນຳກັນເປັນແນວອື່ນ) ຍັງຄົງຢູ່ໃນບ່ອນຮຽນອື່ນຊົ່ວຄາວ ຂະນະລໍຖ້າຄຳຕັດສິນຂອງເຈົ້າໜ້າທີ່ພິຈາລະນາຄະດີ, ຫຼື ຈົນກວ່າຈະສິ້ນສຸດໄລຍະການຍ້າຍອອກ ດັ່ງທີ່ກຳນົດໄວ້ ແລະອະທິບາຍໄວ້ ໃນຫົວຂໍ້ ***ອຳນາດຂອງຝ່າຍບຸກຄົນຂອງໂຮງຮຽນ***, ອັນໃດກໍຕາມທີ່ເກີດຂຶ້ນກ່ອນ.

## ການປົກປ້ອງຄຸ້ມຄອງສຳລັບເດັກທີ່ຍັງບໍ່ມີເງື່ອນໄຂໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ

### ຂໍ້ມູນທົ່ວໄປ

ຖ້າວ່າ ລູກຂອງທ່ານຍັງບໍ່ຖືກພິຈາລະນາເງື່ອນໄຂໄດ້ຮັບສຳລັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ແລະລະເມີດກົດລະບຽບຂອງນັກຮຽນ, ແຕ່ເຂດໂຮງຮຽນໄດ້ຮູ້ກ່ອນທີ່ຈະເກີດການປະພຶດທີ່ເຮັດໃຫ້ເກີດ

ການລົງໂທດທາງວິໄນ (ດັ່ງທີ່ພິຈາລະນາຂ້າງລຸ່ມ), ວ່າເດັກແມ່ນເດັກທີ່ພິການ, ດັ່ງນັ້ນ ລູກຂອງທ່ານສາມາດອ້າງສິດການປົກປ້ອງຄຸ້ມຄອງໃດໆ ກໍໄດ້ທີ່ໄດ້ອະທິບາຍໄວ້ໃນແຈ້ງການສະບັບນີ້.

**ຄວາມຮູ້ພື້ນຖານສຳລັບເລື່ອງທາງວິໄນ**

ເຂດໂຮງຮຽນຈະຖືວ່າມີຄວາມຮູ້ວ່າ ລູກຂອງທ່ານແມ່ນເດັກທີ່ພິການ ຖ້າວ່າ, ກ່ອນເກີດການປະພຶດທີ່ເຮັດໃຫ້ເກີດການລົງວິໄນ:

1. ທ່ານໄດ້ສະແດງຄວາມເປັນຫ່ວງຢ່າງເປັນລາຍລັກອັກສອນ ຕໍ່ຜູ້ກຳກັບດູແລ ຫຼື ເຈົ້າໜ້າທີ່ຝ່າຍບຸກຄົນຂອງອົງການທາງການສຶກສາທີ່ເໝາະສົມ, ຫຼື ຕໍ່ນາຍຄູຂອງລູກວ່າ ລູກຂອງທ່ານມີຄວາມຈຳເປັນທີ່ຕ້ອງໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ;
2. ທ່ານໄດ້ຮ້ອງຂໍເອົາການປະເມີນຜົນທີ່ກ່ຽວພັນກັບການມີສິດໄດ້ຮັບສຳລັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ພາຍໃຕ້ ພາກ B ຂອງ IDEA; **<u>ຫຼື</u>**
3. ນາຍຄູຂອງລູກ ຫຼື ເຈົ້າໜ້າທີ່ຝ່າຍບຸກຄົນອື່ນໆ ຂອງເຂດໂຮງຮຽນ ໄດ້ສະແດງຄວາມເປັນຫ່ວງເປັນ ພິເສດກ່ຽວກັບຮູບແບບການປະພຶດທີ່ເດັກໄດ້ສະແດງອອກ ຕໍ່ກັບຜູ້ອຳນວຍການດ້ານການສຶກສາພິເສດໂດຍກົງ ຫຼື ຕໍ່ເຈົ້າໜ້າທີ່ກຳກັບດູແລຂອງເຂດໂຮງຮຽນ.

**ຂໍ້ຍົກເວັ້ນ**

ເຂດໂຮງຮຽນຈະບໍ່ຖືວ່າມີຄວາມຮູ້ດັ່ງກ່າວ ຖ້າວ່າ:

1. ທ່ານບໍ່ໄດ້ອະນຸຍາດໃຫ້ເຮັດການປະເມີນຜົນລູກຂອງທ່ານ ຫຼື ໄດ້ປະຕິເສດການບໍລິການດ້ານການສຶກສາພິເສດ; **<u>ຫຼື</u>**
2. ລູກຂອງທ່ານໄດ້ຖືກປະເມີນຜົນ ແລະຖືກພິຈາລະນາຕັດສິນວ່າບໍ່ແມ່ນເດັກທີ່ພິການ ຫຼື ຂາດສະມັດຖະພາບ ພາຍໃຕ້ພາກ B ຂອງ IDEA.

**ເງື່ອນໄຂຕ່າງໆ ທີ່ນຳໃຊ້ໄດ້ ຖ້າວ່າ ບໍ່ມີຄວາມຮູ້ພື້ນຖານ**

ຖ້າວ່າ ກ່ອນດຳເນີນການທາງວິໄນກັບລູກຂອງທ່ານ, ທາງເຂດໂຮງຮຽນບໍ່ມີຄວາມຮູ້ວ່າ ລູກຂອງທ່ານແມ່ນເດັກທີ່ພິການ, ດັ່ງທີ່ອະທິບາຍໄວ້ຂ້າງເທິງໃນຫົວຂໍ້ຍ່ອຍ ***ຄວາມຮູ້ພື້ນຖານສຳລັບເລື່ອງທາງວິໄນ*** ແລະ ***ຂໍ້ຍົກເວັ້ນ***, ລູກຂອງທ່ານອາດຕົກຢູ່ພາຍໃຕ້ມາດຕະການທາງວິໄນ ຊຶ່ງນຳໃຊ້ກັບເດັກທີ່ບໍ່ພິການ ທີ່ມີບັນຫາດ້ານການປະພຶດໃນລັກສະນະດຽວກັນ.

ຢ່າງໃດກໍຕາມ, ຖ້າວ່າ ໄດ້ມີການຮ້ອງຂໍເອົາການປະເມີນຜົນລູກຂອງທ່ານໃນລະຫວ່າງໄລຍະເວລາທີ່ລູກຂອງທ່ານຕົກຢູ່ພາຍໃຕ້ມາດຕະການທາງວິໄນ, ການປະເມີນຜົນຕ້ອງໄດ້ຖືກເຮັດຂຶ້ນໃນລັກສະນະຮີບດ່ວນ.

ຈົນກວ່າການປະເມີນຜົນຈະສຳເລັດ, ລູກຂອງທ່ານຈະຍັງຄົງຕົກຢູ່ໃນການຈັດວາງທາງການສຶກສາທີ່ກຳນົດໄວ້ໂດຍຜູ້ມີອຳນາດຂອງໂຮງຮຽນ, ຊຶ່ງສາມາດລວມເຖິງ ການພັກຮຽນ ຫຼື ການໄລ່ອອກ ໂດຍປາດສະຈາກການ ບໍລິການທາງການສຶກສາ.

ຖ້າວ່າ ເດັກຖືກພິຈາລະນາວ່າເປັນເດັກທີ່ພິການ ຫຼື ຂາດສະມັດຖະພາບ, ໂດຍພິຈາລະນາຈາກຂໍ້ມູນທີ່ໄດ້ຈາກການປະເມີນຜົນທີ່ເຮັດຂຶ້ນໂດຍເຂດໂຮງຮຽນ, ແລະຂໍ້ມູນທີ່ໄດ້ມາຈາກທ່ານ, ເຂດໂຮງຮຽນຕ້ອງຈັດຫາການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບພາກ B ຂອງ IDEA, ລວມເຖິງ ຂໍ້ກຳນົດການລົງວິໄນທີ່ອະທິບາຍໄວ້ຂ້າງເທິງ.

## **ການສົ່ງຕໍ່ ແລະການດຳເນີນການ ໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະເຈົ້າໜ້າທີ່ຜູ້ມີອຳນາດທາງສານ**

ພາກ B ຂອງ IDEA ບໍ່:

1. ຫ້າມອົງການຈາກການລາຍງານອາຊະຍາກັມທີ່ກະທຳໂດຍເດັກທີ່ພິການ ຕໍ່ໜ່ວຍງານທີ່ມີອຳນາດເໝາະສົມ; **ຫຼື**
2. ກົດກັດເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະເຈົ້າໜ້າທີ່ຜູ້ມີອຳນາດທາງສານ ຈາກການປະຕິບັດວຽກໜ້າທີ່ຮັບຜິດຊອບໃນການນຳໃຊ້ກົດໝາຍຂອງຣັຖ ແລະຣັຖບານກາງ ຕໍ່ອາຊະຍາກັມ ທີ່ກະທຳໂດຍເດັກພິການ.

**ການສົ່ງຜ່ານບັນທຶກ**

ຖ້າວ່າ ເຂດໂຮງຮຽນລາຍງານອາຊະຍາກັມທີ່ກະທຳໂດຍເດັກທີ່ພິການ, ເຂດໂຮງຮຽນ:

1. ຕ້ອງຮັບປະກັນວ່າ ສຳເນົາບັນທຶກທາງວິໃນ ແລະການສຶກສາພິເສດຂອງເດັກ ຈະຖືກສົ່ງໃຫ້ແກ່ຜູ້ມີອຳນາດຂອງອົງການທີ່ໄດ້ຮັບລາຍງານອາຊະຍາກັມ ເພື່ອໃຫ້ພິຈາລະນາ; **ແລະ**
2. ອາດສົ່ງສຳເນົາຂອງບັນທຶກທາງວິໃນ ແລະການສຶກສາພິເສດຂອງເດັກ ສະເພາະໃນຂອບເຂດທີ່ອະນຸຍາດໂດຍກົດໝາຍວ່າດ້ວຍສິດທິດ້ານການສຶກສາຂອງຄອບຄົວ ແລະຄວາມເປັນສ່ວນຕົວ (FERPA).

# ຂໍ້ກຳນົດສຳລັບການກຳນົດບ່ອນຮຽນຝ່າຍດຽວໂດຍພໍ່ແມ່ຂອງເດັກໃນໂຮງຮຽນເອກະຊົນພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ

## ຂໍ້ມູນທົ່ວໄປ

ພາກ B ຂອງ IDEA ບໍ່ຮຽກຮ້ອງໃຫ້ເຂດໂຮງຮຽນຈ່າຍຄ່າໃຊ້ຈ່າຍດ້ານການສຶກສາ, ລວມເຖິງ ການສຶກສາ ພິເສດ ແລະການບໍລິການທີ່ກ່ຽວຂ້ອງ, ສຳລັບລູກທີ່ພິການ ຫຼືຂາດສະມັດຖະພາບຂອງທ່ານ ທີ່ໂຮງຮຽນເອກະຊົນ ຫຼື ສະຖານທີ່ຮຽນຂອງເອກະຊົນ ຖ້າວ່າ ເຂດໂຮງຮຽນໄດ້ມີແຜນການສຶກສາຂອງຣັຖທີ່ເໝາະສົມແລະບໍ່ເສັຽຄ່າໃຊ້ຈ່າຍ (FAPE) ໄວ້ໃຫ້ແກ່ລູກຂອງທ່ານ ແລະທ່ານເລືອກທີ່ຈະໃຫ້ລູກຂອງທ່ານຮຽນໃນໂຮງຮຽນ ຫຼືສະຖານທີ່ຮຽນຂອງເອກະຊົນ. ຢ່າງໃດກໍຕາມ, ເຂດໂຮງຮຽນຊຶ່ງມີໂຮງຮຽນເອກະຊົນຕັ້ງຢູ່ນັ້ນ ຕ້ອງລວມເອົາລູກຂອງທ່ານໄວ້ໃນກຸ່ມປະຊາກອນເດັກນ້ອຍທີ່ຕ້ອງໄດ້ຮັບການຊ່ວຍເຫຼືອຕາມຄວາມຕ້ອງການ ພາຍໃຕ້ຂໍ້ກຳນົດຂອງພາກ B ກ່ຽວກັບເດັກທີ່ພໍ່ແມ່ກຳນົດໃຫ້ຮຽນໃນໂຮງຮຽນເອກະຊົນ ພາຍໃຕ້ 34 CFR §§ 300.131 ຮອດ 300.144.

### ການຊົດໃຊ້ຄືນຄ່າໃຊ້ຈ່າຍສຳລັບການຮຽນໃນໂຮງຮຽນເອກະຊົນ

ຖ້າວ່າ ລູກຂອງທ່ານເຄີຍໄດ້ຮັບການສຶກສາພິເສດ ແລະການບໍລິການທີ່ກ່ຽວຂ້ອງມາກ່ອນ ພາຍໃຕ້ການອະນຸຍາດຂອງເຂດໂຮງຮຽນ, ແລະທ່ານເລືອກທີ່ຈະລົງທະບຽນລູກຂອງທ່ານເຂົ້າໃນໂຮງຮຽນເອກະຊົນລະດັບອະນຸບານ, ປະຖົມ, ຫຼື ມັດທະຍົມ ໂດຍບໍ່ໄດ້ຮັບຄຳຍິນຍອມ ຫຼື ການສົ່ງຕໍ່ຈາກເຂດໂຮງຮຽນ, ສານ ຫຼື ເຈົ້າໜ້າທີ່ພິຈາລະນາຄະດີອາດຮຽກຮ້ອງໃຫ້ອົງການຊົດໃຊ້ຄືນຄ່າລົງທະບຽນຮຽນໃຫ້ທ່ານ ຖ້າວ່າ ສານ ຫຼື ເຈົ້າໜ້າທີ່ພິຈາລະນາຄະດີ ພົບວ່າ ອົງການນັ້ນບໍ່ໄດ້ຈັດຫາການສຶກສາພິເສດທີ່ເໝາະສົມແລະບໍ່ເສັຽຄ່າ (FAPE) ໃຫ້ແກ່ລູກຂອງທ່ານທັນ ເວລາກ່ອນໜ້າທີ່ຈະລົງທະບຽນນັ້ນ ແລະການຈັດໃຫ້ຮຽນໃນໂຮງຮຽນເອກະຊົນກໍມີຄວາມເໝາະສົມ. ເຈົ້າໜ້າທີ່ພິຈາລະນາຄະດີ ຫຼື ສານອາດພົບວ່າ ການຈັດບ່ອນຮຽນໃຫ້ລູກຂອງທ່ານນັ້ນເໝາະສົມແລ້ວ, ເຖິງແມ່ນວ່າ ບ່ອນຮຽນນັ້ນບໍ່ກົງຕາມມາດຕະຖານຂອງຣັຖທີ່ນຳໃຊ້ກັບການສຶກສາທີ່ກຳນົດໄວ້ໂດຍ SEA ແລະເຂດໂຮງຮຽນ.

### ການຈຳກັດຈຳນວນເງິນຊົດໃຊ້ຄືນ

ການຊົດໃຊ້ຄືນຄ່າໃຊ້ຈ່າຍທີ່ອະທິບາຍໄວ້ໃນຫຍໍ້ໜ້າຂ້າງເທິງນີ້ອາດຫຼຸດລົງ ຫຼື ຖືກປະຕິເສດກໍໄດ້:

1. ຖ້າວ່າ: (a) ໃນບ່ອນປະຊຸມແຜນການສຶກສາສະເພາະບຸກຄົນ (IEP) ຄັ້ງລ່າສຸດ ທີ່ທ່ານໄດ້ເຂົ້າຮ່ວມ ປະຊຸມ ກ່ອນໜ້າການຍົກຍ້າຍລູກຂອງທ່ານອອກຈາກໂຮງຮຽນພາກຣັຖ, ທ່ານບໍ່ໄດ້ແຈ້ງໃຫ້ທີມ IEP ຮູ້ວ່າ ທ່ານໄດ້ປະຕິເສດຂໍ້ສະເໜີຂອງເຂດໂຮງຮຽນທີ່ຈະຈັດຫາ FAPE ໃຫ້ແກ່ລູກຂອງທ່ານ, ລວມເຖິງບໍ່ໄດ້ບອກເຖິງຄວາມເປັນຫ່ວງຂອງທ່ານ ແລະເຈດຕະນາຂອງທ່ານ ທີ່ຈະລົງທະບຽນລູກຂອງທ່ານເຂົ້າຮຽນໃນໂຮງຮຽນເອກະຊົນພາຍໃຕ້ຄ່າໃຊ້ຈ່າຍສາທາລະນະ; ຫຼື (b) ຢ່າງໜ້ອຍ 10 ວັນເຮັດວຽກ (ລວມເຖິງ ວັນພັກໃດໆ ທີ່ເກີດຂຶ້ນໃນວັນເຮັດວຽກ) ກ່ອນໜ້າການຍົກຍ້າຍລູກຂອງທ່ານອອກຈາກໂຮງຮຽນພາກຣັຖ, ທ່ານບໍ່ໄດ້ໃຫ້ໜັງສືແຈ້ງການແກ່ເຂດໂຮງຮຽນກ່ຽວກັບຂໍ້ມູນນັ້ນ;

2. ຖ້າວ່າ, ກ່ອນໜ້າການຍົກຍ້າຍລູກຂອງທ່ານອອກຈາກໂຮງຮຽນພາກຣັຖ, ເຂດໂຮງຮຽນໄດ້ໃຫ້ໜັງສືແຈ້ງການແກ່ທ່ານທີ່ບອກເຖິງເຈດຕະນາທີ່ຈະປະເມີນຜົນລູກຂອງທ່ານ (ລວມເຖິງ ຄຳກ່າວເຖິງຈຸດປະສົງຂອງການປະເມີນຜົນທີ່ເໝາະສົມແລະສົມເຫດສົມຜົນ), ແຕ່ທ່ານບໍ່ໄດ້ໃຫ້ລູກຂອງທ່ານໄປຮັບການປະເມີນຜົນ; **ຫຼື**

3. ເມື່ອສານພົບວ່າ ການປະຕິບັດຂອງທ່ານບໍ່ສົມເຫດຜົນ. ຢ່າງໃດກໍຕາມ, ຈຳນວນເງິນຂອງການຈ່າຍຄືນ:

1. ຕ້ອງບໍ່ຖືກຫຼຸດລົງ ຫຼື ຖືກປະຕິເສດ ສໍາລັບຄວາມບົກຜ່ອງໃນການໃຫ້ແຈ້ງການ ຖ້າວ່າ: (a) ໂຮງຮຽນກີດກັນທ່ານຈາກການໃຫ້ແຈ້ງການ; (b) ທ່ານບໍ່ໄດ້ຮັບແຈ້ງການທີ່ບອກເຖິງຄວາມຮັບຜິດຊອບຂອງທ່ານໃນການໃຫ້ແຈ້ງການ ດັ່ງທີ່ອະທິບາຍໄວ້ຂ້າງເທິງ; ຫຼື (c) ການປະຕິບັດຕາມຂໍ້ກໍານົດຂ້າງເທິງນີ້ ມີແນວໂນ້ມທີ່ຈະເຮັດໃຫ້ເກີດການບາດເຈັບທາງຮ່າງກາຍຕໍ່ລູກຂອງທ່ານ; **<u>ແລະ</u>**
2. ພາຍໃຕ້ດຸນພິນິດຂອງສານ ຫຼື ເຈົ້າໜ້າທີ່ພິຈາລະນາຄະດີ, ບໍ່ສາມາດຖືກຫຼຸດ ຫຼື ປະຕິເສດ ສໍາລັບຄວາມບົກຜ່ອງຂອງທ່ານໃນການໃຫ້ແຈ້ງການທີ່ກໍານົດໄວ້ ຖ້າວ່າ: (a) ທ່ານບໍ່ຮູ້ໜັງສື ຫຼື ຂຽນ ພາສາອັງກິດບໍ່ໄດ້; ຫຼື (b) ການປະຕິບັດຕາມຂໍ້ກໍານົດຂ້າງເທິງນີ້ມີແນວໂນ້ມທີ່ຈະສົ່ງຜົນກະທົບເປັນອັນຕະລາຍທາງອາລົມຮຸນແຮງຕໍ່ລູກຂອງທ່ານ.